ບໍລິສັດ ພົງສະຫວັນ ປະກັນໄພ (ເອພີເອ) ຈໍາກັດ
PHONGSAVANH INSURANCE (APA) CO., LTD

# ເງື່ອນໄຂທົ່ວໄປ
# ການປະກັນໄພລົດທີ່ແລ່ນດ້ວຍໄຟຟ້າ

ວັນທີ: 12 ເມສາ 2023



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

## ສາລະບານ

**ພາກທີ 1: ຂໍ້ກຳນົດກ່ຽວກັບການຄຸ້ມກັນ** ..... 3
ມາດຕາ 1. ຂໍ້ຕົກລົງຂອງສັນຍາ ..... 3
ມາດຕາ 2. ອານາເຂດຂອງການຄຸ້ມກັນ ..... 3
ມາດຕາ 3. ນິຍາມກ່ຽວກັບຕົວບຸກຄົນທີ່ໄດ້ຮັບການປະກັນໄພ ..... 3
ມາດຕາ 4. ນິຍາມກ່ຽວກັບຍານພາຫະນະ ..... 5
ມາດຕາ 5. ເຄື່ອງອາໄຫຼ່ເປັນຄູ່ ແລະ ເປັນຊຸດ ..... 5
**ພາກທີ 2. ຄຳອະທິບາຍກ່ຽວກັບການຄຸ້ມກັນ** ..... 6
ມາດຕາ 6. ການຄຸ້ມກັນຂໍ້ ກ: ຄວາມຮັບຜິດຊອບທາງແພ່ງໃນການສັນຈອນ ..... 6
ມາດຕາ 7. ການຄຸ້ມກັນຂໍ້ ຂ: ຄວາມຮັບຜິດຊອບທາງແພ່ງນອກການສັນຈອນ ..... 9
ມາດຕາ 8. ການຄຸ້ມກັນຂໍ້ ຄ: ການເສຍຫາຍເນື່ອງຈາກອຸປະຕິເຫດທຸກຢ່າງ ..... 10
ມາດຕາ 9. ການຄຸ້ມກັນຂໍ້ ງ: ການເສຍຫາຍເກີດຈາກການຕຳກັນ ..... 12
ມາດຕາ 10. ການຄຸ້ມກັນຂໍ້ ຈ: ແວ່ນລົດແຕກ ..... 13
ມາດຕາ 11. ການຄຸ້ມກັນຂໍ້ ສ: ໄຟໄໝ້ ..... 13
ມາດຕາ 12. ການຄຸ້ມກັນ ຂໍ້ ຊ : ການລັກ ..... 13
ມາດຕາ 13. ການຄຸ້ມກັນ ຂໍ້ ຍ : ການປົກປ້ອງສິດ ແລະ ການທວງຄ່າເສຍຫາຍຄືນ ..... 14
ມາດຕາ 14. ການຄຸ້ມກັນ ຂໍ້ ດ : ຜູ້ຂັບຂີ່ - ຜູ້ໂດຍສານ ..... 14
**ພາກ 3 : ຄວາມຮັບຜິດຊອບຂອງຜູ້ຊື້ປະກັນໄພ ແລະ ຜູ້ປະກັນໄພ** ..... 15
ມາດຕາ 15. ຂໍ້ມູນທີ່ຜູ້ຊື້ປະກັນໄພຄວນແຈ້ງໃນເວລາເຊັນສັນຍາປະກັນໄພ, ໃນເວລາປະຕິບັດສັນຍາ ແລະ ມາດຕະການຕໍ່ຜູ້ກະທຳຜິດ ..... 15
ມາດຕາ 16. ການຈ່າຍຄ່າປະກັນໄພ ໂດຍຜູ້ຊື້ປະກັນໄພ, ຜົນສະທ້ອນຈາກການຊັກຊ້າໃນການຈ່າຍຄ່າປະກັນໄພ ແລະ ການເສຍພາສີອາກອນ ..... 16
ມາດຕາ 17. ການດັດແກ້ປ່ຽນແປງຄ່າປະກັນໄພ ..... 17
ມາດຕາ 18. ການແຈ້ງຄວາມເສຍຫາຍທີ່ເກີດຂຶ້ນຈາກອຸປະຕິເຫດໂດຍຜູ້ຊື້ປະກັນໄພ ..... 17
ມາດຕາ 19. ການແກ້ໄຂການເສຍຫາຍທີ່ເກີດຂຶ້ນ ..... 18
ມາດຕາ 20. ກຳນົດເວລາການຈ່າຍສິນປະກັນໄພ ..... 20
ມາດຕາ 21. ການແທນສິດ - ການຮຽກຮ້ອງຄ່າເສຍຫາຍພາຍຫຼັງການເສຍຫາຍເກີດຂຶ້ນ ..... 20
**ພາກທີ 4 : ລະບຽບກ່ຽວກັບສັນຍາປະກັນໄພ** ..... 21
ມາດຕາ 22. ການເຮັດສັນຍາ ແລະ ຜົນບັງຄັບຂອງສັນຍາ ..... 21
ມາດຕາ 23. ອາຍຸຂອງສັນຍາປະກັນໄພ ..... 21
ມາດຕາ 24. ການຍົກເລີກສັນຍາປະກັນໄພ ..... 21
ມາດຕາ 25. ການໂອນກຳມະສິດຍານພາຫະນະ ..... 22
ມາດຕາ 26. ອາຍຸຄວາມໃນການຮ້ອງຟ້ອງ ..... 23
ມາດຕາ 27. ສານທີ່ມີອຳນາດພິຈາລະນາຄະດີ ..... 23
**ພາກທີ 5 : ເອກະສານຊ້ອນທ້າຍ** ..... 23
ມາດຕາ 28. ຄຳນິຍາມ ..... 24
ມາດຕາ 29. ຂໍ້ກຳນົດການໃຫ້ສ່ວນຫລຸດໃນກໍລະນີບໍ່ມີການຈ່າຍສິນປະກັນໄພ ..... 24
ມາດຕາ 30. ການໂອນສິດ ການໄດ້ຮັບສ່ວນຫລຸດໃນກໍລະນີບໍ່ມີການຈ່າຍສິນປະກັນໄພ ..... 25


ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

# ເງື່ອນໄຂທົ່ວໄປ

## ການປະກັນໄພລົດທີ່ແລ່ນດ້ວຍໄຟຟ້າ

ສັນຍາປະກັນໄພສະບັບນີ້ໄດ້ສ້າງຂຶ້ນ ໂດຍອີງຕາມກົດໝາຍວ່າດ້ວຍການປະກັນໄພເລກທີ່ 78/ສພຊ ລົງວັນທີ່ 29 ພະຈິກ 2019 ຊຶ່ງຕໍ່ໄປຈະເອີ້ນວ່າ "ກົດໝາຍ"

## ພາກທີ 1: ຂໍ້ກຳນົດກ່ຽວກັບການຄຸ້ມກັນ

**ຂໍ້ຕົກລົງຂອງສັນຍາ, ອານາເຂດຂອງການຄຸ້ມກັນ ແລະ ຄໍານິຍາມທີ່ກ່ຽວກັບບຸກຄົນ ແລະ ຍານພາຫະນະທີ່ໄດ້ຮັບການປະກັນໄພ**

**ມາດຕາ 1. ຂໍ້ຕົກລົງຂອງສັນຍາ**

1.1 ອີງຕາມຜູ້ໄດ້ຮັບການປະກັນໄພທີ່ໄດ້ສະໝັກໃຈສະເໜີເຮັດປະກັນໄພນໍາບໍລິສັດ ພົງສະຫວັນ ປະກັນໄພ (ຕໍ່ໄປເອີ້ນວ່າ: ຜູ້ປະກັນໄພ) ພ້ອມດ້ວຍ ການແຈ້ງຂໍ້ມູນ ອັນທີ່ເປັນພື້ນຖານ ຂອງຂໍ້ຕົກລົງຂອງສັນຍາສະບັບນີ້, ພ້ອມທັງໄດ້ຈ່າຍຄ່າປະກັນໄພດັ່ງທີ່ລະບຸໄວ້ໃນເງື່ອນໄຂສະເພາະ, ຜູ້ປະກັນໄພຈະຄຸ້ມກັນການສູນເສຍ, ການເສຍຫາຍ ຫຼື ຄວາມຮັບຜິດຊອບທາງແພ່ງທີ່ໄດ້ລະບຸຢູ່ໃນເງື່ອນໄຂສະເພາະ ໂດຍຕ້ອງສອດຄ່ອງກັບຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍານີ້.

**ການກໍ່ຄວາມເສຍຫາຍໃຫ້ແກ່ຜູ້ອື່ນ**

| | |
|---|---|
| ກ. ຄວາມຮັບຜິດຊອບທາງແພ່ງໃນການສັນຈອນ | ມາດຕາ 6.1 – 6.29 |
| ຂ. ຄວາມຮັບຜິດຊອບທາງແພ່ງນອກການສັນຈອນ | ມາດຕາ 7.1 – 7.4 |

**ຄວາມເສຍຫາຍຂອງຍານພາຫະນະທີ່ໄດ້ຮັບການປະກັນໄພ**

| | |
|---|---|
| ຄ. ຄວາມເສຍຫາຍຈາກອຸປະຕິເຫດທຸກຢ່າງ | ມາດຕາ 8.1 – 8.24 |
| ງ. ຄວາມເສຍຫາຍຈາກການຕໍາ | ມາດຕາ 9.1 – 9.4 |
| ຈ. ແວ່ນລົດແຕກ | ມາດຕາ 10.1 – 10.3 |
| ສ. ໄຟໄໝ້ | ມາດຕາ 11.1 – 11.5 |
| ຊ. ການລັກ | ມາດຕາ 12.1 – 12.6 |
| ຍ. ການປົກປ້ອງສິດ ແລະ ຮຽກຮ້ອງຄ່າເສຍຫາຍ | ມາກຕາ 13.1 – 13.3 |
| ດ. ຜູ້ຂັບຂີ່ ແລະ ຜູ້ໂດຍສານ | ມາດຕາ 14.1 – 14.6 |

1.2 ການຄຸ້ມກັນພາຍໃຕ້ສັນຍານີ້ ອາດຂະຫຍາຍການຄຸ້ມກັນຕໍ່ຄວາມສ່ຽງອື່ນໆ ເຊິ່ງສາມາດເຮັດໄດ້ໂດຍມີເອກະສານແນບທ້າຍໂດຍສະເພາະ ເຊິ່ງກຳນົດເງື່ອນໄຂການຄຸ້ມກັນຢ່າງຊັດເຈນ.

**ມາດຕາ 2. ອານາເຂດຂອງການຄຸ້ມກັນ**

ສັນຍາສະບັບນີ້ໃຫ້ການຄຸ້ມກັນກັບການສູນເສຍ ຫຼື ການເສຍຫາຍທີ່ເກີດຂຶ້ນຢູ່ໃນດິນແດນ ສປປ ລາວ ການຂະຫຍາຍການຄຸ້ມກັນໄປຍັງປະເທດເພື່ອນບ້ານສາມາດເຮັດໄດ້ໂດຍເສຍຄ່າປະກັນໄພ ເພີ່ມຕາມທີ່ໄດ້ກຳນົດໄວ້ໃນເງື່ອນໄຂສະເພາະ, ໂດຍພາຍໃຕ້ຂໍ້ກຳນົດ ແລະ ເງື່ອນໄຂຂອງສັນຍາ.

**ມາດຕາ 3. ນິຍາມກ່ຽວກັບຕົວບຸກຄົນທີ່ໄດ້ຮັບການປະກັນໄພ**

**ຜູ້ຊື້ປະກັນໄພ**

3.1 "ຜູ້ຊື້ປະກັນໄພ" ແມ່ນບຸກຄົນຊຶ່ງມີຊື່ລະບຸໄວ້ໃນເງື່ອນໄຂສະເພາະ ຫຼື ບຸກຄົນອື່ນໆທີ່ເປັນຕົວແທນທີ່ຖືກຕ້ອງຕາມກົດຫມາຍຂອງຜູ້ຊື້ປະກັນໄພທີ່ໄດ້ເສຍຊີວິດໄປໂດຍທີ່ໄດ້ມີການຕົກລົງເຫັນດີຈາກທັງສອງຝ່າຍ

**ຜູ້ໄດ້ຮັບການປະກັນໄພ**

3.2 ຄໍາສັບ "ຜູ້ໄດ້ຮັບການປະກັນໄພ" ມີຄວາມໝາຍນັບລວມທັງ:

- ແມ່ນຜູ້ສະໝັກໃຈຂັບລົດທີ່ມີປະກັນໄພ;
- ຜູ້ຊື້ປະກັນໄພ (ຜູ້ຕາງໜ້າທີ່ຖືກຕ້ອງຕາມກົດໝາຍຂອງເຂົາເຈົ້າ);
- ເຈົ້າຂອງລົດທີ່ໄດ້ຮັບການປະກັນໄພ;
- ບຸກຄົນຜູ້ທີ່ຂີ່ລົດໄປນຳໂດຍບໍ່ໄດ້ເສຍຄ່າຈ້າງ (ນັບທັງພະນັກງານ ຫຼື ກຳມະກອນຂອງຜູ້ຊື້ປະກັນໄພ ຫຼື ເຈົ້າຂອງລົດ) ນັບແຕ່ເວລາເຂົາເຈົ້າຂຶ້ນ ຈົນເຖິງເວລາລົງຈາກລົດຄັນດັ່ງກ່າວ, ລວມທັງການປະກອບສ່ວນຂອງເຂົາເຈົ້າ ໃນການຂັບລົດ, ຫຼື ສ້ອມແປງໃນໄລຍະການເດີນທາງ ເຖິງແມ່ນວ່າເຂົາເຈົ້າບໍ່ໄດ້ຂີ່ລົດຄັນທີ່ໄດ້ລະບຸໄວ້ກໍຕາມ; ແລະ
- ບຸກຄົນທີ່ໄດ້ຮັບອະນຸຍາດໃຫ້ຂັບຂີ່ ກໍ່ເປັນຜູ້ໄດ້ຮັບການປະກັນໄພໃນເວລາທີ່ເຂົາເຈົ້າຂີ່ລົດທ່ອງທ່ຽວຄັນອື່ນເປັນບາງຄັ້ງ ຊຶ່ງບໍ່ແມ່ນລົດຂອງເຂົາເຈົ້າເອງ, ແມ່ນເຂົາຈະເປັນຜູ້ຂັບຂີ່ ຫຼື ບໍ່ກໍ່ຕາມ.

**ເງື່ອນໄຂກ່ຽວກັບໃບອະນຸຍາດຂັບລົດ ແລະ ອາຍຸຜູ້ຂັບຂີ່ລົດ**

3.3 ສຳລັບພາຫະນະທີ່ແລ່ນດ້ວຍໄຟຟ້າ, ຜູ້ຂັບຂີ່ຕ້ອງມີອາຍຸບໍ່ຕໍ່າກວ່າ 25ປີ(ສຳລັບລົດໃຫ່ຍ) ເວັ້ນແຕ່ວ່າໄດ້ລະບຸໄວ້ເປັນຢ່າງອື່ນໃນເງື່ອນໄຂສະເພາະຂອງສັນຍາປະກັນໄພ

3.4 ບຸກຄົນທີ່ກ່າວມາຂ້າງເທິງນີ້ຈະມີຖານະເປັນຜູ້ໄດ້ຮັບການປະກັນໄພໄດ້ ກໍຕໍ່ເມື່ອວ່າ ຜູ້ຂັບຂີ່ ຫາກມີເງື່ອນໄຂຄົບຖ້ວນຕາມລະບຽບການ ແລະ ກົດລະບຽບໃນ ສປປ ລາວ ໃນເວລາເກີດອຸປະຕິເຫດ, ຜູ້ໄດ້ຮັບການປະກັນໄພຂອງລົດດັ່ງກ່າວ ຕ້ອງມີໃບອະນຸຍາດຂັບລົດທີ່ມີຜົນບັງຄັບໃຊ້ (ບໍ່ຖືກໂຈະ, ບໍ່ໝົດກຳນົດ) ເຊິ່ງໃນຂະນະທີ່ອຸປະຕິເຫດເກີດຂຶ້ນ, ໃບຂັບຂີ່ຕ້ອງສາມາດນຳໃຊ້ໄດ້ ແລະ ອາຍຸຜູ້ຂັບຂີ່ແມ່ນຕ້ອງຖືກຕາມ ອາຍຸກະສຽນການຂັບຂີ່ຕາມກົດໝາຍລະບຸໄວ້.

3.5 ຖ້າວ່າຜູ້ຂັບຂີ່ ຫາກບໍ່ມີເງື່ອນໄຂຄົບຖ້ວນ ດັ່ງທີ່ກ່າວໄວ້ໃນຂ້າງເທິງນີ້, ຜູ້ກ່ຽວຈະບໍ່ໄດ້ຮັບການຄຸ້ມກັນ. ເຖິງວ່າຈະໄດ້ຜ່ານໂຮງຮຽນຂັບລົດແລ້ວ ຫຼື ຖືກຊ່ວຍເຫຼືອຈາກບຸກຄົນທີ່ມີໃບຂັບຂີ່ຢ່າງຖືກຕ້ອງກໍຕາມ.

3.6 ຂໍ້ຍົກເວັ້ນນີ້ ແມ່ນບໍ່ສາມາດນຳໃຊ້ ສຳລັບຜູ້ຂັບຂີ່ ທີ່ມີໃບອະນຸຍາດຂັບຂີ່ ຊຶ່ງໄດ້ແຈ້ງຕໍ່ຜູ້ປະກັນໄພໃນເວລາເຊັນເອົາປະກັນໄພ ຫຼື ໃນເວລາຕໍ່ສັນຍາວ່າ ໃບຂັບຂີ່ຂອງຕົນໄດ້ໝົດຜົນບັງຄັບໃຊ້ ຍ້ອນວ່າຢູ່ຫ່າງໄກຈາກປະເທດຂອງຕົນ (ໝາຍເຖິງຄົນຕ່າງປະເທດ).

**ອຸປະຕິເຫດ**

3.7 ຄຳສັບ "ອຸປະຕິເຫດ" ໝາຍເຖິງ ເຫດການເກີດຂຶ້ນກະທັນຫັນ ແລະ ຢ່າງບັງເອີນ, ໂດຍບໍ່ເຈດຕະນາ, ບໍ່ຂຶ້ນກັບຜູ້ໄດ້ຮັບການປະກັນໄພ ແລະ ລົດທີ່ໄດ້ຮັບການປະກັນໄພມີສ່ວນພົວພັນຢູ່ນຳ.

**ບຸກຄົນທີ່ຖືວ່າໄດ້ຮັບການຄຸ້ມກັນ**

3.8 ຜູ້ທີ່ມີຖານະເປັນ "ຜູ້ໄດ້ຮັບການປະກັນໄພ" ນອກຈາກເງື່ອນໄຂກ່ຽວກັບໃບອະນຸຍາດ ຂັບຂີ່ ແລະ ອາຍຸກະສຽນຂອງຜູ້ຂັບຂີ່ແລ້ວ (3.3 ແລະ 3.4), ຜູ້ທີ່ມີຖານະເປັນ "ຜູ້ໄດ້ຮັບການປະກັນໄພ" ແມ່ນບຸກຄົນດັ່ງຕໍ່ໄປນີ້:

**ກ) ສຳລັບການຄຸ້ມກັນຂໍ້ ກ ເຖິງຂໍ້ ຂ:**

ແມ່ນຜູ້ຊື້ປະກັນໄພ, ເຈົ້າຂອງລົດທີ່ໄດ້ຮັບການປະກັນໄພ ແລະ ບຸກຄົນອື່ນໆ ທີ່ຮັກສາ ຫຼື ຂັບລົດນັ້ນໂດຍໄດ້ຮັບອະນຸຍາດຈາກຜູ້ຊື້ປະກັນໄພ ຫຼື ເຈົ້າຂອງລົດ (ສ່ວນບຸກຄົນທີ່ບໍ່ໄດ້ຮັບອະນຸຍາດແມ່ນບຸກຄົນທີ່ເຮັດວຽກຢູ່ອູ່ສ້ອມແປງ, ບຸກຄົນທີ່ມີອາຊີບເປັນນາຍໜ້າຊື້ຂາຍ, ສ້ອມແປງ, ການແກ້ໄຂການຕິດຂັດ ຫຼື ກວດກາ ສະພາບຍານພາຫະນະພ້ອມທັງລູກຈ້າງຂອງເຂົາເຈົ້າ ເຖິງແມ່ນວ່າບັນດາບຸກຄົນເຫຼົ່ານີ້ ຈະໄດ້ຮັບມອບໝາຍໃຫ້ຂັບຂີ່ ຫຼື ບົວລະບັດຮັກສາຍານພາຫະນະນັ້ນ ຕາມໜ້າທີ່ຂອງເຂົາເຈົ້າກໍ່ຕາມ).

**ຂ) ການຄຸ້ມກັນຂໍ້ ກ:**

ບັນດາຜູ້ໂດຍສານໄປນຳຍານພາຫະນະ ທີ່ໄດ້ຮັບການປະກັນໄພຊຶ່ງກໍຖືວ່າ ແມ່ນມີຖານະເປັນຜູ້ໄດ້ຮັບການປະກັນໄພ (ຍົກເວັ້ນສຳລັບແຕ່ຜູ້ໂດຍສານທີ່ບໍ່ໄດ້ເສຍຄ່າ - ດັ່ງຂໍ້ (ງ) ລຸ່ມນີ້.

**ຄ) ການຄຸ້ມກັນຂໍ້ ຍ:**

ແມ່ນບັນດາບຸກຄົນທີ່ໄດ້ກ່າວໄວ້ໃນການຄຸ້ມກັນຂໍ້ ກ ຫາຂໍ້ ຂ, ຈະໄດ້ຮັບການຄຸ້ມກັນໃນການຕໍ່ສູ້ຄະດີອາຍາ. ສະເພາະກ່ຽວກັບການຮຽກຮ້ອງຄ່າເສຍຫາຍ, ນອກຈາກບັນດາບຸກຄົນທີ່ກ່າວມາຂ້າງເທິງນີ້ແລ້ວຍັງນັບທັງບັນດາບຸກຄົນທີ່ໂດຍສານໄປນຳລົດທີ່ມີປະກັນໄພໂດຍບໍ່ໄດ້ເສຍຄ່າ.

**ງ) ການຄຸ້ມກັນຂໍ້ ດ:**



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໄຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

ບຸກຄົນທີ່ໂດຍສານໂດຍບໍ່ໄດ້ເສຍຄ່າ ແມ່ນໝາຍເຖິງຜູ້ໂດຍສານທຸກຄົນທີ່ຂຶ້ນຂີ່ລົດ ໂດຍບໍ່ໄດ້ເສຍຄ່າຈ້າງລົດ, ເຖິງແມ່ນວ່າ ເຂົາເຈົ້າສະໝັກໃຈປະກອບສ່ວນສົມທົບຄ່າໃຊ້ຈ່າຍສິ້ນເປືອງໃນການເດີນທາງໄປນຳກໍຕາມ.

**ມາດຕາ 4 . ນິຍາມກ່ຽວກັບຍານພາຫະນະ**

**ຍານພາຫະນະທີ່ມີການປະກັນໄພ**

4.1 ຄຳວ່າ "ຍານພາຫະນະ ທີ່ມີປະກັນໄພ" ໝາຍເຖິງພາຫະນະທີ່ແລ່ນດ້ວຍໄຟຟ້າທີ່ຂຶ້ນທະບຽນຖືກຕ້ອງຕາມກົດໝາຍ:

- ຍານພາຫະນະທີ່ແລ່ນດ້ວຍໄຟຟ້າ ໃຫ້ການຄຸ້ມຄອງ
    - ຍານພາຫະນະທີ່ແລ່ນດ້ວຍໄຟຟ້າທຸກຊະນິດ ແລະ Plug-in Hybrid Electric Vehicle (PHEV). ພາຫະນະເຫຼົ່ານີ້ຕ້ອງໄດ້ປະຕິບັດຕາມເງື່ອນໄຂ ແລະ ຂໍ້ກຳນົດຂອງຂອງຜູ້ຜະລິດ ແລະ ຕາມລັກສະນະສະເພາະຂອງຜະລິດຕະພັນເທົ່ານັ້ນ
    - ໝໍ້ໄຟໄຟຟ້າ ແມ່ນ ໝໍ້ໄຟ ທີ່ໃຊ້ເພື່ອສະໜອງພະລັງງານໃຫ້ແກ່ມໍເຕີໄຟຟ້າ ຂອງ ລົດໄຟຟ້າ
    - ສາຍສາກໄຟ ແມ່ນສາຍເຄເບີນທີ່ເປັນຂອງແທ້ຈາກຜູ້ຜະລິດ ແລະ ລະບຸໄວ້ສະເພາະສຳລັບຍານພາຫະນະໂດຍຜູ້ຜະລິດທີ່ຕ້ອງເຊື່ອມຕໍ່ກັບຈຸດສາກໄຟ ຫລື ເຕົ້າສາກເພື່ອສາກໝໍ້ໄຟໄຟຟ້າ ຂອງລົດ
- ຍານພາຫະນະທາງບົກ ທີ່ແລ່ນດ້ວຍໄຟຟ້າ ຫຼື
- ຍານພາຫະນະ (ລົດພ່ວງ ແລະ ເຄິ່ງລົດພ່ວງ) ທີ່ສ້າງຂຶ້ນມາເພື່ອເກາະຕິດກັບ ຍານພາຫະນະທາງບົກທີ່ແລ່ນດ້ວຍໄຟຟ້າຊຶ່ງແນໃສ່ຮັບໃຊ້ການຂົນສົ່ງຄົນ ຫຼື ເຄື່ອງຂອງທີ່ໄດ້ຖືກລະບຸໄວ້ໃນເງື່ອນໄຂສະເພາະນັ້ນ ລວມທັງມີອາໄຫຼ່ ແລະ ອຸປະກອນຂອງລົດເຊິ່ງເປັນມາດຕະຖານຈາກໂຮງງານຜູ້ຜະລິດ. ຜູ້ຊື້ປະກັນໄພ ຕ້ອງໄດ້ແຈ້ງໃຫ້ຜູ້ປະກັນໄພຮັບຮູ້ ແລະ ບັນທຶກເປັນລາຍລັກອັກສອນທີ່ຈະໃຫ້ການຄຸ້ມກັນ; ແລະ
- ທຸກໆເຄື່ອງກົນຈັກທີ່ແລ່ນເທິງໜ້າດິນ (ເຄື່ອງມືດ້ານການກະເສດ ຫຼື ກົນຈັກສຳລັບການກໍ່ສ້າງ) ທີ່ເກາະຕິດກັບຍານພາຫະນະທາງບົກ ທີ່ມີປະກັນໄພ ຫາກວ່າໄດ້ກຳນົດການນຳໃຊ້ ເຄື່ອງກົນຈັກດັ່ງກ່າວໄວ້ ໃນເງື່ອນໄຂສະເພາະ.

**ສະພາບໃຊ້ການບໍ່ໄດ້ ຂອງລົດທີ່ມີປະກັນໄພ**

4.2 ໃນກໍລະນີ ລົດທີ່ມີປະກັນໄພ ຫາກຢູ່ໃນສະພາບໃຊ້ບໍ່ໄດ້ໂດຍບັງເອີນ, ຈະໂອນການຄຸ້ມກັນຊົ່ວຄາວໄປໃສ່ຍານພາຫະນະຄັນອື່ນ ທີ່ນຳມາປ່ຽນແທນນັ້ນກໍໄດ້ ເຊິ່ງອາດຈະເປັນລົດເຊົ່າ ຫຼື ຢືມມາໂດຍຜູ້ຊື້ປະກັນໄພ ຫຼື ໂດຍເຈົ້າຂອງລົດໃນເວລານັ້ນ. ການໂອນການຄຸ້ມກັນຈະຕ້ອງປະຕິບັດໄປຕາມເງື່ອນໄຂດັ່ງຕໍ່ໄປນີ້:

4.3 ສຳລັບການຄຸ້ມກັນຂໍ້ ກ, ຂ ແລະ ຍ:

ການຄຸ້ມກັນຈະເລີ່ມນັບແຕ່ມື້ຜູ້ປະກັນໄພໄດ້ຮັບຈົດໝາຍລົງທະບຽນ ແຈ້ງບອກການປ່ຽນແທນ (ໂດຍຖືເອົາວັນສົ່ງຕາມກາປະທັບຂອງໄປສະນີ) ແຕ່ວ່າຜູ້ໄດ້ຮັບການປະກັນໄພ ຕ້ອງຈ່າຍຄ່າປະກັນໄພເພີ່ມ ບົນພື້ນຖານຂອງອັດຕາຄ່າປະກັນໄພ ທີ່ມີຜົນບັງຄັບໃຊ້ໃນຂະນະການປ່ຽນແທນລົດ ດັ່ງນັ້ນໃນຈົດໝາຍຕ້ອງ ແຈ້ງບອກຄວາມແຕກຕ່າງກ່ຽວກັບລັກສະນະຂອງລົດ ທີ່ນຳມາປ່ຽນແທນຕາມຂໍ້ 15.2(i) ໂດຍທຽບໃສ່ກັບຍານພາຫະນະທີ່ໄດ້ຮັບການປະກັນໄພ. ຖ້າບໍ່ດັ່ງນັ້ນ, ຈະໄດ້ປະຕິບັດຕາມຫຼັກການທີ່ໄດ້ລະບຸໄວ້ໃນຂໍ້ 15.5.

4.4 ສຳລັບການຄຸ້ມກັນຂໍ້ ຄ ຫາ ຊ:

ຈະອະນຸມັດການຄຸ້ມກັນລົດທີ່ນຳມາປ່ຽນແທນນັ້ນໄດ້ກໍ່ຕໍ່ເມື່ອໄດ້ຮັບຄຳຕົກລົງເຫັນດີເປັນລາຍລັກອັກສອນຈາກຜູ້ປະກັນໄພແລ້ວເທົ່ານັ້ນ.

ກົງກັນຂ້າມຜູ້ໄດ້ຮັບການປະກັນໄພ ມີສິດຂໍໂຈະການຄຸ້ມກັນໃນໄລຍະເວລາທີ່ລົດເກີດຂັດຂ້ອງໄດ້, ແລະ ຂໍຖອນເງິນຄ່າປະກັນໄພ ສ່ວນທີ່ຍັງເຫຼືອນັ້ນຄືນ, ໂດຍຄິດໄລ່ອັດຕາສ່ວນທີ່ນຳໃຊ້ກັບສັນຍາໃນເວລາໂຈະສັນຍາ.

**ມາດຕາ 5 ເຄື່ອງອາໄຫຼ່ເປັນຄູ່ ແລະ ເປັນຊຸດ**

5.1 ສຳລັບອາໄຫຼ່ທີ່ມີລັກສະນະເປັນຄູ່ ຫຼື ເປັນຊຸດ, ບໍລິສັດຈະບໍ່ຮັບຜິດຊອບທົດແທນເກີນກ່ວາອັດຕາສ່ວນມູນຄ່າທີ່ເໝາະສົມຕົວຈິງຂອງລາຍການໃດໜຶ່ງ ຫຼື ຊິ້ນສ່ວນທີ່ຖືກສູນເສຍ ແລະ ເສຍຫາຍນັ້ນ, ຍົກເວັ້ນແຕ່ຈະມີເອກະສານອ້າງອີງທີ່ລະບຸແຈ້ງຂອງລາຄາສະເພາະຂອງລາຍ ການດັ່ງກ່າວທີ່ອາດເປັນຄູ່ ຫຼື ເປັນຊຸດ.

## ພາກທີ 2. ຄຳອະທິບາຍກ່ຽວກັບການຄຸ້ມກັນ

### ການເສຍຫາຍທີ່ເກີດຂຶ້ນຕໍ່ບຸກຄົນອື່ນ

| | |
|---|---|
| **ມາດຕາ 6. ການຄຸ້ມກັນຂໍ້ ກ: ຄວາມຮັບຜິດຊອບທາງແພ່ງໃນການສັນຈອນ** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 6.1 – 6.3 |
| 2) ຂໍ້ຍົກເວັ້ນ | ມາດຕາ 6.4 – 6.18 |
| 3) ເງື່ອນໄຂພິເສດໃນການຄຸ້ມກັນຄວາມເສຍຫາຍຂອງຜູ້ໂດຍສານ | ມາດຕາ 6.19 |
| ກ) ປະເພດຄວາມເສຍຫາຍທີ່ມີການຄຸ້ມກັນ | ມາດຕາ 6.20 |
| ຂ) ເງື່ອນໄຂການຂົນສົ່ງທີ່ມີການຄຸ້ມກັນ | ມາດຕາ 6.21 – 6.25 |
| ຄ) ຜູ້ໂດຍສານທີ່ບໍ່ໄດ້ຮັບການຄຸ້ມກັນ | ມາດຕາ 6.26 – 6.27 |
| 4) ມູນຄ່າຄ້ຳປະກັນ | ມາດຕາ 6.28 – 6.29 |
| 5) ໃບຢັ້ງຢືນປະກັນໄພ | ມາດຕາ 6.30 – 6.31 |
| **ມາດຕາ 7. ການຄຸ້ມກັນຂໍ້ ຂ: ຄວາມຮັບຜິດຊອບທາງແພ່ງນອກການສັນຈອນ** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 7.1 – 7.2 |
| 2) ຂໍ້ຍົກເວັ້ນ | ມາດຕາ 7.3 |
| 3) ມູນຄ່າຄ້ຳປະກັນ | ມາດຕາ 7.4 |

**ມາດຕາ 6 ການຄຸ້ມກັນຂໍ້ ກ: ຄວາມຮັບຜິດຊອບທາງແພ່ງໃນການສັນຈອນ**

**1) ຈຸດປະສົງຂອງການຄຸ້ມກັນ**

6.1 ຈຸດປະສົງຂອງການຄຸ້ມກັນແມ່ນເພື່ອຕອບສະໜອງ:

- ຕໍ່ຂໍ້ກຳນົດຂອງດຳລັດກ່ຽວກັບພັນທະດ້ານປະກັນໄພທີ່ໄດ້ປະກາດອອກໃຊ້ເປັນຫຼັກການຄວາມຮັບຜິດຊອບທາງແພ່ງໂດຍບໍ່ຖືຄວາມຜິດ ໃນການໃຊ້ແທນຄ່າເສຍຫາຍທາງດ້ານຮ່າງກາຍຂອງບຸກຄົນທີ່ສາມ, ຜູ້ຖືກເຄາະຮ້າຍ ເນື່ອງຈາກອຸປະຕິເຫດໃນການສັນຈອນຂອງລົດທີ່ແລ່ນບົນທ້ອງຖະໜົນ. ຄວາມຮັບຜິດຊອບທາງແພ່ງ ໂດຍບໍ່ຖືຄວາມຜິດນີ້ໄດ້ຖືກກຳນົດໄວ້ ດັ່ງເອກະສານຊ້ອນທ້າຍ 3.
- ຕໍ່ການຂະຫຍາຍການຄຸ້ມກັນ ຄວາມຮັບຜິດຊອບທາງແພ່ງ ຊຶ່ງຜູ້ໄດ້ຮັບການປະກັນໄພ ສາມາດເລືອກ ເອົາທາງເລືອກແບບບັງຄັບ ແລະ ທາງເລືອກອື່ນໆ ຂອງເອກະສານຊ້ອນທ້າຍ 4. ເງື່ອນໄຂສະເພາະໄດ້ກຳນົດທາງເລືອກເຫຼົ່ານີ້ໄວ້ຢ່າງຊັດເຈນຊຶ່ງເປັນບ່ອນອີງໃຫ້ ແກ່ການຈ່າຍຄ່າປະກັນໄພພິເສດ.

ຫຼັກການກ່ຽວກັບຄວາມຮັບຜິດຊອບທາງແພ່ງ ໂດຍບໍ່ຖືຄວາມຜິດ ບໍ່ມີຄວາມໝາຍກ້ວາງກ່ວາການຄຸ້ມກັນຕາມກົດໝາຍທີ່ກຳນົດໄວ້ໃນດຳລັດ.

6.2 ຄວາມຮັບຜິດຊອບທາງແພ່ງ ໃນການສັນຈອນແມ່ນການຄຸ້ມກັນ ຕໍ່ຜູ້ໄດ້ຮັບການປະກັນໄພ ກ່ຽວກັບການໃຊ້ແທນຄ່າເສຍຫາຍຊຶ່ງອາດເປັນຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ຍ້ອນໄດ້ກໍ່ຄວາມເສຍຫາຍທາງດ້ານຮ່າງກາຍ ແລະ/ຫຼື ວັດຖຸໃຫ້ແກ່ຄົນອື່ນ ໃນຂະນະລົດຄັນທີ່ມີປະກັນໄພພວມສັນຈອນຢູ່ ຊຶ່ງການເສຍຫາຍດັ່ງກ່າວ ເນື່ອງມາຈາກ:

i. ອຸປະຕິເຫດລົດຕຳກັນ, ໄຟໄໝ້ ຫຼື ການລະເບີດທີ່ເກີດຈາກລົດດັ່ງກ່າວ, ເຄື່ອງປະກອບຂອງລົດ ແລະ ຜະລິດຕະພັນຮັບໃຊ້ໃຫ້ແກ່ລົດຄັນນັ້ນຕະຫຼອດທັງວັດຖຸສິ່ງຂອງຕ່າງໆ ທີ່ລົດຄັນນັ້ນບັນທຸກ;

ii. ການຕົກລົ່ນຂອງເຄື່ອງປະກອບ, ວັດຖຸ, ສິ່ງຂອງ ຫຼື ຜະລິດຕະພັນຮັບໃຊ້ຂອງລົດດັ່ງກ່າວ;

iii. ອຸປະຕິເຫດທີ່ເກີດຈາກລົດ ທີ່ມີປະກັນໄພຊຶ່ງບາງຄັ້ງທຳການລາກແກ່ພາຫະນະເປ່ເພ, ຫຼື ອຸປະຕິເຫດທີ່ເກີດຈາກລົດຄັນອື່ນທີ່ລາກແກ່ລົດທີ່ມີປະກັນໄພ ຄວາມເສຍຫາຍ ທີ່ເກີດກັບຍານພາຫະນະເຫຼົ່ານີ້ຈະບໍ່ໄດ້ຮັບການຄຸ້ມກັນ.

6.3 ປະການສຸດທ້າຍ, ນອກຈາກການຄຸ້ມກັນຄວາມຮັບຜິດຊອບທາງແພ່ງແລ້ວ ຜູ້ປະກັນໄພຍັງຄ້ຳປະກັນຕໍ່ຜູ້ໄດ້ຮັບການປະກັນໄພກ່ຽວກັບການໃຊ້ຈ່າຍຕາມຕົວຈິງຊຶ່ງຜູ້ໄດ້ຮັບການປະກັນໄພສະເໜີຂໍເພື່ອເຮັດອະນາໄມ ຫຼື ປົວແປງເຄື່ອງປະດັບພາຍໃນລົດ ແລະ ເຄື່ອງນຸ່ງຫົ່ມຂອງຜູ້ກ່ຽວ ແລະ ຂອງຜູ້ຕິດຕາມໄປນຳຜູ້ກ່ຽວ ເມື່ອການໃຊ້ຈ່າຍດັ່ງກ່າວຫາກເປັນການໃຊ້ຈ່າຍທີ່ສືບເນື່ອງມາຈາກການສະໝັກໃຈນຳສົ່ງຄົນເຈັບຈາກອຸປະຕິເຫດໃນການສັນຈອນຂອງລົດທີ່ມີປະກັນໄພໄປຮັບການປິ່ນປົວ. ການທົດແທນດັ່ງກ່າວໄດ້ຮັບການຄຸ້ມກັນ ໂດຍບໍ່ໄດ້ພິຈາລະນາຢູ່ໃນຄວາມຮັບຜິດຊອບ.

**2) ຂໍ້ຍົກເວັ້ນ**

ຜູ້ປະກັນໄພຈະບໍ່ຄໍ້າປະກັນການເສຍຫາຍດັ່ງລຸ່ມນີ້:

6.4 ການເສຍຫາຍຍ້ອນບຸກຄົນທີ່ຂັບລົດຢູ່ໃນສະພາບ ເມົາເຫຼົ້າ ຫຼື ຢາເສບຕິດແລ້ວພາໃຫ້ລົດນັ້ນເກີດອຸປະຕິເຫດ.

6.5 ການເສຍຫາຍທີ່ເກີດຈາກລົດ ທີ່ຂົນສົ່ງວັດຖຸໄວໄຟ, ວັດຖຸລະເບີດ, ວັດຖຸເຂົ້າໝ້ຽງງ່າຍ ຫຼື ວັດຖຸໄໝ້ງ່າຍ, ເພາະວັດຖຸດັ່ງກ່າວເຫຼົ່ານັ້ນຈະເຮັດໃຫ້ຄວາມເສຍຫາຍມີອັນຕະລາຍເພີ່ມຂຶ້ນ. (ເຖິງຢ່າງໃດກໍ່ຕາມ ຂໍ້ຍົກເວັ້ນນີ້ຈະບໍ່ຖືກນໍາໃຊ້ ຕໍ່ການບັນທຸກນໍ້າມັນລື່ນ ນໍ້າມັນເຊື້ອໄຟ ຫຼື ວັດຖຸຄ້າຍຄືກັນ ບໍ່ເກີນ 500 ກລ ຫຼື 600 ລິດ (ລວມທັງນໍ້າມັນ ຫລື ແກ໊ສ ທີ່ໃຊ້ແລ່ນຈັກລົດ).

6.6 ການເສຍຫາຍທີ່ເກີດຂຶ້ນໃນໄລຍະທໍາການທົດສອບ, ການແຂ່ງຂັນຄວາມໄວ ຫຼື ການແຂ່ງຂັນກິລາອື່ນໆຊຶ່ງໄດ້ຮັບອະນຸຍາດລ່ວງໜ້າຈາກອໍານາດລັດຕາມລະບຽບການກໍາຕາມ ເຖິງຜູ້ໄດ້ຮັບການປະກັນໄພຈະເຂົ້າຮ່ວມການແຂ່ງຂັນດັ່ງກ່າວໃນຖານະນັກແຂ່ງຂັນ, ຜູ້ຈັດຕັ້ງ ຫຼື ໃນຖານະຜູ້ຕາງໜ້າໃຫ້ຜູ້ໃດຜູ້ໜຶ່ງທີ່ກ່າວມານັ້ນກໍ່ຕາມ.

6.7 ການເສຍຫາຍໃດໆທີ່ເກີດຂຶ້ນຕໍ່ອາຄານ, ສິ່ງຂອງ ຫຼື ສັດທີ່ເຊົ່າມາ ຫຼື ຝາກໄວ້ນໍາຜູ້ຂັບຂີ່ ບໍ່ວ່າໃນຖານະໃດກໍຕາມ; ເຖິງຢ່າງໃດກໍຕາມ ຂໍ້ຍົກເວັ້ນນີ້ຈະບໍ່ປະຕິບັດນໍາໃຊ້ຕໍ່ການໃຊ້ຈ່າຍຄ່າເສຍຫາຍທີ່ຜູ້ໄດ້ຮັບການປະກັນໄພເປັນຜູ້ຮັບຜິດຊອບໃນກໍລະນີທີ່ການເສຍຫາຍນັ້ນເກີດຈາກໄຟໄໝ້ ຫຼື ລະເບີດເນື່ອງຈາກລົດທີ່ມີປະກັນໄພຈອດຢູ່ສະຖານທີ່ນັ້ນ.

6.8 ການເສຍຫາຍທີ່ເກີດຂຶ້ນຕໍ່ສິນຄ້າ ແລະ ສິ່ງຂອງທີ່ບັນທຸກຢູ່ໃນລົດທີ່ໄດ້ຮັບການປະກັນໄພ.

6.9 ການເສຍຫາຍທີ່ເກີດຈາກອາວຸດ ຫຼື ເຄື່ອງຈັກສໍາລັບການລະເບີດດ້ວຍການປ່ຽນແປງໂຄງຮ່າງແກນປະລະມານູ ຫຼື ດ້ວຍວັດຖຸເຜົາໄໝ້ນິວເຄຼຍ ຫຼື ສິ່ງເສດເຫຼືອຂອງກໍາມັນຕະພາບລັງສີ ຫຼື ຈາກທຸກຢ່າງທີ່ເປັນບໍ່ເກີດແຫຼ່ງການກະຈາຍກະແສໄຟຟ້າ ຊຶ່ງນອນໃນຄວາມຮັບຜິດຊອບຂອງຜູ້ນໍາໃຊ້ໂຮງງານທີ່ເດີນດ້ວຍນິວເຄຼຍແຕ່ພຽງຜູ້ດຽວ.

6.10 ການເສຍຫາຍເກີດຈາກສົງຄາມຕ່າງດ້າວ ຫຼື ສົງຄາມກາງເມືອງ. ຄວາມເສຍຫາຍທີ່ເກີດຈາກ ຫລື ຜ່ານຈາກ ຫຼື ສືບເນື່ອງມາຈາກບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ ຂອງສົງຄາມ, ການບຸກລຸກ, ການກະທໍາຂອງສັດຕູຕ່າງປະເທດ, ສົງຄາມ ຫຼື ການດໍາເນີນການຄ້າຍຄືສົງຄາມ (ບໍ່ວ່າຈະປະກາດ ຫຼື ບໍ່ປະກາດກໍ່ຕາມ) ການກໍ່ຄວາມວຸ້ນວາຍຂອງພົນລະເມືອງ ຫຼື ການລຸກຮື້ຂຶ້ນຂອງປະຊາຊົນ, ການລຸກຮື້ຂຶ້ນຂອງທະຫານ, ການກໍ່ຈາລະຈົນ, ກະບົດ, ການປະຕິວັດ, ກໍາລັງທະຫານ ຫຼື ການກະທໍາໃດໆຂອງບຸກຄົນ ຫຼື ບຸກຄົນທີ່ມີຫນ້າທີ່ໃນນາມ ຫຼື ມີການເຊື່ອມຕໍ່ກັບອົງກອນໃດໆ ເພື່ອຈຸດປະສົງໂຄ່ນລົ້ມ ຫຼື ການກໍ່ການຮ້າຍ ຫຼື ການໃຊ້ຄວາມຮຸນແຮງຕ່າງໆ.

6.11 ຄວາມເສຍຫາຍທີ່ເກີດຂຶ້ນ ໂດຍເຈຕະນາຂອງຜູ້ໄດ້ຮັບການປະກັນໄພ.

6.12 ການປັບໄໝ.

6.13 ຄວາມເສຍຫາຍທີ່ເກີດຈາກລົດປະກັນໄພ ເວລາບັນທຸກເຄື່ອງກໍາເນີດກະແສກໍາມັນຕະພາບລັງສີ ເພື່ອນໍາໄປໃຊ້ນອກໂຮງງານນິວເຄຼຍ ດ້ວຍເຫດວ່າເຄື່ອງກໍາເນີດດັ່ງກ່າວອາດຈະໄດ້ກໍ່ການເສຍຫາຍ ຫຼື ເຮັດໃຫ້ເສຍຫາຍໜັກຂຶ້ນ.

6.14 ການເສຍຫາຍຈາກການຈະລາຈົນ, ຂະບວນລຸກຮື້ຂອງປະຊາຊົນ ຫຼື ພຶດຕິກໍາທີ່ມີກຸ່ມຄົນສົມຮູ້ຮ່ວມຄິດຊຶ່ງມີການນໍາພາຢ່າງເປີດເຜີຍ.

6.15 ການເສຍຫາຍທີ່ເກີດຂຶ້ນລະຫວ່າງການແລ່ນລົດ ຫຼື ກໍາລັງດໍາເນີນງານຂອງຍານພາຫະນະ,ເຄື່ອງກົນຈັກ ແລະ/ຫຼື ອຸປະກອນທີ່ຮັບໃຊ້ໃຫ້ວຽກການກະເສດ, ກໍ່ສ້າງ, ຫຼື ມີຈຸດປະສົງອື່ນໆທີ່ຄ້າຍຄຽງນັ້ນ. ນອກຈາກວ່າພາຫະນະກົນຈັກດັ່ງກ່າວໄດ້ຮັບອະນຸຍາດໃຫ້ສັນຈອນບົນທ້ອງຖະໜົນໄດ້ ແຕ່ຕ້ອງອອກໃບທະບຽນລົດຢັ້ງຢືນທີ່ນໍາໃຊ້ ພ້ອມທັງມີໄລຍະເວລາດຽວກັນກັບສັນຍາປະກັນໄພນີ້.

6.16 ການເສຍຫາຍ ຫຼື ຄ່າໃຊ້ຈ່າຍໃດໆ ທີ່ເກີດຂຶ້ນໂດຍທາງກົງ ຫຼື ທາງອ້ອມ ເຊິ່ງເປັນຜົນມາຈາກການກໍ່ການຮ້າຍໃດໆ ຫຼື ມີຜົນທີ່ສືບເນື່ອງມາຈາກເຫດການດັ່ງກ່າວ

6.17 ຜູ້ປະກັນໄພຈະບໍ່ຮັບຜິດຊອບໃນການຈ່າຍຄ່າຕອບແທນໃດໆ ຫຼື ຈ່າຍຄ່າຜົນປະໂຫຍດໃດໆຕາມຂອບເຂດການຄຸ້ມກັນດັ່ງກ່າວ, ເຊິ່ງການຮັບຜິດຊອບຄ່າໃຊ້ຈ່າຍດັ່ງກ່າວຂອງຜູ້ປະກັນໄພ ອາດຈະເຮັດໃຫ້ຜູ້ປະກັນໄພຖືກລົງໂທດໂດຍການຂວໍ້າ


ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

ບາດຈາກສະຫະປະຊາຊາດ ຫຼື ການຄ້າ, ຫຼື ການຂວ້ຳບາດທາງດ້ານເສດຖະກິດ, ກົດໝາຍ ຫຼື ກົດລະບຽບຂອງສະຫະພາບເອີຣົບ, ສະຫະຣາດສະອານະຈັກ ຫຼື ສະຫະລັດອາເມລິກາ.

6.18 ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີສາມບໍ່ຄຸ້ມກັນຄວາມເສຍຫາຍຕໍ່ວັດຖຸ ຫຼື ຊັບສິນທີ່ເກີດຈາກການສັ່ນສະເທືອນ ຫຼື ການການກົດທັບ ຂອງລົດທີ່ໄດ້ຮັບການປະກັນໄພຕໍ່ກັບເຄື່ອງຊັ່ງນ້ຳໜັກ, ຖະໜົນຫົນທາງ, ຂົວ, ທາງຄົນຍ່າງ, ເດີນສາທາລະນະລະ ຫຼື ສ່ວນບຸກຄົນ ລວມທັງຄວາມເສຍຫາຍທີ່ເກີດກັບສິ່ງອື່ນໆທີ່ຢູ່ລຸ່ມສະຖານທີ່ເກີດເຫດດັ່ງກ່າວ.

**3) ເງື່ອນໄຂພິເສດໃນການຄຸ້ມກັນຄວາມເສຍຫາຍຂອງຜູ້ໂດຍສານ**

6.19 ການຄຸ້ມກັນຄວາມເສຍຫາຍທີ່ເກີດຂຶ້ນຕໍ່ບັນດາຜູ້ໂດຍສານ, ຊຶ່ງເປັນຄວາມຮັບຜິດຊອບ ຂອງຜູ້ໄດ້ຮັບການປະກັນໄພນັ້ນ ແມ່ນບໍ່ຂັດກັບລະບຽບການທີ່ລະບຸໄວ້ໃນຂໍ້ 6.1 ເຖິງ 6.16 ການຄຸ້ມກັນດັ່ງກ່າວແມ່ນໃຫ້ປະຕິບັດຕາມເງື່ອນໄຂດັ່ງຕໍ່ໄປນີ້:

**ກ) ປະເພດການເສຍຫາຍທີ່ຖືກຄ້ຳປະກັນ**

6.20 ການຄຸ້ມກັນທີ່ກ່າວມາຂ້າງເທິງນີ້ ແມ່ນປະຕິບັດສະເພາະຕໍ່ການເສຍຫາຍດ້ານຮ່າງກາຍ ທີ່ເກີດຂຶ້ນແກ່ຜູ້ໂດຍສານຂອງລົດທີ່ໄດ້ຮັບການປະກັນໄພ ແລະ ການເສຍຫາຍຕໍ່ເຄື່ອງນຸ່ງຫົ່ມຂອງເຂົາເຈົ້າ ຊຶ່ງຕິດພັນກັບຄວາມເສຍຫາຍດ້ານຮ່າງກາຍດັ່ງກ່າວ.

**ຂ) ເງື່ອນໄຂການຂົນສົ່ງທີ່ມີການຄຸ້ມກັນ**

**6.21 ຕໍ່ລົດ 2 ລໍ້ ແລະ 3 ລໍ້**

ຕ້ອງບັນທຸກຜູ້ໂດຍສານຕາມຈຳນວນບ່ອນນັ່ງຂອງຜູ້ຜະລິດ.

**6.22 ກ່ຽວກັບລົດເບົາ (ລວມທັງລົດດັດແປງຕົວຖັງ), ລົດຕູ້ ແລະ ລົດເມໂດຍສານ**

ຜູ້ໂດຍສານຕ້ອງນັ່ງຢູ່ດ້ານໃນລົດທີ່ມີປະກັນໄພເທົ່ານັ້ນ.

**6.23 ລົດປະເພດທຸລະກິດ**

ຜູ້ໂດຍສານຕ້ອງນັ່ງຢູ່ໃນຫ້ອງໂດຍສານ ຫຼື ນັ່ງມ້າຍາວຢູ່ກະບະທາງຫຼັງ ທີ່ມີຮາວອ້ອມຂ້າງລົດ ຫຼື ໃນຕົວຖັງລົດແບບເປັນຕູ້.

**6.24 ສຳລັບລົດພ່ວງ ແລະ ເຄິ່ງລົດພ່ວງ (ຕາບໃດລົດດັ່ງກ່າວຍັງມີປະກັນໄພຕາມຄວາມໝາຍຂອງມາດຕາ 4.1)**

ລົດດັ່ງກ່າວຕ້ອງແມ່ນຜະລິດຂຶ້ນເພື່ອຂົນສົ່ງຜູ້ໂດຍສານ ແລະ ຜູ້ໂດຍສານຕ້ອງນັ່ງຢູ່ໃນລົດພ່ວງ ຫຼື ເຄິ່ງລົດພ່ວງ.

**6.25 ອີງຕາມປະໂຫຍກ ທີ່ຢູ່ ຂໍ້ 6.19 ເຖິງ 6.22, ເງື່ອນໄຂເພີ່ມເຕີມທີ່ປະຕິບັດນຳໃຊ້ດັ່ງຕໍ່ໄປນີ້:**

- ຈຳນວນຜູ້ໂດຍສານທີ່ບັນທຸກຢູ່ໃນລົດ ຕ້ອງບໍ່ເກີນຈຳນວນບ່ອນນັ່ງ ແລະ ຫຼື ບໍ່ເກີນຄວາມສາມາດໃນການບັນທຸກ ທີ່ຜູ້ຜະລິດໄດ້ກຳນົດໄວ້.
- ຕາມຈຸດປະສົງຂອງເງື່ອນໄຂນີ້ ສຳລັບເດັກນ້ອຍອາຍຸຫຼຸດ 10 ປີ ຈະຖືກພິຈາລະນາຄິດໄລ່ເປັນເຄິ່ງຄົນ.
- ໃນກໍລະນີທີ່ລະເມີດຕາມເງື່ອນໄຂກ່ຽວກັບຈຳນວນບ່ອນນັ່ງແມ່ນຈະຖືກປະຕິບັດຕາມມາດຕາ 15.5 (ຂ).
- ຈະບໍ່ມີການຄຸ້ມກັນໃດໆ ຖ້າຫາກເກີດກໍລະນີມີການລະເມີດກ່ຽວກັບປະລິມານຈຳນວນບ່ອນນັ່ງທີ່ກ່າວໄວ້.

ຄ) ຜູ້ໂດຍສານທີ່ບໍ່ມີການຄຸ້ມກັນ

6.26 ຜູ້ໂດຍສານທີ່ບໍ່ໄດ້ເສຍຄ່າປີ້ຈະບໍ່ຖືກຄ້ຳປະກັນ, ນອກຈາກວ່າຈະຖືກກຳນົດໄວ້ໃນເງື່ອນໄຂສະເພາະ.

6.27 ອີງຕາມມາດຕາ 6.26, ຖ້າວ່າຜູ້ໄດ້ຮັບການປະກັນໄພ ຫາກຕ້ອງການໃຫ້ຄຸ້ມກັນຄວາມສ່ຽງດັ່ງກ່າວ ແມ່ນຕ້ອງໄດ້ເຮັດການປະກັນໄພພິເສດ, ແຕ່ຕ້ອງໄດ້ຮັບການເຫັນດີເປັນລາຍລັກອັກສອນຈາກຜູ້ປະກັນໄພ.

**4) ຂອບເຂດວົງເງິນຮັບຜິດຊອບ**

6.28 ຂອບເຂດວົງເງິນຮັບຜິດຊອບໄດ້ກຳນົດໄວ້ໃນເອກະສານຊ້ອນທ້າຍ 4:
"ຄວາມຮັບຜິດຊອບທາງແພ່ງຕາມກົດໝາຍ"
ແລະ ທາງເລືອກອື່ນໆ

6.29 ຄ່າທຳນຽມສານ, ຄ່າດຳເນີນຄະດີ ແລະ ຄ່າໃຊ້ຈ່າຍອື່ນໆ ຕາມລະບຽບການ ບໍ່ໄດ້ຫັກເອົາມາຈາກມູນຄ່າຄ້ຳປະກັນ. ເຖິງຢ່າງໃດກໍ່ຕາມ, ໃນກໍລະນີ ຫາກສານຕັດສິນໃຫ້ເສຍຄ່າທຳນຽມສານສູງຫຼາຍ, ຜູ້ປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພຕ່າງກໍຕ້ອງຊຳລະຄ່າທຳນຽມດັ່ງກ່າວ ຕາມສັດສ່ວນຂອງໃຜລາວອີງຕາມການຕັດສິນຂອງສານ.

**5) ໃບຢັ້ງຢືນປະກັນໄພ**



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: (+856 21) 85 5555, | Fax: (+856 21) 85 6666
Call Center: 1677 www.apa.com.la E-mail: info@apa.com.la

6.30 ພາຍຫຼັງການສະເໜີເຮັດປະກັນໄພໄດ້ 15 ວັນຜູ້ໄດ້ຮັບການປະກັນໄພມີສິດໄດ້ຮັບໃບຢັ້ງຢືນປະກັນໄພ ເພື່ອໃຫ້ຜູ້ຂັບຂີ່ທີ່ໄດ້ຮັບການປະກັນໄພ ນໍາສະເໜີເວລາຖືກກວດກາ.

6.31 ເວລາມອບໃບຢັ້ງຢືນປະກັນໄພນັ້ນ, ຖ້າເປັນຄວາມຕ້ອງການຂອງຜູ້ໄດ້ຮັບການປະກັນໄພ ຜູ້ປະກັນໄພອາດຈະມອບໃບຮັບເງິນໃຫ້ພ້ອມກໍ່ໄດ້.

**ມາດຕາ 7 . ການຄຸ້ມກັນຂໍ້ ຂ: ຄວາມຮັບຜິດຊອບທາງແພ່ງນອກຈາກສັນຈອນ**

**1) ຈຸດປະສົງຂອງການຄຸ້ມກັນ**

7.1 ການຄຸ້ມກັນນີ້ແມ່ນການຄຸ້ມກັນຕໍ່ຜູ້ໄດ້ຮັບການປະກັນໄພກ່ຽວກັບການໃຊ້ແທນເສຍຫາຍ ຊຶ່ງອາດຈະເປັນຄວາມຮັບຜິດຊອບຂອງຜູ້ກ່ຽວຍ້ອນໄດ້ກໍ່ການເສຍຫາຍ ແລະ/ຫຼື ດ້ານວັດຖຸໃຫ້ແກ່ຄົນອື່ນໃນຂະນະລົດຄັນມີປະກັນໄພຈອດຢູ່ ແລະ ການເສຍຫາຍນັ້ນເປັນຜົນສືບເນື່ອງມາຈາກການກະທໍາຕາມທີ່ລະບຸໄວ້ໃນການຄຸ້ມກັນ ຂໍ້ ກ.

7.2 ເຖິງຢ່າງໃດກໍ່ຕາມ, ການເສຍຫາຍທີ່ເກີດມາຈາກເຄື່ອງອາໄຫຼ່ ແລະ ຜະລິດຕະພັນຮັບໃຊ້ການເດີນລົດ ແລະ ການເສຍຫາຍທີ່ເກີດມາຈາກສິ່ງຂອງ ຫຼື ວັດຖຸອື່ນໆ ທີ່ລົດໄດ້ບັນທຸກໄປນັ້ນ ແມ່ນຖືກຄຸ້ມກັນສະເພາະ ແຕ່ຊິ້ນສ່ວນທີ່ບໍ່ໄດ້ແຍກຈາກຕົວລົດ ຫຼື ຊິ້ນສ່ວນທີ່ປະກອບກັບຕົວລົດເທົ່ານັ້ນ.

**2) ຂໍ້ຍົກເວັ້ນ**

7.3 ບັນດາຂໍ້ຍົກເວັ້ນທີ່ກ່າວໄວ້ໃນຂໍ້ 6.4 ເຖິງ 6.17 ນັ້ນກໍ່ນໍາໃຊ້ໄດ້ສໍາລັບການຄຸ້ມກັນຂໍ້ ຂ.

**3) ຂອບເຂດຄວາມຮັບຜິດຊອບ**

7.4 ຂອບເຂດຄວາມຮັບຜິດຊອບໄດ້ກໍານົດໄວ້ໃນມາດຕາ 6.28 ຫາ 6.29

**ການເສຍຫາຍຕໍ່ຍານພາຫະນະທີ່ໄດ້ຮັບການປະກັນໄພ**

| | |
|---|---|
| **ມາດຕາ 8. ການຄຸ້ມກັນຂໍ້ ຄ: ການເສຍຫາຍເນື່ອງຈາກອຸປະຕິເຫດທຸກຢ່າງ** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 8.1 – 8.4 |
| 2) ຂໍ້ຍົກເວັ້ນ | ມາດຕາ 8.5 – 8.24 |
| 3) ມູນຄ່າຄໍ້າປະກັນ | ມາດຕາ 8.25 |
| **ມາດຕາ 9. ການຄຸ້ມກັນຂໍ້ ງ: ການເສຍຫາຍເນື່ອງມາຈາກການຕໍາກັນ** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 9.1 – 9.2 |
| 2) ຂໍ້ຍົກເວັ້ນ | ມາດຕາ 9.3 |
| 3) ມູນຄ່າຄໍ້າປະກັນ | ມາດຕາ 9.4 |
| **ມາດຕາ 10. ການຄຸ້ມກັນຂໍ້ ຈ: ແວ່ນລົດແຕກ** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 10.1 |
| 2) ຂໍ້ຍົກເວັ້ນ | ມາດຕາ 10.2 |
| 3) ມູນຄ່າຄໍ້າປະກັນ | ມາດຕາ 10.3 |
| **ມາດຕາ 11. ການຄຸ້ມກັນຂໍ້ ສ: ໄຟໄໝ້** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 11.1–11.3 |
| 2) ຂໍ້ຍົກເວັ້ນ | ມາດຕາ 11.4–11.5 |
| 3) ມູນຄ່າຄໍ້າປະກັນ | ມາດຕາ 11.6 |
| **ມາດຕາ 12. ການຄຸ້ມກັນຂໍ້ ຊ: ການລັກ** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 12.1 – 12.3 |
| 2) ຂໍ້ຍົກເວັ້ນ | ມາດຕາ 12.4 – 12.5 |
| 3) ມູນຄ່າຄໍ້າປະກັນ | ມາດຕາ 12.6 |
| **ມາດຕາ 13. ການຄໍ້າປະກັນຂໍ້ ຍ: ການປົກປ້ອງສິດ - ການຮຽກຮ້ອງຄ່າເສຍຫາຍ** | ມາດຕາ 13.1 – 13.3 |
| **ມາດຕາ 14. ການຄຸ້ມກັນຂໍ້ ດ: ຜູ້ຂັບຂີ່ - ຜູ້ໂດຍສານ** | |
| 1) ຈຸດປະສົງຂອງການຄຸ້ມກັນ | ມາດຕາ 14.1 |



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

| | | |
|---|---|---|
| 2) | ຂໍ້ຍົກເວັ້ນ | ມາດຕາ 14.2 – 14.4 |
| 3) | ສິນປະກັນໄພກໍລະນີເສຍຊີວິດ ບໍ່ບອກເຂົ້າໃສ່ ສິນປະກັນໄພກໍລະນີພິການ | ມາດຕາ 14.5 |
| 4) | ຄ່າປິ່ນປົວ | ມາດຕາ 14.6 |

**ມາດຕາ 8 . ການຄຸ້ມກັນຂໍ້ ຄ: ການເສຍຫາຍເນື່ອງຈາກອຸປະຕິເຫດທຸກຢ່າງ**

**1) ຈຸດປະສົງຂອງການຄຸ້ມກັນ**

8.1 ການຄຸ້ມກັນນີ້ແມ່ນນໍາໃຊ້ຕໍ່ການເສຍຫາຍ ທີ່ເກີດຕໍ່ລົດທີ່ມີປະກັນໄພເນື່ອງຈາກຕໍາວັດຖຸຄົງທີ່, ເຄື່ອນທີ່ ຫຼື ລົດດັ່ງກ່າວປີ້ນຂວໍ້າ ໂດຍມີການຍົກເວັ້ນສະເພາະໃນຂໍ້ 8.19. ການຄຸ້ມກັນເພີ່ມເຕີມທີ່ໄດ້ລະບຸໃນມາດຕາ 10 ເຖິງ 12 ກ່ຽວກັບແກ້ວແວ່ນແຕກ, ໄຟໄໝ້ (ກໍລະນີໄດ້ຊື້ການຄຸ້ມກັນໄຟໄໝ້ ເພີ່ມເຕີມ) ແລະ ການລັກລ້ອນແລ້ວແຕ່ຢູ່ໃນເງື່ອນໄຂຂອງການຄຸ້ມກັນນີ້, ອີງຕາມຂໍ້ຍົກເວັ້ນ ແລະ/ຫຼື ເງື່ອນໄຂຕາມລາຍລະອຽດໃນສັນຍານີ້.

□□□□□□□□□□□□□□□□□□□□□□□□□□□□□□□□□□□□□□□ □□□□□□□□□ງ, ບໍລິສັດ□□□□□□□□□□□□□□□□ □□□□□□□ຕະຫຼາດທົ່ວໄປ ຫຼື ລາຄາ□□□□□□□□□□□□□□□□□□□□□□□□□

- ການຄຸ້ມຄອງຄວາມເສຍຫາຍຂອງຕົວລົດຕາມປົກກະຕິ ຖ້າບໍ່ມີການຊື້ການຄຸ້ມຄອງ ໄຟໄໝ້ ເພີ່ມເຕີມ ຈະບໍ່ມີການຄຸ້ມຄອງ ໄຟໄໝ້ ສໍາລັບລົດໄຟຟ້າ (EV/PHEV) ກໍລະນີທີ່ເກີດໄຟໄໝ້ທີ່ເກີດຂຶ້ນດ້ວຍຕົວມັນເອງ ຫຼື ສາເຫດອື່ນໆທີ່ບໍ່ໄດ້ເກີດຈາກອຸປະຕິເຫດ
- ການຄຸ້ມຄອງໄຟໄໝ້ສູງສຸດສໍາລັບ ລົດໄຟຟ້າ (EV/PHEV) ທີ່ໄດ້ຊື້ທາງເລືອກເພີ່ມພິເສດກໍລະນີທີ່ເກີດໄຟ ໄໝ້ທີ່ເກີດຂຶ້ນດ້ວຍຕົວມັນເອງ ຫຼື ສາເຫດອື່ນໆທີ່ບໍ່ໄດ້ເກີດຈາກອຸປະຕິເຫດແມ່ນ 50% ຂອງມູນຄ່າຄວາມເສຍຫາຍຕົວຈິງ ຫຼື 50% ຂອງມູນຄ່າທີ່ເອົາປະກັນ ຫຼື 300 ລ້ານກີບ ຂຶ້ນນໍາວ່າອັນໃດຈະຕໍ່າກວ່າ, ສ່ວນການເກີດໄຟໄໝ້ຫຼັງຈາກການເກີດອຸປະຕິເຫດ ຈະໄດ້ຮັບການທົດແທນຕາມມູນຄ່າຄວາມເສຍຫາຍຕົວຈິງ ແຕ່ບໍ່ເກີນມູນຄ່າທີ່ເອົາປະກັນ
- ເງື່ອນໄຂເພີ່ມເຕີມ
  - o ລົດໄຟຟ້າ (EV/PHEV) ຈະຕ້ອງ ມີອາຍຸບໍ່ເກີນ 5 ປີໃນວັນທີຊື້ປະກັນໄພ.
  - o ລົດໄຟຟ້າ (EV/PHEV) ຈະຕ້ອງນໍາໃຊ້ບໍ່ເກີນ 100,000KM ໃນວັນທີຊື້ປະກັນໄພ.
  - o ລົດໄຟຟ້າ (EV/PHEV) ຍັງຢູ່ພາຍໃຕ້ໄລຍະການຄໍ້າປະກັນຂອງຕົວແທນຈໍາໜ່າຍທີ່ໄດ້ຮັບອະນຸຍາດ ຕະຫຼອດໄລຍະການປະກັນໄພ
  - o ລົດໄຟຟ້າ (EV/PHEV) ຕ້ອງຢູ່ພາຍໃຕ້ເງື່ອນໄຂມາດຕະຖານຂອງຜູ້ຜະລິດ ແລະ ເງື່ອນໄຂສະເພາະຂອງຜະລິດຕະພັນ ໃນນີ້ຍັງນໍາໃຊ້ກັບພາກສ່ວນອະໄຫຼ່ຕ່າງໆເຊັ່ນ: ສາຍສາກໄຟ

8.2 ການຄຸ້ມກັນນີ້ກວມໄປເຖິງການເສຍຫາຍຊຶ່ງພິສູດໄດ້ວ່າເກີດຂຶ້ນໃນຂະນະທີ່ຖືກຂົນສົ່ງ (ລວມທັງການຂົນຂຶ້ນ ແລະ ຂົນລົງ) ທັງທາງບົກ ແລະ ທາງນໍ້າພາຍໃນ ສປປ ລາວ.

8.3 ການຄຸ້ມກັນນີ້ຈະຄຸ້ມກັນການເສຍຫາຍ ທີ່ເກີດຈາກຢາງຕີນລົດແຕກ ແລ້ວເຮັດໃຫ້ເກີດອຸປະຕິເຫດ ຈົນເກີດການເສຍຫາຍຕໍ່ພາກສ່ວນອື່ນໆຂອງລົດເທົ່ານັ້ນ.

8.4 ເຄື່ອງປະກອບທັງໝົດຂອງລົດທີ່ມີປະກັນໄພ, ນັບທັງເຄື່ອງອາໄຫຼ່, ອຸປະກອນສ້ອມແປງ ແລະ ເຄື່ອງປ່ຽນຖ່າຍທີ່ມາພ້ອມກັບລົດໂດຍບໍ່ໄດ້ເພີ່ມລາຄາລົດຄັນດັ່ງກ່າວ ແມ່ນຈະໄດ້ຮັບການຄຸ້ມກັນທັງໝົດ, ບໍລິສັດຈະບໍ່ໃຫ້ການຄຸ້ມຄອງອຸປະກອນຕົບແຕ່ງເພີ່ມເຕີມເວັ້ນເສຍແຕ່ວ່າໄດ້ມີການຕົກລົງຢ່າງເປັນລາຍລັກອັກສອນຈາກບໍລິສັດເທົ່ານັ້ນ, ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫຼ່ປ່ຽນຖ່າຍ ຫຼື ອຸປະກອນຈໍາເປັນເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ ພາຍໃນທ້ອງຖິ່ນ ຫຼື ຖ້າວ່າເຄື່ອງດັ່ງກ່າວຫາກເປັນເຄື່ອງໝົດສະໄໝ, ສິນປະກັນໄພສໍາລັບຊື້ຊິ້ນສ່ວນ ຫຼື ເຄື່ອງປະກອບເຫຼົ່ານັ້ນແມ່ນບໍ່ໃຫ້ເກີນລາຄາຫຼ້າສຸດທີ່ຂາຍຢູ່ຮ້ານຕົວແທນຈໍາໜ່າຍເຄື່ອງອາໄຫຼ່ຂອງທ້ອງຖິ່ນນັ້ນ.

ຜູ້ປະກັນໄພສາມາດທີ່ຈະເລືອກໃນ ການຈ່າຍຄ່າສ້ອມແປງພາຫະນະ ຫຼື ທົດແທນເປັນເງິນຕາມມູນຄ່າການສູນເສຍ ຫຼື ເປ່ເພເສຍຫາຍຂອງຍານພາຫະນະ ຫຼື ແປງໃຫ້ຄືນສະພາບເດີມ ຫຼື ປ່ຽນແທນໃຫ້ແກ່ລົດທີ່ໄດ້ຮັບປະກັນໄພ.

**2) ຂໍ້ຍົກເວັ້ນ**

ບໍລິສັດປະກັນໄພບໍ່ຄໍ້າປະກັນການເສຍຫາຍດັ່ງລຸ່ມນີ້:

8.5 ມີການໃຊ້ສາຍສາກທີ່ບໍ່ປອດໄພ, ຫຼື ສາຍສາກຖືກໃຊ້ໃນລັກສະນະທີ່ບໍ່ປອດໄພ. ນີ້ຮວມເຖິງສາຍສາກທີ່ບໍ່ໄດ້ໃຊ້ຕາມຄໍາແນະນໍາຂອງຜູ້ຜະລິດລົດ.

8.6 ລົດທີ່ຖືກລາກແກ່ ໂດຍວິທີການທີ່ບໍ່ສອດຄ່ອງກັບຄໍາແນະນໍາຂອງຜູ້ຜະລິດລົດ.

8.7 ຄວາມເສຍຫາຍທີ່ຜູ້ໄດ້ຮັບການປະກັນໄພ ກໍ່ເກີດຂຶ້ນໂດຍເຈຕະນາ.

8.8 ການເສຍຫາຍທີ່ເກີດຂຶ້ນກັບລົດ, ຊຶ່ງຜູ້ໄດ້ຮັບການປະກັນໄພຂັບໃນຂະນະທີ່ເມົາເຫຼົ້າ ຫຼື ເມົາຢາເສບຕິດແລ້ວກໍ່ໃຫ້ເກີດອຸປະຕິເຫດ.

ເຖິງຢ່າງໃດກໍ່ດີ, ຂໍ້ຍົກເວັ້ນເຫຼົ່ານີ້ ບໍ່ມີຜົນບັງຄັບ ຖ້າຫາກມີຫລັກຖານຢັ້ງຢືນວ່າ ອຸປະຕິເຫດທີ່ເກີດຂຶ້ນນັ້ນ ບໍ່ມີສ່ວນກ່ຽວພັນກັບ ສະພາບຂອງຜູ້ຂັບລົດ ແລະ ບໍ່ໃຫ້ນໍາໃຊ້ຂໍ້ຍົກເວັ້ນນີ້ຕໍ່ຜູ້ໄດ້ຮັບປະກັນໄພຄົນອື່ນນອກ ຈາກຄົນຂັບລົດຄັນດັ່ງກ່າວເທົ່ານັ້ນ.

8.9 ການເສຍຫາຍທີ່ເກີດຂຶ້ນກັບລົດໃນເວລາຂົນສົ່ງວັດຖຸໄວໄຟ, ວັດຖຸລະເບີດ, ວັດຖຸທີ່ມີສານເຄມີ ຫຼື ວັດຖຸໄໝ້ງ່າຍ ແລະ ໃນໂອກາດນັ້ນວັດຖຸດັ່ງກ່າວຫາກໄດ້ກໍ່ ຫຼື ໄດ້ເພີ່ມອັນຕະລາຍໃຫ້ແກ່ການເສຍຫາຍທີ່ເກີດຂຶ້ນ. (ເຖິງຢ່າງໃດກໍ່ຕາມຂໍ້ຍົກເວັ້ນນີ້ຈະບໍ່ຖືກນໍາໃຊ້ກັບການບັນທຸກນໍ້າມັນທີ່ໃຊ້ຫລໍ່ລື່ນ ນໍ້າມັນເຊື້ອໄຟ ຫຼື ອາຍແກສບໍ່ເກີນ 500 ກລ ຫຼື 600 ລິດ (ລວມທັງນາ◌ໍ◌ັມັນ ຫຼື ແກັສທີ່ໃຊ້ແລ່ນຈັກລົດ).

8.10 ຄວາມເສຍຫາຍຕ່າງໆທີ່ເກີດຂຶ້ນກັບລົດ ໃນກໍລະນີທີ່ທາງການຕໍາຫຼວດ ຫຼື ທະຫານໄດ້ເກນ ຫຼື ລະດົມໄປຮັບໃຊ້ວຽກປ້ອງກັນຊາດ ປ້ອງກັນຄວາມສະຫງົບ.

8.11 ການເສຍຫາຍທີ່ເກີດຂຶ້ນກັບລົດ ຍ້ອນສິນຄ້າ ຫຼື ວັດຖຸສິ່ງຂອງຕ່າງໆ ທີ່ບັນທຸກຢູ່ໃນລົດ.

8.12 ການເສຍຫາຍທີ່ເກີດມາຈາກການຂົນສິນຄ້າຂຶ້ນ ແລະ ລົງຈາກຍານພາຫະນະ.

8.13 ການເສຍຫາຍທີ່ເກີດຂຶ້ນໃນໄລຍະທໍາການທົດສອບ, ການແຂ່ງຂັນຄວາມໄວ (ຫຼືການລົດລອງ) ເຖິງແມ່ນວ່າໄດ້ຮັບການອະນຸຍາດຈາກອໍານາດລັດຕາມລະບຽບການກໍ່ຕາມ ເຖິງຜູ້ໄດ້ຮັບການປະກັນໄພຈະເຂົ້າຮ່ວມການແຂ່ງຂັນດັ່ງກ່າວໃນຖານະນັກແຂ່ງຂັນ, ຜູ້ຈັດຕັ້ງ ຫຼື ໃນຖານະຜູ້ຕາງໜ້າໃຫ້ຜູ້ໃດຜູ້ໜຶ່ງທີ່ກ່າວມານັ້ນກໍ່ຕາມ.

8.14 ການເສຍຫາຍທີ່ເກີດຈາກອາວຸດ ຫຼື ເຄື່ອງຈັກສໍາລັບການລະເບີດດ້ວຍການປ່ຽນແປງໂຄງຮ່າງແກນປະລະມານູ ຫຼື ດ້ວຍວັດຖຸເຜົາໄໝ້ນິວເຄຼຍ ຫຼື ສິ່ງເສດເຫຼືອຂອງກໍາມັນຕະພາບລັງສີ ຫຼື ຈາກທຸກຢ່າງທີ່ເປັນບໍ່ເກີດແຫຼ່ງການກະຈາຍກະແສໄຟຟ້າ ເຊິ່ງນອນໃນຄວາມຮັບຜິດຊອບຂອງຜູ້ນໍາໃຊ້ໂຮງງານທີ່ເດີນດ້ວຍນິວເຄຼຍແຕ່ພຽງຜູ້ດຽວ.

8.15 ຄວາມເສຍຫາຍທີ່ເກີດຈາກລົດປະກັນໄພ ເວລາບັນທຸກເຄື່ອງກໍາເນີດກະແສກໍາມັນຕະພາບລັງສີ ເພື່ອນໍາໄປໃຊ້ນອກໂຮງງານນິວເຄຼຍ ດ້ວຍເຫດວ່າເຄື່ອງກໍາເນີດດັ່ງກ່າວອາດຈະໄດ້ກໍ່ການເສຍຫາຍ ຫຼື ເຮັດໃຫ້ເສຍຫາຍໜັກຂຶ້ນ.

8.16 ການເສຍຫາຍທີ່ເກີດຈາກໄພທໍາມະຊາດ ແລະ ຈະບໍ່ມີການຍົກເວັ້ນໃດໆ ລວມທັງຄວາມເສຍຫາຍທີ່ເກີດຈາກສາເຫດແຜ່ນດິນໄຫວ, ພູເຂົາໄຟລະເບີດ, ກະແສຄື້ນທະເລແຮງ, ໄພນໍ້າຖ້ວມ, ພະຍຸໃຕ້ຝຸ່ນ, ພະຍຸຕອກນາໂດ, ພະຍຸໄຊໂກລນ.

8.17 ຄ່າໃຊ້ຈ່າຍໃນການຍ້າຍ ຫຼື ລາກແກ່ລົດທີ່ໄດ້ຮັບການປະກັນໄພໄປຍັງຮ້ານສ້ອມແປງທີ່ໄດ້ຄັດເລືອກທີ່ໃກ້ທີ່ສຸດ ແລະ ຄ່າໃຊ້ຈ່າຍທີ່ກ່ຽວຂ້ອງອື່ນໆ ທີ່ເກີດມາຈາກອຸປະຕິເຫດທີ່ກ່ຽວຂ້ອງກັບລົດທີ່ໄດ້ຮັບການປະກັນໄພ ແລະ ຄ່າໃຊ້ຈ່າຍດັ່ງກ່າວຕ້ອງບໍ່ເກີນ 20% ຂອງມູນຄ່າການສ້ອມແປງຕົວຈິງ. ເຊິ່ງຄວາມຮັບຜິດຊອບດັ່ງກ່າວແມ່ນເປັນສ່ວນຂອງຜູ້ປະກັນໄພ ແລະ ຈະບໍ່ເກີນຄວາມຮັບຜິດຊອບສູງສຸດຂອງຜູ້ປະກັນໄພຕາມຂໍ້ກໍານົດພາຍໃຕ້ມາດຕານີ້.

ໃນກໍລະນີເກີດອຸປະຕິເຫດ ຫຼື ລົດເກີດຕິດຂັດ, ລົດໄດ້ຖືກຈອດປະໄວ້ໂດຍຂາດການຮັກສາດູແລ ແລະ ພາໃຫ້ເກີດຄວາມເສຍຫາຍ ຫຼື ສູນເສຍ ຫຼື ໃນກໍລະນີທີ່ລົດຂັບໄປບົນທ້ອງຖະໜົນທີ່ມີສະພາບບໍ່ດີ ກ່ອນການສ້ອມແປງທີ່ຈໍາເປັນທີ່ໄດ້ເກີດຂຶ້ນແລ້ວນັ້ນ, ຄວາມເສຍຫາຍໃດໆ ທີ່ຂະຫຍາຍອອກອ້າງອອກ ຫຼື ພາໃຫ້ເກີດຄວາມເສຍຫາຍເພີ່ມເຕີມໃຫ້ແກ່ລົດດັ່ງກ່າວແມ່ນຈະຖືກຍົກເວັ້ນຈາກການຄຸ້ມກັນ.

8.18 ການເສຍຫາຍທາງອ້ອມເຊັ່ນ: ການອັບປະໂຫຍດສ່ວນຕົວ, ຂາດລາຍໄດ້ທີ່ຄວນໄດ້ຮັບ ແລະ ການຫຼຸ້ຍຫ້ຽນຂອງຍານພາຫະນະ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

8.19 ການເສຍຫາຍເຊິ່ງເກີດຈາກການບົວລະບັດບໍ່ດີ, ການຫຼຸ້ຍຫ້ຽນ, ການບົກພ່ອງ ຫຼື ຜິດພາດໃນການຜະລິດລົດ, ສະພາບໜ້າດິນຫຼຸບໂນນ ຫຼື ສະພາບບໍ່ດີຂອງໜ້າດິນທີ່ເຮັດໃຫ້ລົດກິ້ງ, ເຄື່ອງປະກອບລົດຕົກເຮ່ຍ.

8.20 ຄວາມເສຍຫາຍໃດໆໃນຂະນະທີ່ລົດໄດ້ຮັບການປະກັນໄພໂດຍສານເກີນຈຳນວນບ່ອນນັ່ງ ແລະ/ຫຼື ຂົນສິ່ງເກີນຄວາມແຮງທີ່ຜູ້ຜະລິດໄດ້ກຳນົດໄວ້, ການລະເລີຍການເອົາໃຈໃສ່ນີ້ຈະເປັນສາເຫດໃຫ້ແກ່ຄວາມເສຍຫາຍ ຫຼື ບໍ່ກໍ່ຕາມ.

8.21 ໃນກໍລະນີລົດປີ້ນຂວ້ຳ ຈະມີການຄຸ້ມກັນສະເພາະຄວາມເສຍຫາຍທີ່ເກີດຂຶ້ນຈາກການກະທົບ ຊຶ່ງມີສາເຫດມາຈາກລົດຄັນດັ່ງກ່າວປີ້ນຂວ້ຳ. ການກະທົບຊຶ່ງເກີດຈາກຄວາມຮ້ອນຂອງຈັກລົດເນື່ອງຈາກນ້ຳຖ້ວມຈັກ (ຈັກຈຸ່ມນ້ຳ) ຈະບໍ່ໄດ້ຮັບການຄຸ້ມກັນ.

8.22 ຄວາມສູນເສຍ, ຄວາມເສຍຫາຍ, ຄ່າໃຊ້ຈ່າຍໃດໆ ທີ່ກ່ຽວຂ້ອງ ບໍ່ວ່າທາງກົງ ຫຼື ທາງອ້ອມ ໂດຍເປັນເຫດມາຈາກ ຫຼື ກ່ຽວຂ້ອງກັບການກໍ່ການຮ້າຍ ຫຼື ຄວາມເສຍຫາຍທີ່ມີຜົນສືບເນື່ອງມາຈາກເຫດການດັ່ງກ່າວ.

8.23 ການເສຍຫາຍເກີດຈາກສົງຄາມຕ່າງດ້າວ ຫຼື ສົງຄາມກາງເມືອງ. ຄວາມເສຍຫາຍທີ່ເກີດຈາກ ຫລື ຜ່ານຈາກ ຫຼື ສືບເນື່ອງມາຈາກບໍ່ວ່າຈະເປັນທາງກົງ ຫຼື ທາງອ້ອມ ຂອງສົງຄາມ, ການບຸກລຸກ, ການກະທຳຂອງສັດຕູຕ່າງປະເທດ, ສົງຄາມ ຫຼື ການດຳເນີນການຄ້າຍຄືສົງຄາມ (ບໍ່ວ່າຈະປະກາດ ຫຼື ບໍ່ປະກາດກໍ່ຕາມ) ການກໍ່ຄວາມວຸ້ນວາຍຂອງພົນລະເມືອງ ຫຼື ການລຸກຮື້ຂຶ້ນຂອງປະຊາຊົນ, ການລຸກຮື້ຂຶ້ນຂອງທະຫານ, ການກໍ່ຈາລະຈົນ, ກະບົດ, ການປະຕິວັດ, ກຳລັງທະຫານ ຫຼື ການກະທຳໃດໆຂອງບຸກຄົນ ຫຼື ບຸກຄົນທີ່ມີໜ້າທີ່ໃນນາມ ຫຼື ມີການເຊື່ອມຕໍ່ກັບອົງກອນໃດໆ ເພື່ອຈຸດປະສົງໂຄ່ນລົ້ມ ຫຼື ການກໍ່ການຮ້າຍ ຫຼື ການໃຊ້ຄວາມຮຸນແຮງຕ່າງໆ.

8.24 ຜູ້ປະກັນໄພຈະບໍ່ຮັບຜິດຊອບໃນການຈ່າຍຄ່າຕອບແທນໃດໆ ຫຼື ຈ່າຍຄ່າຕອບແທນໃດໆຕາມຕໍ່ກັບຂອບເຂດດັ່ງກ່າວ, ຖ້າວ່າການຮັບຜິດຊອບຄ່າໃຊ້ຈ່າຍດັ່ງກ່າວຂອງຜູ້ປະກັນອາດຈະເຮັດໃຫ້ຜູ້ປະກັນຖືກລົງໂທດການຂວ້ຳບາດຈາກສະຫະປະຊາຊາດ ຫຼື ການຄ້າ, ເສດຖະກິດ, ກົດໝາຍ ຫຼື ກົດລະບຽບຂອງສະຫະພາບເອີຣົບ, ສະຫະຣາຊະອານາຈັກ ຫຼື ສະຫະລັດອາເມລິກາ.

**3) ມູນຄ່າການຄ້ຳປະກັນ**

8.25 ສຳລັບແຕ່ລະຄວາມເສຍຫາຍທີ່ເກີດຂຶ້ນນັ້ນ, ບໍລິສັດປະກັນໄພຄ້ຳປະກັນທົດແທນຄືນຕາມມູນຄ່າຕົວຈິງຂອງລົດໃນມື້ເກີດອຸປະຕິເຫດເທົ່ານັ້ນ ແລະສູງສຸດບໍ່ເກີນວົງເງິນຄ້ຳປະກັນ ໂດຍຈະຫັກຄ່າຄວາມຮັບຜິດຊອບເອງຂອງຜູ້ໄດ້ຮັບການປະກັນໄພທີ່ກຳນົດໄວ້ເງື່ອນໄຂສະເພາະນັ້ນອອກ,ຖ້າເປັນການເສຍຫາຍຈາກໄຟໄໝ້ການຄຸ້ມຄອງແມ່ນອີງຕາມມາດຕາ 8.1

**ມາດຕາ 9 ການຄຸ້ມກັນຂໍ້ ງ: ການເສຍຫາຍເກີດຈາກການຕຳກັນ**

**1) ຈຸດປະສົງຂອງການຄຸ້ມກັນ**

9.1 ການຄຸ້ມກັນນີ້ແມ່ນການຄຸ້ມກັນຄວາມເສຍຫາຍທີ່ເກີດຈາກການຕຳກັນກັບລົດ ຫຼື ຄົນຍ່າງ ແລະ ການຕຳນັ້ນບໍ່ໄດ້ເກີດຂຶ້ນຢູ່ອູ່ສ້ອມແປງ, ບ່ອນມ້ຽນລົດ ຫຼື ອາຄານສະຖານທີ່ ທີ່ຢູ່ໃນການຄຸ້ມຄອງຂອງຜູ້ໄດ້ຮັບການປະກັນໄພ ແລະ ລົດ ຫລື ຄົນຍ່າງທີ່ເປັນຄູ່ກໍລະນີນັ້ນບໍ່ໄດ້ຢູ່ພາຍໃຕ້ການຄຸ້ມຄອງຂອງຜູ້ໄດ້ຮັບການປະກັນໄພ, ບໍລິສັດຈະໃຫ້ການຄຸ້ມຄອງໄດ້ກໍ່ຕໍ່ເມື່ອສາມາດລະບຸຕົວຕົນ ລົດ ຫຼື ຄົນຍ່າງທີ່ເປັນຄູ່ກໍລະນີນັ້ນໄດ້ເທົ່ານັ້ນ

ການຄຸ້ມກັນນີ້ ຈະບໍ່ໃຫ້ການຄຸ້ມກັນຄວາມເສຍຫາຍທີ່ເກີດຈາກການຕຳກັບສັດທຸກປະເພດ

9.2 ເຄື່ອງປະກອບທັງໝົດຂອງລົດທີ່ມີປະກັນໄພ, ນັບທັງເຄື່ອງອາໄຫຼ່, ອຸປະກອນສ້ອມແປງ ແລະ ເຄື່ອງປ່ຽນຖ່າຍທີ່ມາພ້ອມກັບລົດໂດຍບໍ່ໄດ້ເພີ່ມລາຄາລົດຄັນດັ່ງກ່າວ ແມ່ນຈະໄດ້ຮັບການຄຸ້ມກັນທັງໝົດ,ບໍລິສັດຈະບໍ່ໃຫ້ການຄຸ້ມຄອງອຸປະກອນຕົບແຕ່ງເພີ່ມເຕີມເວັ້ນເສຍແຕ່ວ່າໄດ້ມີການຕົກລົງຢ່າງເປັນລາຍລັກອັກສອນຈາກບໍລິສັດເທົ່ານັ້ນ, ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫຼ່ປ່ຽນຖ່າຍ ຫຼື ອຸປະກອນຈຳເປັນເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ ພາຍໃນທ້ອງຖິ່ນ ຫຼື ຖ້າວ່າເຄື່ອງດັ່ງກ່າວຫາກເປັນເຄື່ອງໝົດສະໄໝ, ສິນປະກັນໄພສຳລັບຊິ້ນສ່ວນ ຫຼື ເຄື່ອງປະກອບເຫຼົ່ານັ້ນແມ່ນບໍ່ໃຫ້ເກີນລາຄາຫຼ້າສຸດທີ່ຂາຍຢູ່ຮ້ານຕົວແທນຈຳໜ່າຍເຄື່ອງອາໄຫຼ່ຂອງທ້ອງຖິ່ນນັ້ນ.

ຜູ້ປະກັນໄພສາມາດທີ່ຈະເລືອກໃນການຈ່າຍຄ່າສ້ອມແປງພາຫະນະ ຫຼື ທົດແທນເປັນເງິນຕາມມູນຄ່າການສູນເສຍ ຫຼື ເປ່ເພເສຍຫາຍຂອງຍານພາຫະນະ ຫຼື ແປງໃຫ້ຄືນສະພາບເດີມ ຫຼື ປ່ຽນແທນໃຫ້ແກ່ລົດທີ່ໄດ້ຮັບການປະກັນໄພ.

**2) ຂໍ້ຍົກເວັ້ນ**

9.3 ບັນດາຂໍ້ຍົກເວັ້ນທີ່ກ່າວໃນຂໍ້ 8.5 ຫາ 8.24 ແມ່ນນຳໃຊ້ສຳລັບການຄຸ້ມກັນຄວາມເສຍຫາຍຈາກການຕຳກັນ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫຼວງໃຕ້, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

**3) ມູນຄ່າການຄຸ້ມກັນ**

9.4 ສຳລັບແຕ່ລະຄວາມເສຍຫາຍທີ່ເກີດຂຶ້ນນັ້ນ, ບໍລິສັດປະກັນໄພຄ້ຳປະກັນທົດແທນຄືນຕາມມູນຄ່າຕົວຈິງຂອງລົດໃນມື້ເກີດອຸປະຕິເຫດເທົ່ານັ້ນ ແລະສູງສຸດບໍ່ເກີນວົງເງິນຄ້ຳປະກັນ ໂດຍຈະຫັກຄ່າຄວາມຮັບຜິດຊອບເອງຂອງຜູ້ໄດ້ຮັບການປະກັນໄພທີ່ກຳນົດໄວ້ເງື່ອນໄຂສະເພາະນັ້ນອອກ,ຖ້າເປັນການເສຍຫາຍຈາກໄຟໄໝ້ການຄຸ້ມຄອງແມ່ນອີງຕາມມາດຕາ 8.1

**ມາດຕາ 10. ການຄຸ້ມກັນຂໍ້ ຈ: ແວ່ນລົດແຕກ**

**1) ຈຸດປະສົງຂອງການຄຸ້ມກັນ**

10.1 ສັນຍານີ້ໃຫ້ການຄຸ້ມກັນໃນການຈ່າຍສຳລັບການຕິດຕັ້ງແວ່ນໜ້າ, ແວ່ນປະຕູ, ແວ່ນຂ້າງ ແລະ ແວ່ນເທິງຫຼັງຄາຂອງລົດປະກັນໄພ, ເຖິງແມ່ນວ່າຈະມາຈາກສາເຫດອຸປະຕິເຫດໂດຍກົງ ຫຼື ບໍ່ກໍ່ຕາມ.

**2) ຂໍ້ຍົກເວັ້ນ**

10.2 ຂໍ້ຍົກເວັ້ນທີ່ກ່າວໄວ້ໃນຂໍ້ 8.5 ຫາ 8.24 ແມ່ນໃຊ້ສຳລັບການຄຸ້ມກັນຂໍ້ ຈ.

**3) ມູນຄ່າການຄ້ຳປະກັນ**

10.3 ສັນຍານີ້ໃຫ້ການຄຸ້ມກັນຄ່າຕິດຕັ້ງແວ່ນ ແຕ່ບໍ່ລວມຄ່າຕິດຟິມກັນແສງ

**ມາດຕາ 11. ການຄຸ້ມກັນຂໍ້ ສ: ໄຟໄໝ້**

ສັນຍານີ້ ຈະບໍ່ໄດ້ໃຫ້ການຄຸ້ມຄອງການເສຍຫາຍທີ່ເກີດຈາກໄຟໄໝ້ ກໍລະນີທີ່ເກີດໄຟໄໝ້ທີ່ເກີດຂຶ້ນດ້ວຍຕົວມັນເອງ ຫຼື ສາເຫດອື່ນໆທີ່ບໍ່ໄດ້ເກີດຈາກອຸປະຕິເຫດ ເວັ້ນແຕ່ວ່າ ຜູ້ໄດ້ຮັບການປະກັນໄພໄດ້ຊື້ການປະກັນໄພໄຟໄໝ້ເພີ່ມເຕີມ ໂດຍການຈ່າຍຄ່າປະກັນໄພເພີ່ມ

**1) ຈຸດປະສົງຂອງການຄຸ້ມກັນ (ກໍລະນີຜູ້ໄດ້ຮັບການປະກັນໄພຊື້ປະກັນໄພໄຟໄໝ້ເພີ່ມເຕີມ)**

11.1 ການຄຸ້ມກັນນີ້ແມ່ນເປັນການຄຸ້ມກັນຂອງຄວາມເສຍຫາຍທີ່ເກີດຈາກ ໄຟໄຫມ້, ຟ້າຜ່າ ຫຼື ການລະເບີດ.

11.2 ການເສຍຫາຍທີ່ເກີດຂຶ້ນຈາກອຸປະກອນໄຟຟ້າຈະບໍ່ໄດ້ຮັບການຄຸ້ມກັນເວັ້ນເສຍແຕ່ວ່າ ຄວາມເສຍຫາຍນັ້ນຫາກໄດ້ເກີດມາຈາກ ການທຳງານຜິດພາດຂອງອຸປະກອນດັ່ງກ່າວ.

11.3 ເຄື່ອງປະກອບທັງຫມົດ, ນັບທັງເຄື່ອງອາໄຫລ່, ອຸປະກອນສ້ອມແປງ ແລະເຄື່ອງປ່ຽນຖ່າຍຊຶ່ງມີມາພ້ອມກັບລົດ ໂດຍບໍ່ໄດ້ເພີ້ມລາຄາລົດຄັນດັ່ງກ່າວແມ່ນຈະໄດ້ຮັບການຄຸ້ມກັນທັງຫມົດ, ບໍລິສັດຈະບໍ່ໃຫ້ການຄຸ້ມຄອງອຸປະກອນຕົບແຕ່ງເພີ່ມເຕີມເວັ້ນເສຍແຕ່ວ່າໄດ້ມີການຕົກລົງຢ່າງເປັນລາຍລັກອັກສອນຈາກບໍລິສັດເທົ່ານັ້ນ, ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫລ່ປ່ຽນຖ່າຍ ຫຼື ອຸປະກອນຈຳເປັນເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ພາຍໃນທ້ອງຖິ່ນ, ຫຼື ຖ້າວ່າເຄື່ອງດັ່ງກ່າວຫາກເປັນເຄື່ອງຫມົດສະໄຫມ, ສິນປະກັນໄພ ສຳຫລັບສິ້ນສ່ວນ ຫຼື ເຄື່ອງປະກອບເຫລົ່ານັ້ນ ແມ່ນບໍ່ໃຫ້ເກີນລາຄາຫລ້າສຸດທີ່ຂາຍຢູ່ຮ້ານຕົວແທນຈຳຫນ່າຍເຄື່ອງອາໄຫລ່ຂອງທ້ອງຖິ່ນນັ້ນ.

**2) ຂໍ້ຍົກເວັ້ນ**

ນອກຈາກຂໍ້ຍົກເວັ້ນທີ່ກ່າວໄວ້ໃນຂໍ້ທີ 8.5 ຫາ ຂໍ້ທີ 8.24 ແລ້ວ ຍັງມີການເສຍຫາຍທີ່ຈະບໍ່ໄດ້ຮັບການຄຸ້ມກັນອີກເພີ້ມຕື່ມເຊັ່ນ :

11.4 ການເສຍຫາຍທີ່ເກີດຈາກວັດຖຸລະເບີດທຸກຊະນິດ ທີ່ບັນທຸກພາຍໃນ ຫລື ຢູ່ເທິງລົດທີ່ໄດ້ຮັບການປະກັນໄພ.
ການເສຍຫາຍ ທີ່ບໍ່ອາດຖືວ່າມາຈາກໄຟໄຫມ້, ໂດຍສະເພາະ ການເຜົາໄຫມ້ ທີ່ເກີດຈາກຄວາມຮ້ອນເກີນຂອບເຂດໂດຍບໍ່ມີແປວໄຟລຸກຂຶ້ນ ຫຼື ເກີດຈາກ ອຸປະຕິເຫດຈາກຜູ້ສູບຢາ.

**3) ມູນຄ່າການຄ້ຳປະກັນ**

11.5 ບໍລິສັດປະກັນໄພຄ້ຳປະກັນທົດແທນຄືນ ຕາມທີ່ກຳນົດໄວ້ໃນ ມາດຕາ 8.1 ໂດຍຈະຫັກຄ່າຄວາມຮັບຜິດຊອບເອງຂອງຜູ້ໄດ້ຮັບການປະກັນໄພທີ່ກຳນົດໄວ້ເງື່ອນໄຂສະເພາະນັ້ນອອກ.

**ມາດຕາ 12. ການຄຸ້ມກັນ ຂໍ້ ຊ : ການລັກ**

**1) ຈຸດປະສົງຂອງການຄຸ້ມກັນ**

12.1 ການຄຸ້ມກັນນີ້ແມ່ນຄ້ຳປະກັນການເສຍຫາຍທີ່ເກີດຈາກການສູນຫາຍໄປ ຫຼື ການຊຸດໂຊມເປ່ເພ່ຂອງລົດທີ່ມີປະກັນໄພຊຶ່ງຄົນຮ້າຍລັກໄປ ຫຼື ພະຍາຍາມຈະລັກ, ດ້ວຍການຕົກລົງເຫັນດີຂອງຜູ້ປະກັນໄພ ຄ່າໃຊ້ຈ່າຍເຊິ່ງຜູ້ໄດ້ຮັບການປະກັນໄພ ໄດ້ຈ່າຍໄປໃນການຄົ້ນຫາລົດທີ່ຖືກລັກໄປ ກໍ່ຈະໄດ້ຮັບການຄຸ້ມກັນ.

12.2 ເຄື່ອງປະກອບທັງຫມົດຂອງລົດທີ່ມີປະກັນໄພ ນັບທັງເຄື່ອງອາໄຫລ່, ອຸປະກອນສ້ອມແປງ ແລະເຄື່ອງປ່ຽນຖ່າຍຊຶ່ງມີມາພ້ອມກັບລົດ ໂດຍບໍ່ໄດ້ເພີ່ມລາຄາລົດຄັນດັ່ງກ່າວ ແມ່ນຈະໄດ້ຮັບການຄຸ້ມກັນທັງຫມົດ. ແຕ່ຖ້າວ່າບໍ່ສາມາດຊອກຊື້ເຄື່ອງອາໄຫລ່ປ່ຽນຖ່າຍ ຫຼື ອຸປະກອນຈໍາເປັນເພື່ອການສ້ອມແປງລົດດັ່ງກ່າວນັ້ນໄດ້ພາຍໃນທ້ອງຖິ່ນ ແລະ/ຫຼື ຖ້າວ່າເຄື່ອງດັ່ງກ່າວຫາກເປັນເຄື່ອງທີ່ໝົດສະໄຫມໄປແລ້ວ, ສິນປະກັນໄພ ສໍາຫລັບສິ້ນສ່ວນ ຫຼື ເຄື່ອງປະກອບເຫລົ່ານັ້ນ ແມ່ນບໍ່ໄດ້ໃຫ້ເກີນລາຄາຫລ້າສຸດທີ່ຂາຍຢູ່ຮ້ານຕົວແທນຈໍາຫນ່າຍເຄື່ອງອາໄຫລ່ຂອງທ້ອງຖິ່ນນັ້ນ.

12.3 ເຖິງຢ່າງໃດກໍ່ຕາມ, ການລັກເອົາເຄື່ອງອາໄຫຼ່ທີ່ຢູ່ນອກລົດແມ່ນຈະບໍ່ໄດ້ຮັບການຄຸ້ມກັນ, ເວັ້ນເສຍແຕ່ວ່າ "ການລັກ " ເຄື່ອງດັ່ງກ່າວຫາກໄດ້ເກີດຂຶ້ນຢູ່ບ່ອນມ້ຽນລົດ, ໂດຍຄົນຮ້າຍໄດ້ໃຊ້ວິທີມ້າງເພຼັດແງະ, ໃຊ້ຂໍກະແຈປອມ, ປີນບ່ອນມ້ຽນລົດ ຫຼື ປະທຸດສະຮ້າຍ(ທໍາຮ້າຍ)ຮ່າງກາຍຢ່າງຮຸນແຮງ.

**2) ຂໍ້ຍົກເວັ້ນ**

ນອກຈາກຂໍ້ຍົກເວັ້ນທີ່ກ່າວໄວ້ໃນ ຂໍ້ທີ 8.5 ຫາຂໍ້ທີ 8.24 ຍັງມີຂໍ້ຍົກເວັນເພີ່ມຕື່ມອີກດັ່ງຕໍ່ໄປນີ້:

12.4 ການລັກທີ່ເປັນການກະທໍາຈາກລູກຈ້າງຂອງຜູ້ໄດ້ຮັບການປະກັນໄພໃນຂະນະເວລາປະຕິບັດໃນວຽກງານຂອງເຂົາເຈົ້າ.

12.5 ການລັກຊຶ່ງເປັນການກະທໍາຂອງສະມະຊິກຢູ່ກິນໃນເຮືອນຜູ້ໄດ້ຮັບການປະກັນໄພ ຫຼື ການລັກ ຊຶ່ງບັນດາບຸກຄົນເຫລົ່ານີ້ໄດ້ສົມຮູ້ຮ່ວມຄິດນໍາ.

**3) ມູນຄ່າການຄຸ້ມກັນ**

12.6 ສໍາລັບແຕ່ລະການເສຍຫາຍທີ່ເກີດຂຶ້ນ, ຜູ້ປະກັນໄພ ຈະຮັບຜິດຊອບທົດແທນຄືນຕາມມູນຄ່າຂອງລົດ ທີ່ຊື້ຂາຍໄດ້ທົ່ວໄປໃນມື້ເກີດເຫດການ ໂດຍຫັກຄ່າຄວາມຮັບຜິດຊອບເອງ ຂອງຜູ້ໄດ້ຮັບການປະກັນໄພ ທີ່ໄດ້ກໍາຫນົດໄວ້ໃນເງື່ອນໄຂສະເພາະນັ້ນອອກ.

**ມາດຕາ 13. ການຄຸ້ມກັນ ຂໍ້ ຍ : ການປົກປ້ອງສິດ ແລະ ການທວງຄ່າເສຍຫາຍຄືນ**

ພາຍໃນຂອບເຂດສິນປະກັນໄພສູງສຸດສໍາລັບແຕ່ລະການເສຍຫາຍທີ່ເກີດຂຶ້ນຊຶ່ງໄດ້ລະບຸໄວ້ໃນເງື່ອນໄຂສະເພາະ ແລະ ເວລາໃດກໍ່ຕາມທີ່ລົດຄັນທີ່ມີປະກັນໄພຍັງຖືກນໍາໃຊ້ຖືກຕ້ອງຕາມເງື່ອນໄຂທີ່ກໍາຫນົດໄວ້ໃນສັນຍາ, ຜູ້ປະກັນໄພ ຂໍໃຫ້ສັນຍາວ່າ:

13.1 ຈະປົກປ້ອງສິດຂອງຜູ້ໄດ້ຮັບການປະກັນໄພ ດ້ວຍລາຍຈ່າຍຂອງຜູ້ປະກັນໄພເອງຂອງການດໍາເນີນຄະດີໃນຂັ້ນສານ ຫຼື ໃນຂະບວນການຍຸຕິທໍາ ຕາມທີ່ກໍາຫນົດໄວ້ໃນຂໍ້ທີ 3.8(ຄ), ຖ້າວ່າຜູ້ໄດ້ຮັບການປະກັນໄພຖືກຮ້ອງຟ້ອງໃນສະຖານລະເມີດກົດໝາຍອາຍາ ແລະ ກົດລະບຽບການສັນຈອນ ເມື່ອເກີດອຸປະຕິເຫດທີ່ຖືກຄຸ້ມກັນຈາກສັນຍາສະບັບນີ້.

13.2 ຈະທວງດ້ວຍລາຍຈ່າຍຂອງຜູ້ປະກັນໄພເອງຕາມເງື່ອນໄຂທີ່ກໍາຫນົດໄວ້ໃນຂໍ້ 19.15 ຫາ 19.18 ເພື່ອຮຽກຮ້ອງເອົາເງິນໃຊ້ແທນ:

i. ຄ່າເສຍຫາຍທາງດ້ານຮ່າງກາຍ ຊຶ່ງເກີດຂຶ້ນຕໍ່ຜູ້ໄດ້ຮັບການປະກັນໄພ ດັ່ງລະບຸໄວ້ໃນຂໍ້ 3.8 (ຄ)
ii. ຄ່າເສຍຫາຍທາງດ້ານວັດຖຸຊຶ່ງເກີດຂຶ້ນຕໍ່ລົດ ທີ່ມີປະກັນໄພພ້ອມທັງວັດຖຸສິ່ງຂອງ ທີ່ບັນຈຸຢູ່ໃນລົດນັ້ນ ໃນກໍລະນີທີ່ວ່າ ສິ່ງຂອງເຫລົ່ານັ້ນບໍ່ໄດ້ຮັບການປະກັນໄພຈາກສັນຍາປະກັນອື່ນ.

13.3 ການຄຸ້ມກັນ "ການທວງຄ່າເສຍຫາຍ" ຈະເປັນໄປໄດ້ກໍ່ຕໍ່ເມື່ອການເສຍຫາຍຕ່າງໆ ຫາກຕົກເປັນຄວາມຮັບຜິດຊອບຂອງບຸກຄົນອື່ນ ແຕ່ບໍ່ແມ່ນຂອງຜູ້ໄດ້ຮັບການປະກັນໄພ ດັ່ງທີ່ໄດ້ກໍາຫນົດໄວ້ໃນຂໍ້ 3.8 (ຄ).

**ມາດຕາ 14. ການຄຸ້ມກັນ ຂໍ້ ດ : ຜູ້ຂັບຂີ່ - ຜູ້ໂດຍສານ**

**1) ຈຸດປະສົງຂອງການຄຸ້ມກັນ**

14.1 ພາຍໃຕ້ສັນຍາສະບັບນີ້, ຜູ້ປະກັນໄພຄໍ້າປະກັນການຊໍາລະເງິນສິນປະກັນໄພຕາມການປະກັນໄພ ແລະ ຕາມມູນຄ່າຄໍ້າປະກັນທີ່ໄດ້ກໍານົດໄວ້ໃນເງື່ອນໄຂສະເພາະ ເມື່ອຜູ້ໄດ້ຮັບການປະກັນໄພໄດ້ປະສົບຄວາມເສຍຫາຍດ້ານຮ່າງກາຍ.

**2) ຂໍ້ຍົກເວັ້ນ**

14.2 ແມ່ນໃຫ້ປະຕິບັດຕາມ ຂໍ້ຍົກເວັ້ນທີ່ໄດ້ກ່າວໄວ້ໃນຂໍ້ທີ 8.5 ຫາ 8.24

14.3 ໃນກໍລະນີ ທີ່ຜູ້ໄດ້ຮັບການປະກັນໄພ ເສຍຊີວິດເນື່ອງຈາກອຸປະຕິເຫດໃນການສັນຈອນໄລຍະເວລາ 24 ເດືອນ ນັບ ແຕ່ວັນເກີດອຸປະຕິເຫດ ຊຶ່ງສັນຍາສະບັບນີ້ໄດ້ໃຫ້ການຄຸ້ມກັນຢູ່, ຜູ້ປະກັນໄພຈະຈ່າຍທົດແທນໃຫ້ແກ່ຜົວ ຫລື ເມຍຂອງຜູ້ເສຍຊີວິດຕາມວົງເງິນຄຸ້ມກັນທີ່ລະບຸໄວ້ໃນເງື່ອນໄຂສະເພາະ, ຖ້າມີຂໍ້ຂັດແຍ່ງໃນຕົວບຸກຄົນທີ່ຈະໄດ້ຮັບຜົນປະໂຫຍດ ຜູ້



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

ປະກັນໄພຈະບໍ່ມີສ່ວນຮ່ວມໃນການແບ່ງປັນສິນປະກັນໄພດັ່ງກ່າວ. ໃນສ່ວນຂອງຜູ້ຊື້ປະກັນໄພອາດຈະສະເໜີຊື່ ຜູ້ຮັບຜົນປະໂຫຍດມາກໍ່ໄດ້.

14.4 ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພຫາກພິການຕະຫຼອດໄປທັງໝົດ ຫຼື ພິການບາງສ່ວນ, ບໍລິສັດຈະຈ່າຍສິນປະກັນໄພໃຫ້ຕາມອັດຕາພິການເນື່ອງຈາກອຸປະຕິເຫດໃນການສົມຈອນຕາມຕາຕະລາງຊ້ອນທ້າຍ 1 ຂອງສັນຍານີ້. ການຈ່າຍສິນປະກັນໄພສູງສຸດທີ່ລະບຸໃນເງື່ອນໄຂສະເພາະ ອາດຈະຫຼຸດລົງຕາມອັດຕາສ່ວນພິການ

ການທົດແທນນີ້ອາດຈະຖືວ່າເປັນຮຽກຮ້ອງຄັ້ງສຸດທ້າຍສຳລັບການບາດເຈັບນີ້.

ເຖິງຢ່າງໃດກໍ່ຕາມ, ເມື່ອສາເຫດອຸປະຕິເຫດດັ່ງກ່າວ ມີອາການຍິ່ງຮ້າຍແຮງຂື້ນອັນເປັນຜົນມາຈາກຄວາມລະເລີຍຂອງຜູ້ໄດ້ຮັບການປະກັນໄພເອງ ຫຼື ຄວາມລະເລີຍທີ່ປະຕິບັດຕາມຫຼັກການປິ່ນປົວທາງການແພດທີ່ຖືກຕ້ອງ, ການຈ່າຍສິນປະກັນໄພແມ່ນຄິດໄລ່ຕາມການປິ່ນປົວຕົວຈິງ ຂອງຄົນທີ່ໄດ້ຮັບການປິ່ນປົວທີ່ຖືກຕ້ອງພາຍໃຕ້ການປິ່ນປົວທາງການແພດແບບສົມເຫດສົມຜົນ.

14.5 ສິນປະກັນໄພ "ພິການ" ບໍ່ບວກເຂົ້າໃສ່ກັບ ສິນປະກັນໄພ "ເສຍຊີວິດ" ສິນປະກັນໄພກໍລະນີເສຍຊີວິດບໍ່ບວກເຂົ້າກັນກັບສິນປະກັນໄພພິການທີ່ຖືກຄໍ້າປະກັນ,ໃນກໍລະນີສິນປະກັນໄພທີ່ ໄດ້ຈ່າຍໄປແລ້ວ ຖ້າຫາກມີການເສຍຊີວິດຕາມພາຍຫລັງກໍ່ຈະໄດ້ເອົາຈຳນວນເງິນທີ່ຈ່າຍໄປແລ້ວມາລົບອອກ ຈາກມູນຄ່າ ຄໍ້າປະກັນການເສຍຊີວິດ. ບໍລິສັດຈະບໍ່ຮັບຜິດຊອບຜົນທີ່ເກີດພາຍຫຼັງຂອງອຸປະຕິເຫດໃດໜຶ່ງ ທີ່ໄດ້ແກ້ໄຂບົນພື້ນຖານຂອງສັນຍາທີ່ໄດ້ຕົກລົງກັນໄວ້ ແລະ ໃບຮັບເງິນທີ່ໄດ້ອອກໃຫ້ຜູ້ກ່ຽວແລ້ວ.

14.6 ຄ່າປິ່ນປົວ

1) ປະເພດຄ່າໃຊ້ຈ່າຍທີ່ຖືກຄຸ້ມກັນແມ່ນອີງຕາມເອກະສານຢັ້ງຢືນທີ່ຖືກຕ້ອງ
ຖ້າວ່າໄດ້ເຊັນເອົາການຄຸ້ມກັນ"ການປິ່ນປົວ" ບໍລິສັດຈະໃຊ້ຄືນຄ່າປິ່ນປົວຕາມວົງເງິນຄຸ້ມກັນທີ່ລະບຸໄວ້ຕາມເງື່ອນໄຂສະເພາະສຳລັບ ຄ່າຢາ, ຄ່າວິເຄາະ, ຄ່າເຮັດອິງຄະທຽມ ແລະ ຄ່າຟື້ນຟູກາຍະບຳບັດ, ຄ່າປິ່ນປົວ ແລະ ໃສ່ແຂ້ວທີ່ເນື່ອງຈາກອຸປະຕິເຫດຕາມທ້ອງຖະໜົນ.

2) ການຊຳລະຄ່າປິ່ນປົວ
ສິນປະກັນໄພທີ່ຈະຊຳລະໃຫ້ ຜູ້ໄດ້ຮັບການປະກັນໄພ ຈະຕ້ອງບໍ່ເກີນ ຄ່າໃຊ້ຈ່າຍຕົວຈິງ ແລະ ບໍ່ເກີນມູນຄ່າຄໍ້າປະກັນ.

## ພາກ 3 : ຄວາມຮັບຜິດຊອບຂອງຜູ້ຊື້ປະກັນໄພ ແລະ ຜູ້ປະກັນໄພ

ການແຈ້ງຂໍ້ມູນກ່ຽວກັບລົດທີ່ຊື້ປະກັນໄພ

### ມາດຕາ 15. ຂໍ້ມູນທີ່ຜູ້ຊື້ປະກັນໄພຄວນແຈ້ງໃນເວລາເຊັນສັນຍາປະກັນໄພ, ໃນເວລາປະຕິບັດສັນຍາ ແລະ ມາດຕະການຕໍ່ຜູ້ກະທຳຜິດ

**1) ໃນເວລາເຊັນສັນຍາປະກັນໄພ**

15.1 ສັນຍາປະກັນໄພຈະມີຜົນປະກົດຂຶ້ນພາຍຫລັງທີ່ ຜູ້ຊື້ປະກັນໄພໄດ້ ແຈ້ງຂໍ້ມູນຕ່າງໆ ແລະ ໄດ້ມີການກາໍນົດອັດຕາຄ່າປະກັນໄພ ຕາມການແຈ້ງຂໍ້ມູນນັ້ນ. ຜູ້ຊື້ປະກັນໄພຕ້ອງຈິງໃຈໃນການແຈ້ງຂໍ້ມູນໃຫ້ຖືກຕ້ອງທຸກສິ່ງທີ່ຕົນຮູ້ເພື່ອເປັນບ່ອນອີງ ໃຫ້ແກ່ຜູ້ປະກັນໄພ ໃນການຕີລາຄາລົດທີ່ເອົາເຂົ້າປະກັນໄພ ເຊິ່ງຜູ້ປະກັນໄພຈະໄດ້ຮັບຜິດຊອບ, ຖ້າບໍ່ດັ່ງນັ້ນຈະຖືວ່າເປັນຄວາມຜິດດັ່ງທີ່ກຳນົດໄວ້ໃນຂໍ້ຕໍ່ໄປນີ້:

**2) ໃນເວລາປະຕິບັດສັນຍາປະກັນໄພ**

15.2 ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຕ້ອງໄດ້ແຈ້ງໃຫ້ຜູ້ປະກັນໄພໄດ້ຮັບຊາບໂດຍທາງຈົດໝາຍລົງທະບຽນ ກ່ຽວກັບທຸກໆການປ່ຽນແປງທີ່ມີຜົນເຖິງໜຶ່ງໃນບັນດາສະພາບການດັ່ງຕໍ່ໄປນີ້:

i. ລັກສະນະຂອງລົດດັ່ງຕໍ່ໄປນີ້

- ກຳລັງຂອງມໍເຕີ
- ຖັງລົດ
- ລົດ 2 ລໍ້ ທີ່ເສີມພວງ (ສາມລໍ້ເຄື່ອງ)
- ນໍ້າໜັກທີ່ບັນທຸກໄດ້ ແລະ ນໍ້າໜັກຂອງລົດ (ສຳລັບລົດຮັບຈ້າງ)
- ທຸກການປ່ຽນແປງການປະກອບສ້າງຂອງລົດ

ii. ການນໍາໃຊ້ລົດ ເຖິງຈະແມ່ນກໍລະນີປ່ຽນແປງການນໍາໃຊ້ ແບບຊົ່ວຄາວກໍ່ຕາມ.

iii. ສໍາລັບຄົນຂັບລົດໃຫມ່ທີ່ຂັບເປັນປະຈໍາ, ໃຫ້ແຈ້ງ ເພດ, ອາຍຸ ແລະ ວັນອອກໃບອານຸຍາດຂັບລົດຂອງຜູ້ກ່ຽວ.

15.3 ການແຈ້ງການດັ່ງກ່າວນີ້ ຈະຕ້ອງເຮັດກ່ອນມີການປ່ຽນແປງຫາກວ່າການປ່ຽນແປງເປັນການກະທໍາໂດຍຜູ້ຊື້ປະກັນໄພ ຫລື ຜູ້ໄດ້ຮັບການປະກັນໄພ ແລະ ໃນກໍລະນີອື່ນໆ ໃຫ້ແຈ້ງພາຍໃນກໍາຫນົດ 8 ວັນ ນັບແຕ່ເວລາຜູ້ໃດຜູ້ໜຶ່ງ ໃນສອງຄົນນີ້ ຫາກໄດ້ຊາບເຖິງການປ່ຽນແປງ.

15.4 ເມື່ອມີການປ່ຽນແປງເປັນປັດໃຈທີ່ເຮັດໃຫ້ຄວາມສ່ຽງເພີ່ມຂຶ້ນເຊັ່ນ: ຸຖ້າມີການປ່ຽນແປງນໍາລົດທີ່ພວມອອກສັນຍາປະກັນໄພຢູ່, ຜູ້ປະກັນໄພຈະບໍ່ອອກສັນຍາໃຫ້ ຫຼື ຖ້າເຮັດສັນຍາໄດ້ແມ່ນຕ້ອງເພີ່ມຄ່າປະກັນໄພຂຶ້ນ, ການແຈ້ງຂໍ້ມູນແມ່ນຕ້ອງປະຕິບັດຕາມຂໍ້ກໍານົດດັ່ງທີ່ໄດ້ລະບຸໄວ້ໃນມາດຕາດັ່ງລຸ່ມນີ້ ແລະ ອີກຮູບການໜຶ່ງໂດຍອີງຕາມເງື່ອນໄຂທີ່ລະບຸໄວ້ໃນດໍາລັດຜູ້ປະກັນໄພອາດຈະຍົກເລີກສັນຍາປະກັນໄພໂດຍຕ້ອງແຈ້ງບອກລ່ວງໜ້າ 10 ວັນ ຫຼື ອາດຈະສະເໜີຄ່າປະກັນໄພໃໝ່ໃຫ້ຜູ້ໄດ້ຮັບການປະກັນໄພຮັບຮູ້.

ໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພ ປະຕິເສດທີ່ຈະຊໍາລະຄ່າປະກັນໄພໃໝ່, ຜູ້ປະກັນໄພກໍ່ຈະຍົກເລີກສັນຍາໂດຍຈະແຈ້ງບອກລ່ວງໜ້າກ່ອນ 10 ວັນ.

**3) ມາດຕະການຕໍ່ຜູ້ກະທໍາຜິດ**

15.5 ທຸກການປົກປິດ, ການແຈ້ງຂໍ້ມູນເທັດໂດຍເຈດຕະນາ, ການເມີນເສີຍ ຫຼື ແຈ້ງການບໍ່ແນ່ນອນ ຫຼື ການເພີ່ມຄວາມສ່ຽງທີ່ກ່າວມາຂ້າງເທິງນີ້, ເຖິງແມ່ນວ່າມັນຈະບໍ່ມີຜົນໂດຍທາງກົງ ຫລື ທາງອ້ອມ ຕໍ່ອຸປະຕິເຫດທີ່ເກີດຂຶ້ນກໍ່ຕາມ ແມ່ນຈະມີມາດຕະການຕໍ່ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພດັ່ງລຸ່ມນີ້:

ກ) ສັນຍາປະກັນໄພຈະເປັນໂມຄະໃນກໍລະນີທີ່ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພບໍ່ມີຄວາມສຸດຈະລິດ.

ຂ) ຖ້າຜູ້ໄດ້ຮັບການປະກັນໄພບໍ່ມີການພິສູດ ຫຼື ອະທິບາຍເຖິງຄວາມສຸດຈະລິດຂອງຕົນໄດ້ ບໍລິສັດ ກໍ່ຈະຫລຸດສິນປະກັນໄພຄວາມເສຍຫາຍ ຕາມອັດຕາສ່ວນ ຂອງຄ່າປະກັນໄພ ທີ່ໄດ້ຈ່າຍແລ້ວ ໂດຍສົມທຽບໃສ່ຄ່າປະກັນໄພ ທີ່ຈະຕ້ອງຈ່າຍໃນກໍລະນີທີ່ການແຈ້ງຂໍ້ມູນກ່ຽວກັບພາຫະນະ ບໍ່ມີຄວາມຖືກຕ້ອງ, ແນ່ນອນ ຫລື ສົມບູນ

ອັດຕາທີ່ຖືເປັນພື້ນຖານຂອງການຫລຸດນີ້ຈະແມ່ນອັດຕາທີ່ຕົກລົງກັນເວລາເຊັນເອົາປະກັນໄພ ຫຼື ອັດຕາໃນມື້ມີການປ່ຽນແປງການໃຊ້ລົດ ຫຼື ຖ້າວ່າ ບໍ່ສາມາດກໍານົດມື້ດັ່ງກ່າວນີ້ໄດ້ ກໍ່ແມ່ນອັດຕາໃນມື້ຂອງການເສຍຫາຍຫລ້າສຸດ.

**4) ຫຼັກການລວມກ່ຽວກັບການປະກັນໄພອື່ນ**

15.6 ຖ້າວ່າລົດທີ່ມີການຄຸ້ມກັນຈາກສັນຍາປະກັນໄພສະບັບນີ້ ຫາກໄດ້ຮັບການຄຸ້ມກັນຈາກການປະກັນໄພອື່ນ, ຜູ້ຊື້ປະກັນໄພຕ້ອງໄດ້ແຈ້ງໃຫ້ຜູ້ປະກັນໄພຊາບເປັນລາຍລັກອັກສອນ.

15.7 ໃນກໍລະນີມີການເສຍຫາຍເກີດຂຶ້ນແມ່ນຈະຕ້ອງປະຕິບັດລະບຽບການຂອງຂໍ້ 19.18

**ຄ່າປະກັນໄພ**

**ມາດຕາ 16. ການຈ່າຍຄ່າປະກັນໄພ ໂດຍຜູ້ຊື້ປະກັນໄພ, ຜົນສະທ້ອນຈາກການຊັກຊ້າໃນການຈ່າຍຄ່າປະກັນໄພ ແລະ ການເສຍພາສີອາກອນ**

16.1 ຄ່າປະກັນໄພ ຫຼື ໃນກໍລະນີມີການແບ່ງຄ່າປະກັນໄພເປັນຫລາຍສ່ວນບັນດາສ່ວນຄ່າປະກັນໄພ ຊຶ່ງມີມູນຄ່າດັ່ງໄດ້ກໍາຫນົດໄວ້ໃນສັນຍາປະກັນໄພ ພ້ອມດ້ວຍຄ່າພາສີອາກອນຂອງສັນຍາປະກັນໄພນັ້ນ, ຕ້ອງຈ່າຍຢູ່ທີ່ຫ້ອງການສານັກງານຂອງບໍລິສັດປະກັນໄພ ຫຼື ຢູ່ເຮືອນຂອງຜູ້ໄດ້ຮັບມອບສິດທີ່ຖືກແຕ່ງຕັ້ງຈາກບໍລິສັດປະກັນໄພ.

16.2 ສັນຍາປະກັນໄພນີ້ຈະຖືກຄຸ້ມຄອງເມື່ອໄດ້ມີການຊໍາລະຄ່າປະກັນໄພ ຄົບຖ້ວນ ແລະ ບໍລິສັດໄດ້ຮັບຄ່າປະກັນໄພ ແລ້ວເວັ້ນເສຍແຕ່ໄດ້ຮັບການຕົກລົງເຫັນດີເປັນຢ່າງອື່ນຢ່າງເປັນລາຍລັກອັກສອນຈາກບໍລິສັດເທົ່ານັ້ນ

16.3 ໃນກໍລະນີບໍ່ມີການຊໍາລະຄ່າປະກັນໄພ ພາຍໃນກໍານົດ 14 ວັນ ຫຼັງຈາກວັນທີເລີ່ມຄຸ້ມກັນ, ສັນຍາປະກັນໄພນີ້ຈະຖືກຍົກເລີກ ໂດຍທັນທີ ແລະ ບໍລິສັດຈະບໍ່ຮັບຜິດຊອບຕໍ່ທຸກໆການຮຽກຮ້ອງຄ່າເສຍຫາຍໃດໆທີ່ເກີດຂຶ້ນທັງກ່ອນ ແລະ ຫຼັງການຍົກເລີກສັນຍາດັ່ງກ່າວ



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

**ມາດຕາ 17. ການດັດແກ້ປ່ຽນແປງຄ່າປະກັນໄພ**

17.1 ຖ້າຫາກວ່າຜູ້ປະກັນໄພໄດ້ມີການປ່ຽນແປງອັດຕາຄ່າປະກັນໄພ ສໍາລັບບັນດາລົດທີ່ມີການຄຸ້ມກັນໂດຍສັນຍາສະບັບນີ້, ຄ່າປະກັນໄພ ກໍ່ຈະໄດ້ປ່ຽນແປງຕາມອັດຕາສ່ວນອັນດຽວກັນນີ້ສໍາລັບທຸກໆວັນຄົບກໍານົດຈ່າຍພາຍຫຼັງການປ່ຽນແປງ.

17.2 ໃນກໍລະນີ ຫາກມີການຂຶ້ນຄ່າປະກັນໄພ , ຜູ້ຊື້ປະກັນໄພກໍມີສິດຍົກເລີກສັນຍາປະກັນໄພພາຍໃນກໍາໜົດ 15 ວັນພາຍຫລັງຜູ້ຊື້ປະກັນໄພໄດ້ຮັບຊາບເຖິງການຂຶ້ນຄ່າທໍານຽມປະກັນໄພ.

**ອຸປະຕິເຫດ**


| | |
|---|---|
| ມາດຕາ 18. ແຈ້ງການອຸປະຕິເຫດທີ່ເກີດຂຶ້ນໂດຍຜູ້ຊື້ປະກັນໄພ | ມາດຕາ 18.1 – 18.4 |
| ມາດຕາ 19. ການແກ້ໄຂອຸປະຕິເຫດທີ່ເກີດຂຶ້ນ | |
| 1) ລະບຽບການປະຕິບັດຕໍ່ການຄຸ້ມກັນຄວາມຮັບຜິດຊອບທາງແພ່ງ | |
| ກ) ການດໍາເນີນຄະດີ - ການແກ້ໄຂຄະດີ | ມາດຕາ 19.1 – 19.3 |
| ຂ) ການປົກປ້ອງສິດ ຂອງຜູ້ເຄາະຮ້າຍ | ມາດຕາ 19.4 – 19.5 |
| 2) ລະບຽບການປະຕິບັດຕໍ່ການຄຸ້ມກັນການເສຍຫາຍຂອງຍານພາຫະນະທີ່ມີປະກັນໄພ | |
| ກ) ການປະເມີນຄວາມເສຍຫາຍ - ຜູ້ຊ່ຽວຊານຄວາມເສຍຫາຍ | ມາດຕາ 19.6 – 19.8 |
| ຂ) ການຈ່າຍສິນປະກັນໄພ | ມາດຕາ 19.9 – 19.12 |
| ຄ) ການແກ້ໄຂສິນປະກັນໄພ | ມາດຕາ 19.13 |
| 3) ລະບຽບການກ່ຽວກັບການຄຸ້ມກັນການປົກປ້ອງສິດ-ການຮຽກຮ້ອງຄ່າເສຍຫາຍ | |
| ກ) ການປົກປ້ອງສິດ | ມາດຕາ 19.14 |
| ຂ) ການຮຽກຮ້ອງຄ່າເສຍຫາຍ | ມາດຕາ 19.15 – 19.19 |
| 4) ຫຼັກການລວມກ່ຽວກັບການປະກັນໄພອື່ນໆ | ມາດຕາ 19.20 |
| ມາດຕາ 20 ກໍານົດເວລາການຈ່າຍສິນປະກັນໄພ | ມາດຕາ 20.1 – 20.2 |
| ມາດຕາ 21 ການແທນສິດ - ການຮຽກຮ້ອງຄ່າເສຍຫາຍພາຍຫຼັງການເສຍຫາຍເກີດຂຶ້ນ | ມາດຕາ 21.1 – 21.2 |


**ມາດຕາ 18. ການແຈ້ງຄວາມເສຍຫາຍທີ່ເກີດຂຶ້ນຈາກອຸປະຕິເຫດໂດຍຜູ້ຊື້ປະກັນໄພ**

18.1 ໃນກໍລະນີທີ່ອຸປະຕິເຫດເກີດຂຶ້ນ, ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຕ້ອງ:

ກ. ຕ້ອງໄດ້ແຈ້ງອຸປະຕິເຫດທີ່ເກີດຂຶ້ນໄປຍັງຜູ້ປະກັນໄພ ໃນທັນທີທີ່ເກີດອຸປະຕິເຫດ ຫຼື ໃນກໍລະນີມີເຫດການແບບສຸດວິໄສບໍ່ສາມາດແຈ້ງທັນທີໄດ້ ຕ້ອງແຈ້ງຢ່າງຊ້າພາຍໃນກໍານົດ 5 ວັນ, ເປັນລາຍລັກອັກສອນສົ່ງໄປທາງຈົດໝາຍລົງທະບຽນ ຫືລ ທາງຈົດໝາຍສົ່ງໃຫ້ເຊັນຮັບເອົາ ຫຼື ທາງປາກເປົ່າ, ຖ້າບໍ່ແຈ້ງຈະໝົດສິດໃນການໄດ້ຮັບສິນປະກັນໄພ, ຖ້າເປັນການຖືກລັກ ແມ່ນຕ້ອງແຈ້ງໃຫ້ຜູ້ປະກັນໄພຮັບຮູ້ພາຍໃນ 24 ຊົ່ວໂມງ ຫລັງຈາກການລັກໄດ້ເກີດຂຶ້ນ.

ຂ. ຕ້ອງສົ່ງມອບໃບຢັ້ງຢືນບັນທຶກການເກີດອຸປະຕິເຫດ ພ້ອມກັບໃບຮຽກຮ້ອງການເສຍຫາຍ ຫຼື ຖ້າເປັນໄປບໍ່ໄດ້ ໃບແຈ້ງການເສຍຫາຍຕ້ອງໄດ້ເຮັດໃຫ້ໄວເທົ່າທີ່ຈະໄວໄດ້ ເຊິ່ງໃນນັ້ນແມ່ນໃຫ້ລະບຸສະພາບການເກີດອຸປະຕິເຫດ, ການສັນນິຖານ ຫລື ສິ່ງທີ່ຮູ້ວ່າເປັນສາເຫດໃນການເກີດອຸປະຕິເຫດ ພ້ອມທັງຊື່ ແລະ ທີ່ຢູ່ຜູ້ຂັບລົດໃນເວລາເກີດອຸປະຕິເຫດ, ລາຍຊື່ຜູ້ໄດ້ຮັບບາດເຈັບ ແລະ ພິຍານ ຖ້າເປັນໄປໄດ້.

ຄ. ຕ້ອງສົ່ງມອບບັນດາເອກະສານເມື່ອໄດ້ຮັບທຸກໆແຈ້ງການ, ໝາຍເກາະ, ຄໍາໃຫ້ການຕໍ່ສານ, ໜັງສືທີ່ບໍ່ເປັນນິຕິກາ ແລະ ເອກະສານຕ່າງໆຂອງການດໍາເນີນຄະດີ ກ່ຽວກັບການເສຍຫາຍເກີດຂຶ້ນ ຊຶ່ງກ່ຽວພັນກັບການຄຸ້ມກັນຂອງສັນຍາປະກັນໄພ ທີ່ໄດ້ສົ່ງເຖິງຕົນ ຫຼື ຜູ້ຖືກມອບໝາຍ.

ບໍ່ໃຫ້ເຈລະຈາຍອມຮັບ ຫຼື ບໍ່ຍອມຮັບໃນການແກ້ໄຂອຸປະຕິເຫດ ໂດຍບໍ່ໄດ້ຮັບການຕົກລົງເຫັນດີເປັນລາຍລັກອັກສອນຈາກຜູ້ປະກັນໄພກ່ອນ. ຜູ້ປະກັນໄພມີສິດພິຈາລະນາໃຕ່ຕອງໃນການດໍາເນີນການປົກປ້ອງ ແລະ ແກ້ໄຂອຸປະຕິເຫດດັ່ງກ່າວ.

ງ. ໃນກໍລະນີມີການເສຍຫາຍຕໍ່ລົດທີ່ໄດ້ຮັບປະກັນໄພ(ຕາມການຄຸ້ມກັນ ຂໍ້ ຄ ຫາ ຊ)ຕ້ອງແຈ້ງໃຫ້ຜູ້ປະກັນໄພຊາບເຖິງສະຖານທີ່ໆສາມາດທໍາການພິສູດ ຫຼື ກວດກາຄືນການເສຍຫາຍນັ້ນໄດ້, ພ້ອມກັນນັ້ນກໍ່ບໍ່ຄວນດາເນີນການສ້ອມແປງກອນທີ່ມີການກວດກາຄວາມເສຍຫາຍ ພ້ອມຫລັກຖານອື່ນ ຈາກຜູ້ປະກັນໄພ, ກໍລະນີຫລັງຈາກ 15 ວັນ ນັບແຕ່ມື້ທີ່ຜູ້ປະກັນໄພໄດ້ຮູ້ ຂ່າວ

ກ່ຽວການເສຍຫາຍແລ້ວແຕ່ທາງຜູ້ປະກັນໄພບໍ່ໄດ້ໄປກວດກາຄວາມເສຍຫາຍ ຫຼື ບໍ່ໄດ້ດໍາເນີນການໃດໆ ແມ່ນຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພກໍ່ສາມາດ ສົ່ງໃບຢັ້ງຢືນລາຍຈ່າຍຄ່າສ້ອມແປງໃຫ້ຜູ້ປະກັນໄພພິຈາລະນາ.

ຈ. ສົ່ງແຈ້ງການຂອງຂໍ້ຍົກເວັ້ນໃຫ້ກັບຜູ້ປະກອບການຂົນສົ່ງ ຫລື ພາກສ່ວນກ່ຽວຂ້ອງ ທາງຈົດຫມາຍລົງທະບຽນ ພ້ອມທັງສົ່ງແຈ້ງການໃຫ້ຜູ້ປະກັນໄພທາງຈົດຫມາຍລົງທະບຽນພາຍໃນ 3 ວັນ ເພື່ອດໍາເນີນການຮຽກຮ້ອງຄ່າເສຍຫາຍກັບພາກສ່ວນທີ່ຮັບຜິດຊອບ.

ສ. ໃນກໍລະນີມີການລັກລົດທີ່ມີປະກັນໄພ, ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ທ້ອງຖິ່ນນັ້ນໃນທັນທີໂລດ ແລະ ຕ້ອງແຈ້ງຕໍ່ຫ້ອງການທີ່ອອກໃບທະບຽນລົດ, ໃນກໍລະນີທີ່ຊອກເຫັນລົດຄືນມາໄດ້ ຕ້ອງແຈ້ງຜູ້ປະກັນໄພຮັບຊາບພາຍໃນ 8 ວັນ ແລະ ຕ້ອງຍື່ນຟ້ອງຂຶ້ນສານຖ້າຜູ້ປະກັນໄພຮ້ອງຂໍ.

18.2 ໃນກໍລະນີຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ບໍ່ປະຕິບັດຕາມພັນທະ ດັ່ງກ່າວໄວ້ໃນຂໍ້ 18.1 (ກ) ຫາ 18.1 (ສ) ຂ້າງເທິງນີ້, ຜູ້ປະກັນໄພມີສິດຫວງເອົາຄ່າເສຍຫາຍຕາມອັດຕາສ່ວນທີ່ກົງກັບການເສຍຫາຍ ຊຶ່ງເກີດຈາກການບໍ່ປະຕິບັດ ພັນທະນັ້ນ, ຍົກເວັ້ນ ກໍລະນີບັງເອີນ ຫຼື ສຸດວິໄສ.

18.3 ຖ້າວ່າອຸປະຕິເຫດ ທີ່ເກີດຂຶ້ນນັ້ນ ເຮັດໃຫ້ຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພເສຍຊີວິດ, ການແຈ້ງຄວາມເສຍຫາຍດັ່ງກ່າວແມ່ນຕົກເປັນພາລະຄວາມຮັບຜິດຊອບຂອງຜູ້ມີສິດສືບທອດຂອງຜູ້ຊື້ປະກັນໄພຫຼື ຂອງຜູ້ໄດ້ຮັບການປະກັນໄພທີ່ຈະ ຕ້ອງແຈ້ງຕາມເງື່ອນໄຂທີ່ກ່າວມາຂ້າງເທິງໃນວັກທີ 18.1 (ກ), ພາຍຫລັງໄດ້ຮູ້ວ່າມີການເສຍຫາຍເກີດຂຶ້ນ ແລະ ໂດຍທົ່ວໄປແລ້ວຕ້ອງຢູ່ພາຍໃຕ້ຂໍ້ພັນທະຕ່າງໆ ທີ່ກ່າວມາຂ້າງເທິງນັ້ນ, ຖ້າບໍ່ດັ່ງນັ້ນຜູ້ປະກັນໄພອາດຈະຫຼຸດຈໍານວນເງິນທົດແທນຄ່າເສຍຫາຍຕາມອັດຕາສ່ວນ ທີ່ການເສຍຫາຍໄດ້ເກີດຈາກການບໍ່ປະຕິບັດຕາມພັນທະນັ້ນ ຍົກເວັ້ນ ກໍລະນີບັງເອີນ ແລະ ເຫດສຸດວິໄສ.

18.4 ຖ້າວ່າຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ມີສິດສືບທອດ ຂອງຜູ້ໃດຜູ້ໜຶ່ງຫາກບໍ່ສັດຊື່ ໂດຍບໍ່ຈິງໃຈແຈ້ງ ແລະ ແຈ້ງຄວາມເທັດ ກ່ຽວກັບສະພາບອຸປະຕິເຫດ, ສາຍເຫດ, ສະພາບແວດລ້ອມ ແລະ ຜົນສະທ້ອນ ຂອງການເສຍຫາຍທີ່ເກີດຂຶ້ນ, ຜູ້ກ່ຽວຈະໝົດສິດຢ່າງຂຶ້ນເຊີງໃນການທີ່ຈະຫວງເອົາຄ່າເສຍຫາຍ.

**ມາດຕາ 19. ການແກ້ໄຂການເສຍຫາຍທີ່ເກີດຂຶ້ນ**

1) **ລະບຽບການທີ່ນໍາໃຊ້ໃນການຄຸ້ມກັນຄວາມຮັບຜິດຊອບທາງແພ່ງ**
**ການດໍາເນີນຄະດີ-ການແກ້ໄຂຄະດີ**

19.1 ໃນກໍລະນີ ການຮ້ອງຟ້ອງ ຕໍ່ຄວາມຮັບຜິດຊອບ ທີ່ມີການຄຸ້ມກັນຈາກສັນຍາປະກັນໄພສະບັບນີ້ ຜູ້ປະກັນໄພມີສິດດໍາເນີນການຕາມຂອບເຂດການຄຸ້ມກັນທີ່ໄດ້ລະບຸໄວ້ໃນສັນຍາຄື:

- ມີສິດທີ່ຈະດໍາເນີນການປົກປ້ອງສິດ ໃນການດໍາເນີນຄະດີຂັ້ນສານ ແລະ ດໍາເນີນການອຸທອນ ທຸກວິທີທາງ ເພື່ອຊ່ວຍເຫຼືອຜູ້ໄດ້ຮັບການປະກັນໄພ ຕໍ່ໜ້າອໍານາດສານແພ່ງ ຫຼື ອໍານາດລັດບໍລິຫານ.
- ມີສິດທີ່ຈະດໍາເນີນການປົກປ້ອງສິດ ຫຼື ທີ່ຈະເຂົ້າຮ່ວມການດໍາເນີນການປົກປ້ອງສິດໃນຄະດີທາງອາຍາ ໂດຍໄດ້ຮັບຄວາມເຫັນດີ ຈາກຜູ້ໄດ້ຮັບການປະກັນໄພກ່ອນ ຖ້າວ່າບັນດາຜູ້ເຄາະຮ້າຍຫາກຍັງຢູ່ໃນເງື່ອນໄຂອັນຖືກຕ້ອງແຕ່ ເຖິງຢ່າງໃດກໍດີ, ເມື່ອບໍ່ໄດ້ຮັບຄວາມເຫັນດີດັ່ງກ່າວ, ບໍລິສັດປະກັນໄພກໍ່ສາມາດດໍາເນີນການປົກປ້ອງຜົນປະໂຫຍດທາງແພ່ງ ຂອງຜູ້ໄດ້ຮັບການປະກັນໄພໄດ້ ບໍລິສັດປະກັນໄພມີສິດທີ່ຈະດໍາເນີນການອຸທອນທຸກວິທີທາງ ໃນນາມຂອງຜູ້ໄດ້ຮັບການປະກັນໄພ ລວມທັງການຟ້ອງແຍ້ງຄໍາຕັດສິນຂອງສານສູງສຸດ ເພື່ອຜົນປະໂຫຍດຂອງຜູ້ໄດ້ຮັບການປະກັນໄພ ຖ້າວ່າບໍ່ມີສ່ວນພົວພັນເຖິງຄະດີອາຍາ ແຕ່ຖ້າວ່າ ມີສ່ວນພົວພັນກັບຄະດີອາຍາແລ້ວ, ບໍລິສັດຈະດໍາເນີນການອຸທອນ ຫຼື ຟ້ອງແຍ້ງຄໍາຕັດສິນຂອງສານໄດ້ ກໍ່ແຕ່ເມື່ອ ໄດ້ຮັບການຕົກລົງເຫັນດີ ຈາກຜູ້ໄດ້ຮັບການປະກັນໄພ ເສຍກ່ອນເທົ່ານັ້ນ.

19.2 ໃນຂອບເຂດການຄຸ້ມກັນ, ຜູ້ປະກັນໄພຄືນດຽວເທົ່ານັ້ນມີສິດຕົກລົງ ປະນິປະນອມກັບຜູ້ໄດ້ຮັບຄວາມເສຍຫາຍ ຫຼື ຜູ້ມີສິດສືບທອດຂອງເຂົາ.

19.3 ການຍອມຮັບຄວາມຮັບຜິດຊອບໃດໆ, ການທໍາທຸລະກໍາໃດໆໂດຍບຸກອື່ນ ນອກຈາກຜູ້ປະກັນໄພແລ້ວແມ່ນບໍ່ມີຜົນຜູກພັນໃດໆກັບຜູ້ປະກັນໄພ, ເນື່ອງຈາກການຍອມຮັບດັ່ງກ່າວເປັນການກະທໍາ ພຽງເພື່ອເປັນການຊ່ວຍເຫຼືອຕໍ່ຜູ້ທີ່ຖືກເຄາະຮ້າຍໃນລັກສະນະທີ່ຜູ້ຄືນມີຫນ້າທີ່ທາງກົດຫມາຍ ຫລື ສິນທໍາທີ່ຕ້ອງໄດ້ປະຕິບັດ.

2) **ລະບຽບກ່ຽວກັບການຄຸ້ມກັນ " ການເສຍຫາຍຂອງຍານພາຫະນະທີ່ໄດ້ຮັບການປະກັນໄພ "**

**ກ) ການປະເມີນຄວາມເສຍຫາຍ ແລະ ຜູ້ຊ່ຽວຊານໃນການປະເມີນຄວາມເສຍຫາຍ**

19.4 ຖ້າວ່າທັງສອງຝ່າຍບໍ່ສາມາດກໍານົດຄວາມເສຍຫາຍຮ່ວມກັນໄດ້, ຈໍາເປັນຈະຕ້ອງໄດ້ກວດກາຕີລາຄາການເສຍຫາຍໃນຖານກັນເອງໂດຍນັບຖືສິດຊຶ່ງກັນ ແລະ ກັນ. ແຕ່ລະຝ່າຍຕ້ອງເລືອກຜູ້ຊ່ຽວຊານຂອງຕົນ. ຫາກບໍ່ສາມາດຕົກລົງກັນໄດ້ກໍ່ຕ້ອງໄດ້ຂໍຄວາມຊ່ວຍເຫຼືອຈາກຜູ້ຊ່ຽວຊານຄົນທີ່ສາມ, ຜູ້ຊ່ຽວຊານທັງ 3 ຄົນຈະດໍາເນີນງານຮ່ວມກັນ ແລະ ປະຕິບັດຕາມສຽງສ່ວນຫຼາຍ.

19.5 ເມື່ອຝ່າຍໃດຝ່າຍໜຶ່ງບໍ່ໄດ້ແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊ່ຽວຊານທັງສອງຄົນບໍ່ສາມາດຕົກລົງກັນໄດ້ໃນການລົງຄໍາເຫັນຕໍ່ກັບຄວາມເສຍຫາຍທີ່ເກີດຂຶ້ນ ຫຼື ບໍ່ສາມາດແຕ່ງຕັ້ງຊ່ຽວຊານຜູ້ທີ່ສາມໄດ້, ຜູ້ພິພາກສາທີ່ໄດ້ຖືກແຕ່ງຕັ້ງໂດຍສານປະຊາຊົນຈະເປັນຜູ້ຕິດຕາມການແຕ່ງຕັ້ງນີ້ໃນການດໍາເນີນເຮັດວຽກລົງເລິກເຫດການລາຍລະອຽດ ຊ່ວງອຸປະຕິເຫດທີ່ເກີດຂຶ້ນ, ໂດຍອີງໃສ່ພື້ນຖານການສະເໜີຂອງຝ່າຍທີ່ມີຄວາມຕັ້ງໜ້າ ຫຼາຍກວ່າ.

19.6 ແຕ່ລະຝ່າຍຕ້ອງຮັບຜິດຊອບຄ່າໃຊ້ຈ່າຍ ແລະ ຄ່າທໍານຽມໃຫ້ຜູ້ຊ່ຽວຊານຂອງຕົນ ແລະ ຖ້າມີການຊໍາລະຄ່າທໍານຽມການແຕ່ງຕັ້ງຜູ້ຊ່ຽວຊານຄົນທີ່ສາມ, ກໍໃຫ້ແຕ່ລະຝ່າຍແບ່ງເຄິ່ງກັນຊໍາລະ.

**ຂ) ການພິຈາລະນາສິນປະກັນໄພ**

19.7 ໂດຍບໍ່ໄດ້ຂັດກັບລະບຽບການທີ່ກ່າວໄວ້ໃນຂໍ້ທີ 15.1 ຫາຂໍ້ທີ 15.7 ກ່ຽວກັບແຈ້ງການທີ່ຜູ້ຊື້ປະກັນໄພ ຈະເຮັດຂຶ້ນໃນຂະນະເຊັນເອົາປະກັນໄພ ແລະ ໃນເວລາປະຕິບັດສັນຍາ, ສິນປະກັນໄພຊຶ່ງຜູ້ປະກັນໄພເປັນຜູ້ຊໍາລະແທນຄືນມີດັ່ງນີ້:
ກ. ເມື່ອລົດຫາກເປ່ເພທັງໝົດ, ນໍາໃຊ້ບໍ່ໄດ້ ຫຼື ຖືກລັກ: ໃຊ້ແທນຕາມມູນຄ່າລາຄາທີ່ຊື້ຂາຍໄດ້ ໃນມື້ທີ່ມີການເສຍຫາຍເກີດຂຶ້ນ, ມູນຄ່າຊາກລົດ ແລະ ຄ່າໃຊ້ຈ່າຍໃນການຕິດຕາມຊອກຫາລົດທີ່ຖືກລັກໄປແມ່ນຈະໄດ້ຫັກອອກຈາກມູນຄ່າຊື້ຂາຍໄດ້ນີ້.
ຂ. ໃນກໍລະນີທີ່ມີການເສຍຫາຍສ່ວນໃດສ່ວນໜຶ່ງ: ຄ່າສ້ອມແປງ ຫຼື ຄ່າປ່ຽນຖ່າຍເຄື່ອງອາໄຫຼ່ທີ່ເປ່ເພແມ່ນຢູ່ໃນຂອບເຂດມູນຄ່າທີ່ຊື້ຂາຍໄດ້ໃນມື້ການເສຍຫາຍເກີດຂຶ້ນ.

19.8 ສິນປະກັນໄພນີ້ແມ່ນ ໄດ້ກໍານົດໄວ້ບົນພື້ນຖານການປະເມີນຄ່າເສຍຫາຍທີ່ໄດ້ກ່າວໄວ້ໃນຂໍ້ທີ 19.6 ຫາ 19.7 ຜ່ານມາຂ້າງເທິງນີ້ ບໍ່ວ່າຈະຢູ່ໃນກໍລະນີໃດກໍ່ຕາມ ສິນປະກັນໄພບໍ່ໃຫ້ເກີນມູນຄ່າຂອງການຄຸ້ມກັນທີ່ໄດ້ ວາງໄວ້ໃນເງື່ອນໄຂສະເພາະ.

19.9 ຖ້າຫາກວ່າວົງເງິນຄໍ້າປະກັນຫາກຕໍ່າກວ່າລາຄາຕາມທ້ອງຕະຫຼາດ (ລາຄາທີ່ຊື້ຂາຍກັນໄດ້), ຜູ້ໄດ້ຮັບການປະກັນໄພຈະບໍ່ໄດ້ຮັບສິນປະກັນໄພຄວາມເສຍຫາຍທີ່ເກີດຂຶ້ນນໍາລົດທີ່ໄດ້ຮັບການປະກັນໄພແບບເຕັມສ່ວນໃນເວລາເກີດອຸປະຕິເຫດ. ບໍລິສັດຈະຮັບຜິດຊອບສູງສຸດທີ່ກໍານົດໄວ້ໂດຍຫຼັກການຄິດໄລ່ດັ່ງລຸ່ມນີ້:

$$\text{ມູນຄ່າສູງສຸດທີ່ບໍລິສັດຈ່າຍ} = \frac{\text{ວົງເງິນຄໍ້າປະກັນ}}{\text{ລາຄາຕາມທ້ອງຕະຫຼາດ}} \times \text{ມູນຄ່າເສຍຫາຍ/ສູນເສຍ}$$

19.10 ມູນຄ່າຄວາມຮັບຜິດຊອບຂອງຜູ້ໄດ້ຮັບການປະກັນໄພ ທີ່ໄດ້ຖືກລະບຸໃນສັນຍາ, ຖ້າມີ, ແມ່ນຈະໄດ້ຫັກມູນຄ່າດັ່ງກ່າວນີ້ ອອກຈາກສິນປະກັນໄພສຸດທ້າຍ.

**ຄ) ການຊໍາລະສິນປະກັນໄພ**

19.11 ຜູ້ປະກັນໄພຈະຊໍາລະສິນປະກັນໄພໂດຍກົງໃຫ້ແກ່ເຈົ້າຂອງລົດທີ່ມີປະກັນໄພ, ຜູ້ຊື້ປະກັນໄພ ຫຼື ຊໍາລະໃຫ້ແກ່ບຸກຄົນອື່ນເມື່ອມີການຕົກລົງເຫັນດີຈາກເຈົ້າຂອງລົດ ພາຍຫລັງມີການສະເໜີໃບລາຍການຄ່າເສຍຫາຍຕໍ່ຜູ້ປະກັນໄພ.

3) **ລະບຽບການກ່ຽວກັບການຄຸ້ມກັນການປົກປ້ອງສິດ-ການຮຽກຮ້ອງຄ່າເສຍຫາຍ**

**ກ) ການປົກປ້ອງສິດ**

19.12 ຜູ້ປະກັນໄພຮັບຮອງປົກປ້ອງສິດ ໃຫ້ແກ່ຜູ້ໄດ້ຮັບການປະກັນໄພຕໍ່ຫນ້າສານອາຍາ ຫຼື ຄະນະກໍາມະການທີ່ມີຫນ້າທີ່ຖອນໃບອະນຸຍາດຂັບຂີ່ ເຊິ່ງຜູ້ໄດ້ຮັບການປະກັນໄພຈະຖືກຮຽກຕົວໄປໃຫ້ການພາຍຫລັງລົດມີປະກັນໄພເກີດອຸປະຕິເຫດ.

**ຂ) ການຮຽກຮ້ອງຄ່າເສຍຫາຍ**

19.13 ຜູ້ປະກັນໄພຮັບປະກັນວ່າຈະຮຽກຮ້ອງເຈລະຈາກັບ ຫຼື ຮ້ອງຟ້ອງຕໍ່ສານ ຕໍ່ບຸກຄົນທີ່ສາມຊຶ່ງເປັນຜູ້ຮັບຜິດຊອບຕໍ່ອຸປະຕິເຫດເພື່ອທວງເອົາຄ່າເສຍຫາຍດ້ານຮ່າງກາຍ ແລະ ວັດຖຸແກ່ຜູ້ໄດ້ຮັບການປະກັນໄພ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: Info@apa.com.la

19.14 ໃນທັງສອງກໍລະນີ ຜູ້ປະກັນໄພເປັນຜູ້ຮັບພາລະກ່ຽວກັບຄ່າໃຊ້ຈ່າຍ ແລະ ຄ່າທໍານຽມສອບສວນ, ຄ່າຊ່ຽວຊານ ແລະ ຄ່າທະນາຍຄວາມ ແລະ ຄ່າທໍານຽມສານ ແຕ່ຈະບໍ່ຊໍາລະຄ່າປັບໄໝ ແລະ ຄ່າທໍານຽມສານທີ່ເປັນສ່ວນເພີ່ມເຕີມ.

19.15 ຈໍານວນເງິນຄ່າເສຍຫາຍ ແມ່ນຜູ້ປະກັນໄພ ແລະ ຜູ້ໄດ້ຮັບການປະກັນໄພຕົກລົງກັນກໍານົດໄວ້ ເຊິ່ງໄດ້ສະຫງວນສິດທີ່ຈະຢຸດຕິການຮ້ອງຟ້ອງຕໍ່ບຸກຄົນທີ່ສາມ ຫຼື ເລີກລົ້ມການຮຽກຮ້ອງເມື່ອເຫັນວ່າການຮຽກຮ້ອງບໍ່ບັນລຸຜົນໄດ້ ແລະ ເມື່ອເຫັນວ່າການສູ້ຄະດີຢູ່ໃນທ່າປະລາໄຊ ແລະ ເຫັນວ່າການສະເໜີຂອງບຸກຄົນທີ່ສາມແມ່ນສົມເຫດສົມຜົນ.

19.16 ທຸກໆການຂັດແຍ່ງ ທີ່ພົວພັນກັບຂໍ້ທີ 19.17 ຈະຕ້ອງໄດ້ຮັບການແກ້ໄຂດ້ວຍການຕັດສິນຂອງກໍາມະການຄົນດຽວ ຊຶ່ງຈະຕ້ອງໄດ້ຮັບການແຕ່ງຕັ້ງຢ່າງເປັນເອກະສັນ ຈາກຄູ່ກໍລະນີທັງສອງຝ່າຍ, ຫຼືໃນກໍລະນີທີ່ບໍ່ສາມາດຕົກລົງກັນໄດ້ ກໍ່ແມ່ນມອບໃຫ້ປະທານສານປະຊາຊົນປະຈໍາເຂດ ບ່ອນທີ່ຜູ້ທີ່ໄດ້ຮັບການປະກັນໄພໄດ້ອາໃສຢູ່ ເປັນຜູ້ຕັດສິນ, ສໍາລັບຄ່າໃຊ້ຈ່າຍ ຄ່າທານຽມຕ່າງໆນັ້ນ ແຕ່ລະຝ່າຍຈ່າຍຄົນລະເຄິ່ງ.

19.17 ຖ້າວ່າຜູ້ຕັດສິນ ໄດ້ມີຄວາມເຫັນໄປແລ້ວ, ແຕ່ຜູ້ໄດ້ຮັບການປະກັນໄພກໍ່ຍັງສືບຕໍ່ສູ້ດໍາເນີນຄະດີດ້ວຍຕົນເອງແລ້ວ ຮັບການແກ້ໄຂທີ່ດີກວ່າ, ຜູ້ປະກັນໄພຈະຕ້ອງໄດ້ໃຊ້ແທນຄືນລາຍຈ່າຍທີ່ເປັນພາລະຂອງຜູ້ກ່ຽວຕາມໃບຢັ້ງຢືນລາຍຈ່າຍຕົວຈິງທີ່ຖືກຕ້ອງ ແລະ ຢູ່ໃນຂອບເຂດທີ່ໄດ້ກໍານົດໄວ້ໃນເງື່ອນໄຂພິເສດ, ຊຶ່ງຈໍານວນຄ່າໃຊ້ຈ່າຍລ່ວງໜ້າດັ່ງກ່າວນັ້ນບໍ່ສາມາດຮຽກເກັບຄືນມາຄູ່ກໍລະນີໄດ້.

**4) ຫຼັກການລວມກ່ຽວກັບການປະກັນໄພອື່ນ**

19.18 ໃນກໍລະນີທີ່ມີສັນຍາອື່ນເຊິ່ງໃຫ້ການຄຸ້ມກັນການສູນເສຍ, ການເປ່ເພ ຫຼື ຄວາມຮັບຜິດຊອບອັນດຽວກັນໃຫ້ລົດຄັນດັ່ງກ່າວ, ບໍລິສັດຈະຈ່າຍຕາມອັດຕາສ່ວນຂອງຄວາມສູນເສຍ, ເປ່ເພເສຍຫາຍ ຫຼື ລາຍຈ່າຍອື່ນໆ.

**ມາດຕາ 20. ກໍານົດເວລາການຈ່າຍສິນປະກັນໄພ**

20.1 ບໍລິສັດປະກັນໄພຕ້ອງຈ່າຍສິນປະກັນໄພໃຫ້ພາຍໃນກໍາຫນົດ 45ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານທີ່ກ່ຽວພັນກັບການຂໍທົດແທນຄືນທີ່ຄົບຖ້ວນ ແລະ ຖືກຕ້ອງ

20.2 ການລັກ

ໃນກໍລະນີລົດທີ່ມີປະກັນໄພຖືກລັກ ຜູ້ໄດ້ຮັບການປະກັນໄພ ມີສິດຮຽກຮ້ອງໃຫ້ຜູ້ປະກັນໄພຈ່າຍສິນປະກັນໄພໄດ້ພາຍໃນ 30 ວັນນັບແຕ່ມື້ແຈ້ງຄວາມເສຍຫາຍ.

ຖ້າວ່າຊອກລົດຄັນທີ່ຖືກລັກໄປກັບຄືນມາໄດ້, ເງື່ອນໄຂການທົດແທນຄືນຈະປະຕິບັດຕາມຫຼັກການດັ່ງນີ້:

1. ກໍລະນີ ໄດ້ລົດທີ່ເສຍມາກ່ອນ ການຈ່າຍສິນປະກັນໄພ ແລະ ກ່ອນກໍານົດ 30 ວັນ ທີ່ກໍານົດໄວ້ຂ້າງເທິງນີ້, ຜູ້ໄດ້ຮັບການປະກັນໄພ ຕ້ອງໃຫ້ສັນຍາວ່າຈະຮັບເອົາລົດຄືນເປັນກໍາມະສິດຂອງຕົນ, ຜູ້ປະກັນໄພຈະຈ່າຍຄ່າເສຍຫາຍ ແລະ ການໃຊ້ຈ່າຍອື່ນທີ່ມີການຢັ້ງຢືນເທົ່ານັ້ນ.

2. ໃນເມື່ອໄດ້ລົດທີ່ເສຍໄປຄືນມາກ່ອນ ການຈ່າຍສິນປະກັນໄພ ແຕ່ໄດ້ຄືນຫຼັງຈາກ 30 ວັນນັບແຕ່ມື້ແຈ້ງການເສຍຫາຍ ຈະປະຕິບັດດັ່ງນີ້: ຖ້າວ່າຜູ້ປະກັນໄພບໍ່ໄດ້ມີການຈ່າຍສິນປະກັນໄພ ໃຫ້ຜູ້ໄດ້ຮັບການປະກັນໄພທີ່ຮຽກຮ້ອງມານັ້ນ, ຜູ້ໄດ້ຮັບການປະກັນໄພ ມີສິດເລືອກວ່າ: ຈະເອົາລົດ ຄັນດັ່ງກ່າວນັ້ນຄືນຕາມເງື່ອນໄຂທີ່ໄດ້ກ່າວໄວ້ໃນຂໍ້ທີ 20.2 (1) ຂ້າງເທິງນັ້ນ ຫຼື ຈະມອບລົດຄັນດັ່ງກ່າວນັ້ນໃຫ້ຜູ້ປະກັນໄພ, ປະກັນໄພຈະຕ້ອງຈ່າຍສິນປະກັນໄພ ໃຫ້ຜູ້ໄດ້ຮັບການປະກັນຕາມຈໍານວນທັງໝົດທີ່ຈະຕ້ອງຈ່າຍ ຕາມເນື້ອໃນການຄຸ້ມກັນ "**ຊ**" - ການລັກ

3. ໃນເມື່ອຊອກລົດຄືນມາໄດ້ ພາຍຫຼັງການຈ່າຍສິນປະກັນໄພແລ້ວພາຍໃນ 30 ວັນ ຫລັງຈາກຜູ້ໄດ້ຮັບການປະກັນໄພໄດ້ຮັບຊາບການໄດ້ລົດຄັນດັ່ງກ່າວຄືນມາ, ຜູ້ໄດ້ຮັບການປະກັນໄພມີສິດເລືອກຮັບເອົາລົດຄືນເປັນກໍາມະສິດຂອງຕົນໂດຍສົ່ງສິນປະກັນໄພຄືນໃຫ້ຜູ້ປະກັນໄພແຕ່ຫັກຄ່າເສຍຫາຍ ແລະ ລາຍຈ່າຍອື່ນທີ່ໄດ້ຮັບການຄຸ້ມກັນນັ້ນອອກ.

**ມາດຕາ 21. ການແທນສິດ - ການຮຽກຮ້ອງຄ່າເສຍຫາຍພາຍຫຼັງການເສຍຫາຍເກີດຂຶ້ນ**

21.1 ຜູ້ປະກັນໄພຈະໄດ້ຮັບສິດໃນການແທນສິດຜູ້ໄດ້ຮັບການປະກັນໄພ ໃນການຮຽກຮ້ອງເອົາສິນປະກັນໄພທີ່ຕົນເອງໄດ້ຈ່າຍໄປໂດຍໃຊ້ສິດ ແລະ ການດໍາເນີນການທາງກົດຫມາຍຂອງຜູ້ໄດ້ຮັບການປະກັນໄພຕໍ່ກັບບຸກຄົນທີ່ຕ້ອງຮັບຜິດຊອບໃນອຸປະຕິເຫດດັ່ງກ່າວ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

ຜູ້ປະກັນໄພບໍ່ມີສິດດໍາເນີນການຮຽກຮ້ອງໃດໆ ຕໍ່ບຸກຄົນທີ່ເປັນຍາດພີ່ນ້ອງສາຍຕັ້ງ, ສາຍຂວາງ, ຕໍ່ບຸກຄົນທີ່ໄດ້ຮັບການມອບໝາຍໃຫ້ເຮັດວຽກແທນ, ພະນັກງານຂອງຜູ້ໄດ້ຮັບການປະກັນໄພ ຫຼື ບຸກຄົນທີ່ຢູ່ເຮືອນຫຼັງດຽວກັນກັບຜູ້ໄດ້ຮັບການປະກັນໄພເປັນປະຈໍາເວັ້ນເສຍແຕ່ບຸກຄົນເຫຼົ່ານັ້ນຫາກມີເຈຕະນາກໍ່ເຫດຂຶ້ນ.

21.2 ຖ້າຜູ້ປະກັນໄພ ບໍ່ສາມາດດໍາເນີນການແທນສິດເພື່ອຜົນປະໂຫຍດຂອງຕົນໄດ້ ຍ້ອນການກະທໍາຂອງຜູ້ຊື້ປະກັນໄພ ແລະ/ຫຼື ຜູ້ໄດ້ຮັບການປະກັນໄພ ຫຼື ຜູ້ຕາງໜ້າຂອງເຂົາເຈົ້າ, ຜູ້ປະກັນໄພກໍຈະຢຸດຕິການຄຸ້ມກັນ ເຖິງແມ່ນວ່າການແທນສິດຄວນຈະດໍາເນີນໄດ້ກໍຕາມ.

## ພາກທີ 4 : ລະບຽບກ່ຽວກັບສັນຍາປະກັນໄພ

### ມາດຕາ 22. ການເຮັດສັນຍາ ແລະ ຜົນບັງຄັບຂອງສັນຍາ

22.1 ໃບສະເໜີເອົາການປະກັນໄພ ບໍ່ແມ່ນສັນຍາຜູກພັນລະຫວ່າງສອງຝ່າຍ, ມີພຽງສັນຍາປະກັນໄພ ແລະ/ຫຼື ໃບທະບຽນປະກັນໄພທີ່ເປັນຫຼັກຖານຢັ້ງຢືນຂໍ້ຜູກພັນລະຫວ່າງສອງຝ່າຍ.

22.2 ສັນຍາປະກັນໄພຈະມີຄວາມຖືກຕ້ອງສົມບູນໂດຍແທ້ ນັບແຕ່ສອງຝ່າຍໄດ້ລົງລາຍເຊັນ. ສັນຍາປະກັນໄພຈະເລີ້ມຕົ້ນນັບຈາກວັນເລີ້ມຄຸ້ມກັນຂອງສັນຍາ ແລະ ເວລາ ແລະ ຈະດໍາເນີນໄປຈົນເຖິງວັນໝົດສັນຍາຕາມທີ່ກໍານົດໄວ້ ໃນເງື່ອນໄຂສະເພາະ.

22.3 ລະບຽບການອັນດຽວກັນນີ້ ຈະນໍາໃຊ້ກັບທຸກໆເອກະສານດັດແກ້ເພີ່ມເຕີມໃສ່ສັນຍາປະກັນໄພ.

### ມາດຕາ 23. ອາຍຸຂອງສັນຍາປະກັນໄພ

23.1 ສັນຍາຈະໝົດອາຍຸລົງຕາມກໍານົດເວລາທີ່ລະບຸໄວ້ໃນເງື່ອນໄຂສະເພາະ.

23.2 ບໍລິສັດຈະບໍ່ມີການຜູກມັດໃຫ້ມີການຕໍ່ສັນຍາ ແລະ ບໍ່ແມ່ນໜ້າທີ່ຂອງບໍລິສັດທີ່ຈະແຈ້ງໃຫ້ມີການຕໍ່ສັນຍາ ແລະ ບໍລິສັດຈະບໍ່ຮັບຜິດຊອບຕໍ່ການສູນເສຍໃດໆທີ່ເກີດຂຶ້ນພາຍຫຼັງສັນຍາສະບັບນີ້ໄດ້ໝົດອາຍຸລົງ.

### ມາດຕາ 24. ການຍົກເລີກສັນຍາປະກັນໄພ

ສັນຍາອາດຈະມີການຍົກເລີກ ກ່ອນວັນສິ້ນສຸດອາຍຸຕາມປົກກະຕິຕາມເງື່ອນໄຂຕໍ່ໄປນີ້:

24.1 ໂດຍຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພ

ກ. ໃນແຕ່ລະປີ, ໃນຂອບສັນຍາທີ່ມີຜົນບັງຄັບໃຊ້,ໂດຍຕ້ອງແຈ້ງໃຫ້ອີກຝ່າຍໜຶ່ງຮູ້ລ່ວງໜ້າຢ່າງໜ້ອຍໜຶ່ງເດືອນ

ຂ. ໃນກໍລະນີມີການໂອນກໍາມະສິດລົດທີ່ມີປະກັນໄພ

ຄ. ກໍລະນີທີ່ມີເຫດການໃດໜຶ່ງເກີດຂຶ້ນເຊັ່ນ: ເມື່ອຜູ້ຊື້ປະກັນໄພ ຫຼື ຜູ້ໄດ້ຮັບການປະກັນໄພຫາກມີການປ່ຽນແປງທີ່ຢູ່, ປ່ຽນແປງສະຖານະສົມລົດ, ປ່ຽນແປງອາຊີບ, ເຂົ້າບໍານານ ຫຼື ຢຸດເຊົາວຽກວິຊາຊີບຂອງຕົນຢ່າງສິ້ນເຊີງ.

24.2 ໂດຍສືບທອດມໍລະດົກ ຫຼື ຜູ້ປະກັນໄພ

ກ. ໃນກໍລະນີຫາກມີການໂອນກໍາມະສິດລົດ ທີ່ມີປະກັນໄພ ເນື່ອງຈາກຜູ້ຊື້ປະກັນໄພ ຫຼື ເຈົ້າຂອງລົດທີ່ໄດ້ຮັບການປະກັນໄພເສຍຊີວິດ.

24.3 ໂດຍຜູ້ປະກັນໄພ

ກ. ໃນກໍລະນີ ຜູ້ໄດ້ຮັບການປະກັນໄພ ບໍ່ເສຍຄ່າປະກັນໄພ ດັ່ງລະບຸໄວ້ໃນມາດຕາ 16.3

ຂ. ໃນກໍລະນີລົດມີປະກັນໄພ ມີຄວາມສ່ຽງເພີ່ມຂຶ້ນ.

ຄ. ໃນກໍລະນີ ມີການເມີນເສີຍ ຫຼື ແຈ້ງຂໍ້ມູນບໍ່ຖືກຕ້ອງ ຕາມສະພາບຂອງລົດ ໃນເວລາເຊັນເອົາປະກັນໄພ ຫຼືໃນລະຫວ່າງ ສັນຍາປະກັນໄພ.

ງ. ພາຍຫລັງ ການເສຍຫາຍເກີດຂຶ້ນ ຜູ້ຊື້ປະກັນໄພ ມີສິດຍົກເລີກສັນຍາອື່ນ ຊຶ່ງຕົນໄດ້ເຊັນນໍາຜູ້ປະກັນໄພ.

ຈ. ໃນກໍລະນີຜູ້ຊື້ປະກັນໄພຖືກຢຶດຊັບ ຫຼື ລົ້ມລະລາຍ ຫຼື ຜູ້ຊື້ປະກັນໄພ ຖືກຕັດສິນລົງໂທດຕາມກົດໝາຍ.

24.4 ໂດຍຜູ້ຊື້ປະກັນໄພ

ກ. ໃນກໍລະນີ ທີ່ສະພາບຄວາມສ່ຽງໄພເພີ້ມດັ່ງທີ່ໄດ້ກ່າວໄວ້ ໃນໃບປະກັນໄພນັ້ນ ຫາກໝົດສິ້ນໄປ. ແຕ່ເວລາຜູ້ປະກັນໄພ ບໍ່ຍິນຍອມລົດຄ່າປະກັນໄພ ໃຫ້ແທດເໝາະກັບສະພາບຕົວຈິງ.

ຂ. ໃນກໍລະນີມີການຢຸດເຊົາກິດຈະການ ຫຼື ຍຸບບໍລິສັດ.

ຄ. ໃນກໍລະນີ ຜູ້ປະກັນໄພຍົກເລີກສັນຍາອື່ນໆ ຂອງຜູ້ເອົາປະກັນໄພ ພາຍຫລັງການເສຍຫາຍເກີດຂຶ້ນ.
ງ. ໃນກໍລະນີມີການພິຈາລະນາຄ່າປະກັນໄພ ຄືນໃໝ່

24.5 ຍ້ອນຜູ້ຊື້ປະກັນໄພ ມີໜີ້ສິນຢ່າງລົ້ນເຫຼືອ.
ກ. ໃນກໍລະນີມີການຍຶດຊັບສິນຂອງຜູ້ຊື້ປະກັນໄພ ຫຼື ຖືກລົ້ມລະລາຍ.

24.6 ການຍົກເລີກສັນຍາປະກັນໄພໂດຍບໍ່ມີການຕໍ່ວ່າ
ກ. ໃນກໍລະນີລົດທີ່ມີປະກັນໄພ ຫາກສູນເສຍທັງໝົດຈາກເຫດການທີ່ບໍ່ມີການຄຸ້ມກັນ.
ຂ. ໃນກໍລະນີຫາກມີການໂອນກໍາມະສິດລົດທີ່ມີປະກັນໄພ, ເວັ້ນເສຍແຕ່ວ່າຜູ້ໄດ້ຮັບການປະກັນໄພໄດ້ແຈ້ງການໂອນກໍາມະສິດລົດມາຍັງຜູ້ປະກັນໄພ ໂດຍຜູ້ປະກັນໄພໄດ້ອອກເຮັດສັນຍາເພີ່ມໃນການປ່ຽນຊື່ຜູ້ໄດ້ຮັບການປະກັນໄພ, ຄ່າທານຽມໃນການອອກສັນຍາເພີ້ມ 50,000ກີບ,
ຄ. ໃນກໍລະນີຜູ້ປະກັນໄພ ຖອນຄໍາຕົກລົງຂອງຕົນ.
ງ. ໃນກໍລະນີເຈົ້າໜ້າທີ່ເກນລົດທີ່ມີປະກັນໄພໄປຮັບໃຊ້ຕາມເງື່ອນໄຂທີ່ບົ່ງໄວ້ໃນກົດໝາຍ.

24.7 ໃນກໍລະນີ ການຍົກເລີກສັນຍາ ລະຫວ່າງປະຕິບັດສັນຍາໄດ້ໄລຍະໜຶ່ງ, ຜູ້ຊື້ປະກັນໄພບໍ່ຕ້ອງຮັບຜິດຊອບຈ່າຍຄ່າປະກັນໄພ ໃນສ່ວນທີ່ກ່ຽວພັນກັບໄລຍະຫຼັງການຍົກເລີກສັນຍາ. ຖ້າຫາກວ່າຜູ້ໄດ້ຮັບການປະກັນໄພໄດ້ຈ່າຍລ່ວງໜ້າແລ້ວ ກໍ່ຕ້ອງສົ່ງຄ່າປະກັນໄພ ສ່ວນທີ່ກ່າວມານັ້ນຄືນໃຫ້ແກ່ຜູ້ຊື້ປະກັນໄພ.

24.8 ໃນກໍລະນີທີ່ ຜູ້ຊື້ປະກັນໄພ ຫຼື ຜູ້ສືບທອດມໍລະດົກ ມີສິດຍົກເລີກສັນຍາປະກັນໄພ ໂດຍແຈ້ງການທາງຈົດໝາຍລົງທະບຽນ ຫຼື ທາງຈົດໝາຍສົ່ງໃຫ້ເຊັນຮັບເອົາໄປທີ່ຫ້ອງການໃຫຍ່ຂອງບໍລິສັດປະກັນໄພ ຫຼື ເຖິງຫ້ອງການ ຂອງສາຂາຕົວແທນທີ່ຮັບຜິດຊອບຕໍ່ສັນຍາປະກັນ ຫຼື ໂດຍການສົ່ງ ເອກະສານນອກນິຕິກໍາ.

ຖ້າຜູ້ປະກັນໄພຕ້ອງການຍົກເລີກສັນຍາ ກໍ່ຕ້ອງແຈ້ງໃຫ້ຜູ້ຊື້ປະກັນໄພ ຊາບດ້ວຍຈົດໝາຍລົງທະບຽນ ສົ່ງໃຫ້ຜູ້ຊື້ປະກັນໄພ.

24.9 ການຍົກເລີກສັນຍາປະກັນໄພຕາມກໍລະນີທີ່ກ່າວໄວ້ລຸ່ມນີ້:
ມາດຕາ 24.1 (ກ) - ຍົກເລີກຕາມວັນຄົບຮອບອາຍຸຂອງສັນຍາ.
ມາດຕາ 24.3 (ກ) - ຍົກເລີກໃນກໍລະນີບໍ່ຈ່າຍຄ່າປະກັນໄພ .
ມາດຕາ 24.4 (ງ) - ຍົກເລີກໂດຍຜູ້ຊື້ປະກັນໄພ ໃນເມື່ອຜູ້ປະກັນໄພໄດ້ດັດແກ້ຄ່າປະກັນໄພ.

ກໍານົດເວລາການແຈ້ງຍົກເລີກສັນຍາໃຫ້ຊາບລ່ວງໜ້ານັ້ນ ແມ່ນໃຫ້ເລີ່ມນັບແຕ່ມື້ສົ່ງເອກະສານແຈ້ງການເປັນຕົ້ນໄປ;

24.10 ພາຍໃຕ້ກໍລະນີໃດໆ ກໍ່ຕາມທີ່ກ່າວມາຂ້າງເທິງນີ້ (ຍົກເວັ້ນ ມາດຕາ 24.3 ກ)
ການຍົກເລີກສັນຍາຈະແມ່ນໃນກໍານົດ 30 ວັນ ຫຼັງຈາກວັນທີ່ແຈ້ງບອກ ຈາກຝ່າຍໃດຝ່າຍໜຶ່ງກ່ຽວກັບການຍົກເລີກດັ່ງກ່າວ ຫຼື ກ່ອນວັນກໍານົດດັ່ງກ່າວ ຖ້າມີການຕົກລົງເຫັນດີເປັນລາຍລັກອັກສອນຈາກຄູ່ສັນຍາທັງສອງຝ່າຍນັ້ນ ເຊິ່ງບໍລິສັດຈະມີການສົ່ງຄືນຄ່າປະກັນໄພ ໂດຍມີລາຍລະອຽດລຸ່ມນີ້:

ຫມາຍເຫດ: ກໍລະນີທີ່ບໍລິສັດຈະສົ່ງຄ່າປະກັນໄພ ລົດຄັນດັ່ງກ່າວແມ່ນຈະຕ້ອງບໍ່ເຄີຍຮຽກຮ້ອງຄ່າເສຍຫາຍຈາກອຸປະຕິເຫດມາກ່ອນ(ນອກເໜືອໄດ້ລະບຸໄວ້ໃນເງື່ອນໄຂສະເພາະເປັນຢ່າງອື່ນ)

| ຈໍານວນເດືອນທີ່ຊື້ປະກັນໄພ | 1 ເດືອນ | 2 ເດືອນ | 3 ເດືອນ | 4 ເດືອນ | 5 ເດືອນ | 6 ເດືອນ |
|---|---|---|---|---|---|---|
| ເປີເຊັນທີ່ບໍລິສັດຈະຈ່າຍຄ່າປະກັນໄພ ຄືນ | 70% | 60% | 50% | 40% | 30% | 0% |

**ມາດຕາ 25. ການໂອນກໍາມະສິດຍານພາຫະນະ**

**1) ການເສຍຊີວິດຂອງຜູ້ຊື້ປະກັນໄພ**

25.1 ໃນກໍລະນີ ຜູ້ຊື້ປະກັນໄພຫາກເສຍຊີວິດ ບໍລິສັດປະກັນໄພກໍ່ຈະໄດ້ໂອນ ການປະກັນໄພ ໃຫ້ເປັນກໍາມະສິດຂອງຜູ້ສືບທອດມໍລະດົກລົດຄັນນັ້ນ ໂດຍບໍ່ມີການຕໍ່ວ່າ. ໃນກໍລະນີຜູ້ສືບມໍລະດົກ ຕ້ອງການຍົກເລີກສັນຍາປະກັນໄພ ເຂົາຈະຕ້ອງຈ່າຍຄ່າປະກັນໄພ ເທົ່າກັບຄ່າປະກັນໄພ ໃນສ່ວນທີ່ກ່ຽວພັນກັບໄລຍະຂອງການຍົກເລີກສັນຍາ.

**2) ການໂອນກໍາມະສິດຍານພາຫະນະ**



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

25.2 ໃນກໍລະນີ ມີການໂອນກຳມະສິດລົດ ສັນຍາປະກັນໄພ ຈະຖືກຍົກເລີກໂດຍບໍ່ມີການຕໍ່ອາ. ເວັ້ນແຕ່ໄດ້ປະຕິບັດຕາມ ຂໍ້24.6(ຂ)

**ມາດຕາ 26. ອາຍຸຄວາມໃນການຮ້ອງຟ້ອງ**

26.1 ທຸກການຮ້ອງຟ້ອງທີ່ມາຈາກສັນຍາສະບັບນີ້ມີກຳນົດດຳເນີນຄະດີໄດ້ 3 ປີຕາມຂໍ້ຄວາມທີ່ກຳນົດໄວ້ໃນ ມາຕາ 32 ຂອງກົດໝາຍ ວ່າດ້ວຍການປະກັນ ເລກທີ່ 78/ສພຊ ລົງວັນທີ່ 29 ພະຈິກ 2019 ນັບແຕ່ມື້ເຫດການໄດ້ເກີດຂຶ້ນ.

**ມາດຕາ 27. ສານທີ່ມີອຳນາດພິຈາລະນາຄະດີ**

27.1 ສານທີ່ມີອຳນາດ ພິຈາລະນາຂໍ້ຂັດແຍ່ງລະຫວ່າງຜູ້ໄດ້ຮັບການປະກັນໄພ ກັບ ຜູ້ປະກັນໄພ ແມ່ນສານບ່ອນທີ່ຜູ້ໄດ້ຮັບການປະກັນໄພນັ້ນຕັ້ງບ້ານເຮືອນຢູ່.
ໃນກໍລະນີການປະກັນໄພກ່ຽວກັບ ການເສຍຫາຍຊັບສິນ ກໍ່ແມ່ນ ສານບ່ອນທີ່ຊັບສິນນັ້ນຕັ້ງຢູ່.
ສາລັບການປະກັນໄພກ່ຽວກັບອຸປະຕິເຫດ ກໍ່ແມ່ນສານທີ່ອຸປະຕິເຫດນັ້ນເກີດຂຶ້ນ.

## ພາກທີ 5 : ເອກະສານຊ້ອນທ້າຍ

**ເອກະສານຊ້ອນທ້າຍ 1**

I. ຕາຕະລາງອັດຕາພິການຖາວອນທັງໝົດ (100%)

- ກໍລະນີເສຍຊີວິດ
- ສູນເສຍຂາທັງສອງເບື້ອງ
- ສູນເສຍມືທັງສອງເບື້ອງ ຫຼື ທຸກໆນິ້ວມື ແລະ ທັງນິ້ວໂປ້ທັງສອງເບື້ອງ
- ສູນເສຍການເບິ່ງເຫັນຂອງຕາທັງສອງເບື້ອງ
- ສູນເສຍແຂນເບື້ອງໜຶ່ງ ຮອດບ່າໄຫຼ່
- ສູນເສຍແຂນເບື້ອງໜຶ່ງລະຫວ່າງບ່າໄຫຼ່ຫາສອກ
- ສູນເສຍແຂນເບື້ອງໜຶ່ງຮອດແຂນສອກ
- ສູນເສຍແຂນເບື້ອງໜຶ່ງລະຫວ່າງແຂນສອກຫາຂໍ້ມື
- ສູນເສຍແຂນເບື້ອງໜຶ່ງທີ່ຂໍ້ມື
- ສູນເສຍຂາເບື້ອງໜຶ່ງຮອດສະໂພກ
- ສູນເສຍຂາເບື້ອງໜຶ່ງ ລະຫວ່າງຫົວເຂົ່າຫາສະໂພກ
- ສູນເສຍຂາເບື້ອງໜຶ່ງ ແຕ່ຫົວເຂົ່າລົງໄປ
- ສູນເສຍຕາເບື້ອງໜຶ່ງ
- ສູນເສຍສະຕິບໍ່ສາມາດປິ່ນປົວຄືນໄດ້ ແລະ ສະເພາະຈາກອຸປະຕິເຫດທີ່ໄດ້ຄ້ຳປະກັນໄວ້

II. ຕາຕະລາງການພິການຖາວອນບາງສ່ວນ

| | |
|---|---|
| • ເສຍນິ້ວໂປ້, ນິ້ວຊີ້ | 30% |
| • ເສຍນິ້ວມືສາມນິ້ວ, ນັບທັງນິ້ວໂປ້ ຫຼື ນິ້ວຊີ້ | 25% |
| • ເສຍນິ້ວມືສາມນິ້ວ, ບໍ່ນັບນິ້ວໂປ້ ຫຼື ນິ້ວຊີ້ | 20% |
| • ເສຍນິ້ວໂປ້ ແລະ ອີກໜຶ່ງນິ້ວທີ່ບໍ່ແມ່ນນິ້ວຊີ້ | 25% |
| • ເສຍນິ້ວຊີ້ ແລະ ອີກນິ້ວທີ່ບໍ່ແມ່ນນິ້ວໂປ້ | 20% |
| • ເສຍນິ້ວໂປ້ໜຶ່ງນິ້ວ | 20% |
| • ເສຍນິ້ວຊີ້ໜຶ່ງນິ້ວ | 15% |
| • ເສຍນິ້ວກາງ, ນິ້ວນາງ ຫຼື ນິ້ວກ້ອຍ | 10% |
| • ເສຍ ນິ້ວນາງ ແລະ ນິ້ວກ້ອຍ | 15% |
| • ຄາງກະໄຕເບື້ອງລຸ່ມໃຊ້ການບໍ່ໄດ້ | 30% |
| • ຕາເບື້ອງໜຶ່ງສູນເສຍການເບິ່ງເຫັນເຄິ່ງໜຶ່ງ | 25% |
| • ຫູໜວກທັງສອງເບື້ອງ | 40% |
| • ຫູໜວກເບື້ອງໜຶ່ງ | 10% |
| • ຂາ ຫຼື ຕີນເບື້ອງໜຶ່ງຜິດຈາກສະພາບເດີມ | 25% |

- ໝາກບ້າຫົວເຂົ່າເບື້ອງໜຶ່ງແຕກ 20%
- ແຂນ ຫຼື ຂາ ເບື້ອງລຸ່ມສັ້ນເຂົ້າຢ່າງໜ້ອຍ 5 ຊມ 15%
- ເສຍນິ້ວໂປ້ຕີນໜຶ່ງນິ້ວ 10%
- ເສຍນິ້ວຕີນນິ້ວອື່ນໜຶ່ງນິ້ວ ນອກຈາກນິ້ວໂປ້ 5%

ການພິການອື່ນໆທີ່ບໍ່ໄດ້ກ່າວມາຂ້າງເທິງນີ້ເຖິງວ່າຈະມີຄວາມສຳຄັນໜ້ອຍກໍ່ຕາມແຕ່ວ່າຈະໄດ້ຮັບສິນປະກັນໄພຕາມອັດຕາສ່ວນຂອງການບາດເຈັບໂດຍທຽບໃສແຕ່ລະກໍລະນີ ທີ່ກ່າວມາຂ້າງເທິງນີ້ແລະບໍ່ໄດ້ຈຳແນກອາຊີບຂອງຜູ້ຖືກເຄາະຮ້າຍ.

ການໃຊ້ການບໍ່ໄດ້ຢ່າງສິ້ນເຊີງຂອງອະໄວຍະວະໜຶ່ງໃຫ້ຖືວ່າເປັນການສູນເສຍທັງໝົດຂອງອະໄວຍະວະນັ້ນ.

ສິນປະກັນໄພທັງໝົດທີ່ຈະຕ້ອງຈ່າຍ ສໍາລັບການເສຍຫາຍອິງຄະ ທີ່ເກີດຈາກອຸປະຕິເຫດອັນດຽວກັນ ຈະບໍ່ເກີນກາຍມູນຄ່າທັງໝົດທີ່ໄດ້ກຳນົດໃນກໍລະນີພິການຖາວອນທັງໝົດ.

ການຮວມກັນຂອງຈຳນວນສ່ວນຮ້ອຍທີ່ຈະຈ່າຍໃນອຸປະຕິເຫດໜຶ່ງຄັ້ງ ຈະບໍ່ເກີນ 100%.

## ເອກະສານຊ້ອນທ້າຍ 2

### ຂໍ້ກຳນົດໃຫ້ສ່ວນຫຼຸດສຳລັບລົດທີ່ບໍ່ເກີດອຸປະຕິເຫດ

**ມາດຕາ 28. ຄຳນິຍາມ**

28.1 ການໃຫ້ສ່ວນຫຼຸດກ່ຽວກັບລົດບໍ່ເກີດອຸປະຕິເຫດ (NCD) ແມ່ນຂໍ້ກຳນົດໃຫ້ສ່ວນຫຼຸດ ແລະ ການໃຫ້ສ່ວນຫຼຸດນີ້ມີຈຸດປະສົງໃຫ້ລາງວັນແກ່ຜູ້ໄດ້ຮັບການປະກັນໄພຜູ້ທີ່ບໍ່ໄດ້ຮຽກຮ້ອງການທົດແທນຈາກອຸປະຕິເຫດໃນໄລຍະຄຸ້ມກັນຂອງສັນຍາ, ໂດຍຈະໄດ້ຮັບສ່ວນຫຼຸດໃນການຈ່າຍຄ່າປະກັນໄພຂອງການຕໍ່ສັນຍາ.

ຕາຕະລາງການໃຫ້ສ່ວນຫຼຸດປະຕິບັດຕາມຕາຕະລາງດັ່ງລຸ່ມນີ້:

| ປີ/ໄລຍະປະກັນໄພ | | 0 ສັນຍາໃໝ່ | 1 | 2 | 3 | 4 | 5 | 6 | 7 |
|---|---|---|---|---|---|---|---|---|---|
| ອັດຕາຄິດໄລ່ສ່ວນຫຼຸດ | | 0% | 15% | 25% | 35% | 40% | 45% | 50% | 55% |

28.2 ການປະຕິບັດໃຫ້ສ່ວນຫຼຸດ/ບຳເນັດ, ແມ່ນອີງຕາມການແຈ້ງອຸປະຕິເຫດ ຫຼື ມີເຫດໃດໜຶ່ງທີ່ມີທ່າອ່ຽງນຳໄປສູ່ໃຫ້ເກີດມີການແຈ້ງເສຍຫາຍນຳຜູ້ປະກັນໄພ, ພ້ອມທັງໃຫ້ເກີດກະກຽມລາຍຈ່າຍ ຫຼື ຄວາມເປັນໄປໄດ້ທີ່ຈະເກີດມີລາຍຈ່າຍໃດໜຶ່ງໃຫ້ແກ່ຄວາມເສຍຫາຍນັ້ນທີ່ຍັງບໍ່ໄດ້ຮັບການແກ້ໄຂຈາກຜູ້ປະກັນໄພເທື່ອ.

28.3 ນອກຈາກນີ້ການປະຕິບັດ ຂໍ້ກຳນົດອັດຕາສ່ວນຫຼຸດ ຍັງມີຂໍ້ຍົກເວັ້ນນຳກໍລະນີທີ່ມີການຮຽກຮ້ອງທົດແທນພາຍໃຕ້ຫລັກການບໍ່ຖືຄວາມຜິດ ແມ່ນຄວາມເສຍຫາຍທີ່ເກີດພາຍໃຕ້ຄວາມຮັບຜິດຊອບທາງແພ່ງຕໍ່ບຸກຄົນທີ່ສາມພາຍໃຕ້ເງື່ອນໄຂ "ຫຼັກການທີ່ບໍ່ຖືຄວາມຜິດ" ທີ່ມີຄວາມໝາຍວ່າການທົດແທນແບບບັງຄັບໃຫ້ແກ່ບຸກຄົນທີ່ສາມ ຫຼື ຄູ່ກໍລະນີ ເຊິ່ງອຸປະຕິເຫດດັ່ງກ່າວບໍ່ແມ່ນຜູ້ໄດ້ຮັບການປະກັນໄພເປັນຝ່າຍຜິດ.

**ມາດຕາ 29. ຂໍ້ກຳນົດການໃຫ້ສ່ວນຫລຸດໃນກໍລະນີບໍ່ມີການຈ່າຍສິນປະກັນໄພ**

29.1 ໃນກໍລະນີຮອດຄົບອາຍຸຂອງສັນຍາປະກັນໄພ, ອັດຕາສ່ວນຫຼຸດ - ການເພີ່ມຈະປະຕິບັດນຳສັນຍາໃໝ່ຈະໄດ້ປະຕິບັດດັ່ງລຸ່ມນີ້:

ກ) ໃນກໍລະນີທີ່ ບໍ່ມີການແຈ້ງອຸປະຕິເຫດໃນໄລຍະປະກັນໄພໜຶ່ງປີຜ່ານມາ, ອັດຕາສ່ວນຫຼຸດຂອງຜູ້ໄດ້ຮັບການປະກັນໄພຈະໄດ້ເພີ່ມຂຶ້ນຕາມລະດັບແຕ່ລະຂັ້ນສູງສຸດບໍ່ເກີນ 55%.

ຂ) ໃນກໍລະນີຫາກມີການແຈ້ງເສຍຫາຍຂອງອຸປະຕິເຫດແຕ່ລະເທື່ອທີ່ຜູ້ໄດ້ຮັບການປະກັນໄພມີສ່ວນຮັບຜິດຊອບ ໃນໄລຍະຄຸ້ມກັນຂອງສັນຍາປະກັນໄພ ອັດຕາສ່ວນຫຼຸດຂອງຜູ້ໄດ້ຮັບການປະກັນໄພຈະຫຼຸດລົງ ຕາມຕາຕະລາງລຸ່ມນີ້:

| ຈຳນວນອຸປະຕິເຫດ ທີ່ມີສ່ວນຮັບຜິດຊອບໃນຂອບປີປະກັນໄພ | ອັດຕາສ່ວນຫຼຸດ |
|---|---|
| 1ຄັ້ງ | ສ່ວນຫຼຸດ ຫຼຸດລົງ 2 ລະດັບ |
| 2ຄັ້ງ | ສ່ວນຫຼຸດ ຫຼຸດລົງ 4 ລະດັບ |



ທີ່ຢູ່: ໜ່ວຍ 31, ຖະໜົນ ກຳແພງເມືອງ, ບ້ານ ທາດຫລວງໃຕ້, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la

| | |
|---|---|
| ແຕ່ 3ຄັ້ງ ຂຶ້ນໄປ | ສ່ວນຫຼຸດ ເທົ່າກັບ 0 (ສູນ) |

ອັດຕາສ່ວນຫຼຸດຈະບໍ່ຫຼຸດລົງຕໍ່າ່ກວ່າ 0 (ສູນ)

ຄ) ນອກຈາກນີ້ແລ້ວມາດຕານີ້ຍັງປະຕິບັດນຳຄວາມເສຍຫາຍຈາກອຸປະຕິເຫດເຊິ່ງໄດ້ຮັບການແກ້ໄຂແລ້ວ ໂດຍທີ່ບໍ່ມີການຈ່າຍທົດແທນຈາກຜູ້ປະກັນໄພ, ຫຼື ຫາກການທົດແທນຂອງຄວາມເສຍຫາຍດັ່ງກ່າວນັ້ນເປັນສ່ວນຂອງບຸກຄົນທີ່ສາມ ຫຼື ຄູ່ກໍລະນີ ເຊິ່ງພວມຢູ່ໃນການພິຈາລະນາຢູ່ກໍ່ຕາມ, ການປະຕິບັດອັດຕາໃຫ້ສ່ວນຫຼຸດ (ບຳເນັດ) ຂອງຜູ້ໄດ້ຮັບການປະກັນໄພທີ່ກ່າວມານີ້ຈະບໍ່ຖືກກະທົບໃດໆ ຈາກສາເຫດດັ່ງກ່າວ.

29.2 ຖ້າກໍລະນີ ຫາກມີການແຈ້ງເສຍຫາຍໜຶ່ງ ຫຼື ຫຼາຍກ່ວາໜຶ່ງຄັ້ງ ໃນໄລຍະສັນຍາຍັງຄຸ້ມກັນຢູ່ນັ້ນ ເຊິ່ງຄວາມເສຍຫາຍດັ່ງກ່າວຍັງບໍ່ທັນໄດ້ຮັບການແກ້ໄຂເທື່ອກໍ່ຕາມໃນເວລາຕໍ່ສັນຍາໃໝ່ການປະຕິບັດອັດຕາສ່ວນຫຼຸດຈະໄດ້ຖືກຄິດໄຫຼ່ຫຼຸດລົງກ່ອນເຊິ່ງຈະປະຕິບັດຕາມມາດຕາ 28.2 ຂ້າງເທິງນີ້.
ເຖິງຢ່າງໃດກໍ່ຕາມ, ໃນກໍລະນີ ຫາກມີການແຈ້ງເສຍຫາຍໜຶ່ງຄັ້ງ ຫຼື ຫຼາຍຄັ້ງຖືກເປັນໂມຄະແບບເງື່ອນໄຂຕາມມາດຕາ 29.1 (ຄ) ຫຼື ຖ້າແມ່ນໃນກໍລະນີການເສຍຫາຍທີ່ບໍ່ຖືຄວາມຜິດ, ບໍລິສັດຈະດັດແກ້ອັດຕາສ່ວນຫຼຸດໃຫ້ຖືກຕ້ອງແກ່ຜູ້ໄດ້ຮັບການປະກັນໄພພ້ອມທັງຈະໄດ້ຄິດໄລ່ສົ່ງຄ່າປະກັນໄພທີ່ຜິດດ່ຽງຄືນໃຫ້.

29.3 ນອກຈາກນີ້ ການກຳນົດອັດຕາສ່ວນຫຼຸດ - ເພີ່ມ ຍັງສາມາດປະຕິບັດນຳສາເຫດອື່ນໄດ້ອີກເຊັ່ນ: ໃນກໍລະນີ ຫາກມີການແຈ້ງເສຍຫາຍທີ່ໄດ້ຖືກຮັບຮູ້ໂດຍອີງຕາມວັນທີ່ອຸປະຕິເຫດເຊິ່ງຕ່າງໆຈາກວັນທີ ທີ່ແກ້ໄຂ. ການປະຕິບັດໃຫ້ສ່ວນຫຼຸດ ແລະ/ຫຼື ການສົ່ງຄ່າປະກັນໄພທີ່ຜິດດ່ຽງໃຫ້ແກ່ການຕໍ່ສັນຍາໃໝ່ນັ້ນ ການຄິດໄລ່ຈະອີງຕາມວັນທີ່ເກີດອຸປະຕິເຫດ.

29.4 ອີງຕາມມາດຕາ 29.1 (ກ), ການເພີ່ມອັດຕາສວນຫຼຸດ–ເພີ່ມ ສາມາດຄິດໄລ່ໃຫ້ບຳເນັດນຳສັນຍາປະກັນໄພທີ່ມີໄລຍະການຄຸ້ມກັນຕໍ່າສຸດ 9 ເດືອນ ແລະ ສຳລັບສັນຍາທີ່ມີອາຍຸການຄຸ້ມກັນໜ້ອຍກ່ວາໄລຍະເວລາດັ່ງກ່າວ, ເຖິງແມ່ນວ່າຈະບໍ່ມີການແຈ້ງເສຍຫາຍຫຍັງກໍ່ຕາມ ອັດຕາສ່ວນຫຼຸດແມ່ນບໍ່ມີການປ່ຽນແປງ.

29.5 ທຸກໆຄວາມເສຍຫາຍ ທີ່ເກີດຂຶ້ນໃນໄລຍະເວລາການຄຸ້ມກັນຂອງສັນຍາ ຈະຖືກພິຈາລະນາວ່າແມ່ນການແຈ້ງເສຍຫາຍຄືກັນ ແລະ ຈະຖືກປະຕິບັດຕາມມາດຕາ 29.1 (ຂ).

29.6 ໃນກໍລະນີມີການແຈ້ງເສຍຫາຍຂອງການຄຸ້ມກັນທາງເລືອກໃດຂອງສັນຍາປະກັນໄພລົດກໍ່ຕາມຈະຖືວ່າເປັນການແຈ້ງເສຍຫາຍອຸປະຕິເຫດພາຍໃຕ້ສັນຍາປະກັນໄພສະບັບນັ້ນໆ ແລະ ການປະຕິບັດອັດຕາສ່ວນຫຼຸດ-ເພີ່ມ ແມ່ນຈະປະຕິບັດນຳແຕ່ລະຂໍ້ກຳນົດຂອງການຄຸ້ມກັນຂອງສັນຍານັ້ນ. ເຖິງຢ່າງໃດກໍ່ຕາມ, ການແຈ້ງເສຍຫາຍພາຍໃຕ້ຫຼາຍໆ ການຄຸ້ມກັນທີ່ແຕກຕ່າງກັນ ແຕ່ພັດແມ່ນສາເຫດທີ່ເກີດຂຶ້ນດ້ວຍການແຈ້ງເສຍຫາຍຄັ້ງດຽວນັ້ນ ແມ່ນຈະຖືວ່າເປັນການແຈ້ງໜຶ່ງອຸປະຕິເຫດ.

**ມາດຕາ 30. ການໂອນສິດ ການໄດ້ຮັບສ່ວນຫລຸດໃນກໍລະນີບໍ່ມີການຈ່າຍສິນປະກັນໄພ**

30.1 ຜູ້ໄດ້ຮັບການປະກັນໄພສາມາດພິຈາລະນາເບິ່ງສັນຍາຂອງຕົນຄືນ ດ້ວຍການເພີ່ມເຕີມ, ລຶບລ້າງ ຫຼື ປ່ຽນແປງການຄຸ້ມກັນທາງເລືອກໃນເວລາຕໍ່ສັນຍາຄັ້ງໃໝ່ ແລະ ສິດໃນການກະທຳດັ່ງກ່າວ ຈະບໍ່ມີຜົນກະທົບໃດໆ ໃຫ້ແກ່ອັດຕາສ່ວນຫຼຸດເລີຍ.

30.2 ກໍລະນີ ຜູ້ໄດ້ຮັບການປະກັນໄພຕ້ອງການໂອນການປະກັນໄພໄປຫາລົດຄັນອື່ນ, ອັດຕາສ່ວນຫຼຸດກໍ່ຈະສືບຕໍ່ໄດ້ຮັບເໝືອນເດີມ. ຖ້າກໍລະນີລົດຄັນເດີມຍັງປະກັນນຳບໍລິສັດຢູ່ນັ້ນ, ຄ່າປະກັນໄພຂອງລົດຄັນດັ່ງກ່າວນີ້ ຈະຖືກຄິດໄລ່ໃນອັດຕາປົກກະຕິ ໝາຍຄວາມວ່າອັດຕາສ່ວນຫຼຸດແມ່ນ 0%, ແຕ່ຄິດໄລ່ໄປຕາມສ່ວນຂອງໄລຍະເວລາທີ່ຍັງເຫຼືອ ຈາກວັນທີ່ໂອນອັດຕາສ່ວນຫຼຸດນັ້ນ.

30.3 ກໍລະນີທີ່ຜູ້ໄດ້ຮັບການປະກັນໄພມີສັນຍາປະກັນໄພ ນຳບໍລິສັດປະກັນໄພ ທີ່ຈົດທະບຽນຢູ່ ສປປລາວ ແລະ ມີຈຸດປະສົງຍາກຍ້າຍປະກັນໄພ, ບໍລິສັດຈະສືບຕໍ່ໃຫ້ບຳເນັດສ່ວນຫຼຸດທີ່ໄດ້ຮັບມາ ໃຫ້ແກ່ລູກຄ້າຕາມເດີມ (ຫຼື ໃຫ້ອັດຕາສ່ວນຫຼຸດລັກສະນະດຽວກັນກັບທີ່ມີຢູ່ແລ້ວ). ຜູ້ໄດ້ຮັບການປະກັນໄພຈະໄດ້ມີສິດ ໄດ້ຮັບສ່ວນຫລຸດຫຼາຍກ່ວາເກົ່າໄດ້ ໂດຍຕ້ອງສະແດງເອກະສານປະຫວັດການແຈ້ງການຮຽກຮ້ອງເສຍຫາຍທີ່ຜ່ານມາ.

ຈຸດປະສົງຂອງມາດຕານີ້ຍັງຄິດໄລ່ນຳການແຈ້ງຄ່າປະກັນໄພ ໃຫ້ແກ່ສັນຍາຕໍ່ໂດຍຈະອີງຕາມຂໍ້ມູນສ່ວນຫລຸດຂອງຜູ້ໄດ້ຮັບການປະກັນໄພ (ຫຼື ຂໍ້ມູນສ່ວນຫລຸດໃນແບບຮູບອື່ນ) ທີ່ໄດ້ຮັບຈາກບໍລິສັດປະກັນໄພອື່ນຢູ່ໃນ ສປປ ລາວ.

## ເອກະສານຊ້ອນທ້າຍ 3

**ຂໍ້ກຳນົດຄວາມຮັບຜິດຊອບທາງແພ່ງໂດຍບໍ່ຖືຄວາມຜິດ**

ອີງໃສ່ຄຳແນະນຳຂອງລັດຖະມົນຕີກະຊວງການເງິນ ເລກທີ່ 0772/ກງ ລົງວັນທີ່ 24/04/2009, ເອກະສານຊ້ອນທ້າຍສະບັບນີ້ໃຫ້ການຄຸ້ມກັນຕໍ່ຄວາມຮັບຜິດຊອບທາງແພ່ງຂອງບຸກຄົນ ຫຼື ນິຕິບຸກຄົນທີ່ນຳໃຊ້ຍານພາຫະນະແລ່ນດ້ວຍເຄື່ອງຈັກ ລວມທັງລົດພ່ວງ ແລະ ເຄິ່ງລົດພ່ວງ.

ຂໍ້ກຳນົດກ່ຽວກັບຄວາມຮັບຜິດຊອບທາງແພ່ງໂດຍບໍ່ຖືຄວາມຜິດ ຈະໄດ້ປະຕິບັດໃນກໍລະນີທີ່ຜູ້ໄດ້ຮັບການປະກັນໄພບໍ່ແມ່ນຜູ້ຮັບຜິດຊອບ ແຕ່ຈະຄຸ້ມກັນຄວາມເສຍຫາຍທາງດ້ານຮ່າງກາຍເທົ່ານັ້ນ. ຜູ້ປະກັນໄພຈະແກ້ໄຂທົດແທນໃຫ້ແກ່ຜູ້ເຄາະຮ້າຍຕາມຄວາມເສຍຫາຍຕົວຈິງ ແລະ ບໍ່ເກີນຈຳນວນເງິນທີ່ລະບຸໄວ້ຂ້າງລຸ່ມນີ້:

| ການຄຸ້ມກັນ | ວົງເງິນ (ກີບ) |
|---|---|
| ຄວາມເສຍຫາຍທາງຮ່າງກາຍ, ສູງສຸດຕໍ່ອຸປະຕິເຫດໜຶ່ງຄັ້ງ | 10,000,000 |
| – ເສຍຊີວິດ ຫຼື ພິການຖາວອນທັງໝົດ, ສູງສຸດຕໍ່ຄົນ | 3,000,000 |
| – ຄ່າປິ່ນປົວ, ສູງສຸດຕໍ່ຄົນ | 1,800,000 |
| (ລວມທັງສິນປະກັນໄພສໍາລັບຄ່າອອກໂຮງໝໍເຊິ່ງຕ້ອງປິ່ນປົວເກີນ 24 ຊົ່ວໂມງ) | 100,000 |

ຖ້າຫາກສິນປະກັນໄພທີ່ຈະຕ້ອງຈ່າຍໃຫ້ຜູ້ເຄາະຮ້າຍຫາກສູງກ່ວາຂອບເຂດຄຸ້ມກັນນີ້ ແມ່ນຜູ້ໄດ້ຮັບການປະກັນໄພຈະຕ້ອງຮັບຜິດຊອບສ່ວນທີ່ແຕກຕ່າງກັນ.

## ເອກະສານຊ້ອນທ້າຍ 4

**ຄວາມຮັບຜິດຊອບທາງແພ່ງຕາມກົດໝາຍ**

ເອກະສານຊ້ອນທ້າຍສະບັບນີ້ແມ່ນເພີ່ມເຕີມເອກະສານຊ້ອນທ້າຍສະບັບ 3 - ຂໍ້ກຳນົດຄວາມຮັບຜິດຊອບທາງແພ່ງຕາມກົດໝາຍຂອບເຂດການຄຸ້ມກັນ ດັ່ງລຸ່ມນີ້:

| **ການຄຸ້ມກັນ** | **ມູນຄ່າຄໍ້າປະກັນ (ເປັນເງິນກີບ)** |
|---|---|
| | **ແບບບັງຄັບ** |
| **ຄວາມເສຍຫາຍທາງດ້ານຮ່າງກາຍ (ສູງສຸດ ຕໍ່ ອຸປະຕິເຫດ)** | 101,400,000 |
| ເສຍຊີວິດ ຫຼື ພິການຖາວອນ (ສູງສຸດ ຕໍ່ ຄົນ) | 12,000,000 |
| ຄ່າປິ່ນປົວ (ສູງສຸດ ຕໍ່ ຄົນ) | 1,800,000 |
| (ລວມ ຄ່າອອກໂຮງໝໍເຊິ່ງຕ້ອງໄດ້ຮັບການປິ່ນປົວ ເກີນ 24 ຊົ່ວໂມງ) | 100,000 |
| ຄວາມເສຍຫາຍທາງດ້ານວັດຖຸ (ສູງສຸດ ຕໍ່ ອຸປະຕິເຫດ) | 5,200,000 |

ໝາຍເຫດ:

1. ເອກະສານຊ້ອນທ້າຍ 4 ແມ່ນຖືກດັດແກ້ຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນເລກທີ່ 0772/ກງ, ລົງວັນທີ່ 24/04/2009 ເຊິ່ງປ່ຽນແທນຕາຕະລາງຄັ້ງຫຼ້າສຸດທີ່ມີການຄຸ້ມກັນແບບດຽວກັນ.
2. ຕາລາງຄຸ້ມກັນຂ້າງເທິງແມ່ນອີງຕາມຂໍ້ກຳນົດທາງກົດໝາຍ, ແຕ່ການຄຸ້ມກັນທາງເລືອກອື່ນໆ ແມ່ນອີງຕາມເງື່ອນໄຂເພາະຂອງການປະກັນໄພ
3. ການຊໍາລະຄ່າປະກັນໄພ ຕາມມູນຄ່າໃນໃບເກັບເງິນ ໝາຍເຖິງທ່ານໄດ້ຍອມຮັບເງື່ອນໄຂສະເພາະແລະ ເງື່ອນໄຂທົ່ວໄປຂອງສັນຍາປະກັນໄພ.

ໝາຍເຫດ : ການຊໍາລະຄ່າປະກັນໄພຕາມມູນຄ່າໃນໃບເກັບເງິນນີ້ ໝາຍເຖິງທ່ານໄດ້ຍອມຮັບເງື່ອນໄຂສະເພາະ ແລະ ເງື່ອນໄຂທົ່ວໄປຂອງສັນຍາຂອງປະກັນໄພ.



ທີ່ຢູ່: ໜ່ວຍ 31, ຖະໜົນ ກໍາແພງເມືອງ, ບ້ານ ທາດຫຼວງໃຕ້, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ
Unit 31, Kamphengmeuang Rd, Thatluang Tai Village, Xaysettha District, Vientiane Capital, Lao P.D.R
Tel: [+856 21] 85 5555, | Fax: [+856 21] 85 6666
Call Center: 1677 www.apa.com.la E-mail: info@apa.com.la